# CHAMPA 占芭 ຈຳປາ

11/2015 ສະບັບທີ 122



## ທົວທັດຕາມກຳແພງເມືອງຈີນ
## ດ່ານເຂົ້າອອກເມືອງສະໜາມບິນສາກົນນະຄອນຫຼວງປັກກິ່ງ
## ໃຫ້ການແລກປ່ຽນວັດທະນະທຳຜູກເປັນສາຍສຳພັນມິດຕະພາບ

ISSN 1673-3266
11
9 771673 326056

Value Related To History
Creation Leading To Future

心以致遠
行于維新




ເກີດມາຈາກປີ 1912

ນ້ຳໃຈກວ້າງຂວາງສູງສົ່ງ
ມຸ່ງໝັ້ນການປ່ຽນແປງໃໝ່

富滇銀行
FUDIAN BANK
ທະນາຄານຟູດຽນ
www.fudian-bank.com 网上银行 www.087196533.com 手机银行 0871—96533 24小时服务热线
ທະນາຄານອິນເຕີເນັດ ທະນາຄານໂທລະສັບມືຖື ສາຍດ່ວນບໍລິການ 24 ຊົ່ວໂມງ






Muangthong Hotel
With a boutique feel, Muangthong hotel is impressive complex of 4, two storey buildings, built around a central courtyard and swimming pool. The building with large wooden pillars are of modern Lao design with a French colonial flavor and traditional Lao roofs, with 09 premier and 24 delux rooms.

Room Facility:
Free wifi, coffee/tea facility, room amenity, mini bar, LCD TV, safety box.

Location:
Muangthong hotel is located at Ban Thatluang, Luangprabang District, just 5-10 minutes to night market by walk or city center and 10 minutes from airport by car.

ໂຮງແຮມເມືອງທອງ
Muangthong Hotel

For more information or reservation, please visit our website:
www.muangthonglpb.com
Tel: +856-71-254976; Fax: +856-71-252974
Email: reservation@muangthonglpb.com,
mthotel@laoairlines.com
Or please contact the nearest Lao Airlines offices.

Muangthong Hotel
Ban Thatluang, ouparathKhambua Road
Luangprabang, Lao PDR

本公司位于老挝万象安居建材市场内。是集彩钢瓦、复合板、消声卷帘门、钢结构、活动板房制作安装于一体的专业生产、批发、零售企业。公司拥有全自动化复合板、彩钢瓦机器生产线，可以满足客户的个性化设计要求。设计，定做安全头盔等其他各种泡沫包装制品。本公司坚持诚信经营、质量第一的经营理念，努力将自身打造成老挝境内的行业标杆企业。

公司地址：老挝万象市13号公路5公里处万象安居建材市场内

ບໍລິສັດເຮືອນແປ້ນເຄື່ອນທີ່ເຫຼັກສີຫວັນເຈຍລາວ

ບໍລິສັດຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີລາວ,ເປັນວິສາຫະກິດສະເພາະຕິວໃນການຜະລິດ,ຂາຍສົ່ງ,ຂາຍຍ້ອຍເຊິ່ງເຕົ້າໂຮມກະເບື້ອງເຫຼັກ: ໄມ້ອັດ,ປະຕູມ້ວນທີ່ຜ່ອນສຽງ,ໂຄງປະກອບເຫຼັກ,ຜະລິດເຮືອນແປ້ນເຄື່ອນທີ່ແລະຕິດຕັ້ງເປັນອັນໜຶ່ງອັນດຽວ.ບໍລິສັດໄດ້ມີສາຍການຜະລິດໄມ້ອັດ,ກະເບື້ອງເຫຼັກສີດ້ວຍກົນຈັກໂອໂຕມະຕິກ,ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການອອກແບບບຸກຄະລິກຂອງລູກຄ້າໄດ້.ການອອກແບບສັ່ງຈອງໝວກເຫຼັກນິລະໄພ ແລະ ຜະລິດຕະພັນຫຸ້ມຫໍ່ດ້ວຍສະໂນທຸກຊະນິດບໍລິສັດຍຶດຖືຈິດສຳນຶກດຳເນີນທຸລະກິດໄວ້ເນື້ອເຊື່ອໃຈ,ຄຸນນະພາບເປັນອັນດັບທີໜຶ່ງ,ພະຍາຍາມປະດິດສ້າງຕົນເອງກາຍເປັນວິສາຫະກິດແບບຢ່າງພາຍໃນດິນລາວ.

ສະຖານທີ່ຂອງບໍລິສັດ: ຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີວຽງຈັນຫຼັກ 5 ທາງເລກ 13 ນະຄອນຫຼວງວຽງຈັນ

ວັນເຈຍສັງກະສີ-ແຜ່ນສັງກະສີອັດຟອງສະໂນ ຂາຍສົ່ງ ແລະ ຂາຍຍ່ອຍ ແຜ່ນສັງກະສີ ແຜ່ນສັດໂຟມ ປະຕູມ້ອນ ເກັບສຽງຮັບຕິດຕັ້ງ ໂຄງຫລັງຄາ ຫ້ອງເຄື່ອນຍ້າຍໄດ້ຜະລິດ ແລະ ຕິດຕັ້ງນິຍຸເຈຍ

## 老挝万杰彩钢
## 活动板房有限公司



















Tel： 021 720509 ； 020 54606278 （chinese ） 020 55557178 （ Lao ）
Mob： 0086 13758972039 （China

ໂຮງແຮມເມືອງທອງ
Muangthong Hotel



孟通酒店
孟通酒店充满精致的氛围。酒店拥有令人印象深刻的四要素。酒店是一个两层楼的建筑，围绕一个中心庭院建成，还拥有一个游泳池。酒店的大型木头立柱充满法国气息的老挝现代设计，屋顶则是老挝传统风格。酒店拥有9间高级房间和24间豪华房。
房间设施：免费wifi 泡茶/咖啡的用具 迷你吧 液晶电视 保险箱

旅游琅勃拉邦便捷舒适
自2014年7月1日至9月30日止到琅勃拉邦旅游的客人可乘飞机由
万象-琅勃拉邦-万象,总价为1.460.000吉普：巴色-琅勃拉邦-巴色总价为1.700.000吉普，
可享受：1.机票内含税费 2.免费住孟通酒店2晚上
3.免费早餐 4.可以在酒店办登机手续和出机票 5.可用车接送
琅勃拉邦机场到酒店。




www.muangthonglpb.com

ການບິນລາວ Lao Airlines

ຈຳປາໂຮລິເດ Champa Holidays

# 云南建工集团有限公司

# ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ



云南建工集团有限公司是在云南建工集团总公司基础上，于2009年11月6日改制而成。目前，集团已发展成为集工程总承包、房地产开发、城市建设投资开发、建筑工程施工、机电设备安装、商品混凝土生产、路桥市政工程施工、钢结构工程施工、水利水电工程施工、地基工程施工、建材与设备供销、建筑科研、勘察设计、建筑劳务于一体的多层次大型企业集团；是云南省政府国资委履行出资人职责的20户省管企业和15户省属重要骨干企业之一。集团现有全资子公司、控股公司和直管企事业单位31个；现有在职职工16000人，各类专业技术人员7797人，其中具有高级职称的751人。

近年来，集团努力进行结构调整，千方百计拓展市场，综合实力显著增强，为云南的经济建设和社会发展做出了显著贡献。2013年完成总产值434.23亿元，完成竣工面积828.1万平方米。科技水平显著提高，国际市场的开拓能力不断增强。截至2013年12月，集团累计获得全国建筑工程鲁班奖22项，国家优质工程银质奖32项，詹天佑土木工程大奖提名奖1项，全国用户满意工程13项，全国和省级以上科技进步奖400多项，获部省级优质工程奖390项，连续9次入选中国承包商60强。截至2013年9月，集团公司连续22次入选中国企业500强。集团先后在也门、南非、泰国、老挝、乌干达、伊拉克、马尔代夫、毛里求斯、赤道几内亚、柬埔寨等国家承接各类工程，并荣获老挝政府颁发的“发展勋章”、“劳动勋章”等荣誉。2010年至2013年，集团公司连续四年进入美国《工程新闻记录》（ENR）杂志全球最大225家国际承包商排行榜，创造了良好的国际声誉。集团以高效、优质的服务和重合同、守信用的严谨作风，赢得了广大客户、行业主管部门、金融机构的充分信赖，连年被评为AA级企业，享有较高的商誉，“云南建工”品牌已经成为中国国内建筑业界的知名品牌。

在实现较快发展的基础上，集团全力加快战略转型的步伐，加快企业的股份制改造，将集团进一步发展成拥有设计、科研、施工、咨询、投融资建设一体化发展能力的核心竞争力更强的现代大型建筑企业集团和中国西部一流建工集团。

ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດແມ່ນບໍລິສັດທີ່ປ່ຽນແປງມາຈາກພື້ນຖານບໍລິສັດແມ່ວິສະວະກຳກໍ່ສ້າງຢຸນນານໃນວັນທີ 6 ພະຈິກ 2009.ປັດຈຸບັນນີ້,ບໍລິສັດໄດ້ພັດທະນາກາຍເປັນກຸ່ມວິສາຫະກິດຂະໜາດໃຫຍ່ທີ່ມີຫຼາຍຊັ້ນລະດັບເຊິ່ງເຕົ້າໂຮມການຮັບເໝົາລວມເອົາທາງດ້ານວິສະວະກຳ,ພັດທະນາເຄຫາສະຖານທີ່ດິນ,ພັດທະນາການລົງທຶນສ້າງສາຕົວເມືອງ,ການກໍ່ສ້າງວິສະວະກຳ,ການຕິດຕັ້ງເຄື່ອງອຸປະກອນກົນຈັກໄຟຟ້າ,ການຜະລິດທຸລະກິດເບຕົງ,ກໍ່ສ້າງຂົວທາງຜັງເມືອງ,ກໍ່ສ້າງວິສະວະກຳໂຄງປະກອບເຫຼັກ,ກໍ່ສ້າງຊົນລະປະທານ ແລະ ເຂື່ອນໄຟຟ້ານ້ຳຕົກ,ກໍ່ສ້າງວິສະວະກຳພື້ນຖານ,ການສະໜອງ ແລະ ຈຳໜ່າຍວັດສະດຸກໍ່ສ້າງ ແລະ ເຄື່ອງອຸປະກອນ,ການຄົ້ນຄວ້າສະຖາປັດຕະຍະກຳ,ການສຳຫຼວດອອກແບບ,ການກໍ່ສ້າງ ແລະ ແຮງງານ ແລະ ອື່ນໆເປັນອັນໜຶ່ງອັນດຽວກັນ; ແມ່ນ 1 ໃນວິສາຫະກິດຫລັກແຫຼ່ງທີ່ສຳຄັນ 15 ແຫ່ງຂຶ້ນກັບແຂວງ ແລະ 20 ແຫ່ງສັງກັດແຂວງຄຸ້ມຄອງເຊິ່ງແມ່ນຄະນະກຳມະການຄຸ້ມຄອງຊັບສິນຂອງລັດປະຕິບັດພາລະໜ້າທີ່ຂອງຜູ້ອອກທຶນ.ປັດຈຸບັນນີ້,ກຸ່ມບໍລິສັດມີບໍລິສັດລູກທີ່ມີທຶນທັງໝົດ,ບໍລິສັດຖືຫຸ້ນ,ແລະ ຫົວໜ່ວຍວິສາຫະກິດຄຸ້ມຄອງໂດຍກົງ 31 ບໍລິສັດ.ມີພະນັກງານພະລາກອນ 16,000 ກວ່າຄົນ,ມີພະນັກງານວິຊາການປະເພດຕ່າງໆ 7797 ຄົນ,ໃນນັ້ນ,ຜູ້ທີ່ມີຕຳແໜ່ງຊັ້ນສູງ 751 ຄົນ.

ຫວ່າງປີມໍ່ໆມານີ້,ກຸ່ມບໍລິສັດພະຍາຍາມດຳເນີນການປັບປຸງໂຄງປະກອບ,ຂະຫຍາຍຕະຫລາດໃຫ້ກວ້າງອອກດ້ວຍທຸກວິທີ,ກຳລັງສັງລວມຂອງກຸ່ມບໍລິສັດໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ.ໄດ້ປະກອບສວນອັນພົ້ນເດັ່ນເຂົ້າໃນການສ້າງສາເສດຖະກິດ ແລະ ການພັດທະນາສັງຄົມຂອງແຂວງຢຸນນານ.ໃນປີ 2013,ໄດ້ສຳເລັດຍອດມູນຄ່າການຜະລິດ 43,423 ຕື້ຢວນຈີນ,ເນື້ອທີ່ກໍ່ສ້າງໄດ້ປະຕິບັດສຳເລັດ 828,1 ໝື່ນຕາແມັດ.ລະດັບວິທະຍາສາດເຕັກໂນໂລຊີໄດ້ຍົກສູງຂຶ້ນຢ່າງຊັດເຈນ,ຄວາມສາມາດບຸກເບີກຕະຫລາດສາກົນໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ.ຈົນເຖິງເດືອນທັນວາປີ 2013,ກຸ່ມບໍລິສັດລວມໄດ້ຮັບລາງວັນລູປານວິສະວະກຳກໍ່ສ້າງທົ່ວປະເທດ 22 ລາຍການ,ລາງວັນເງິນວິສະວະກຳດີເລີດແຫ່ງຊາດ 32 ລາຍການ,ມະຫາລາງວັນສະຖາປັດຕະຍະກຳດ້ານດິນ ແລະ ໄມ້ຈັນທຽນຢຽວສະເໜີລາຍຊື່ 1 ລາຍ,ວິສະວະກຳທີ່ລູກຄ້າທົ່ວປະເທດເພິ່ງພໍໃຈ 13 ລາຍ,ລາງວັນກ້າວໜ້າດ້ານວິທະຍາສາດເຕັກໂນໂລຊີທົ່ວປະເທດ ແລະ ຂັ້ນແຂວງຂຶ້ນໄປ 400 ກວ່າລາຍ,ໄດ້ຮັບລາງວັນວິສະວະກຳດີເລີດຂັ້ນແຂວງ 390 ລາຍ,ໄດ້ຖືກຄັດເລືອກເຂົ້າໃນຖັນແຖວນັກທຸລະກິດຮັບເໝົາ 60 ແຂງແກ່ນຂອງຈີນລຽນຕິດ 9 ເທື່ອ,ຈົນເຖິງເດືອນກັນຍາ 2013,ກຸ່ມບໍລິສັດໄດ້ຖືກເລືອກເຂົ້າສູ່ຖັນແຖວ 500 ວິສາຫະກິດແຂງແກ່ນຂອງຈີນລຽນຕິດ 22 ເທື່ອ.ກຸ່ມບໍລິສັດໄດ້ຮັບເໝົາໂຄງການປະເພດຕ່າງໆຢູ່ຕ່າງປະເທດເຊັ່ນ:ເຢແມນ,ອະຟຼິກກາໃຕ້,ໄທ,ລາວ,ອູການດາ,ອີລັກ,ມານໄດຟ໌,ໂມຣິດ,ກີເນເອກົວເຕີ,ກຳປູເຈຍ ແລະ ປະເທດອື່ນໆ,ໄດ້ຮັບກຽດຕິຍົດຈາກລັດຖະບານລາວໂດຍການປະດັບຫລຽນໄຊພັດທະນາ,ຫຼຽນໄຊແຮງງານໃຫ້ແກ່ກຸ່ມບໍລິສັດ.ໃນປີ 2010-2013,ກຸ່ມບໍລິສັດໄດ້ຖືກຈັດເຂົ້າໃນສາລະບານນັກທຸລະກິດຮັບເໝົາກໍ່ສ້າງສາກົນ 225 ບໍລິສັດທີ່ໃຫຍ່ສຸດໃນໂລກຂອງວາລະສານ ENR ບັນທຶກຂ່າວວິສະວະກຳຂອງອາເມລິກາ,ໄດ້ສ້າງຊື່ສຽງສາກົນທີ່ດີເດັ່ນ.ກຸ່ມບໍລິສັດຖືເອົາການບໍລິການທີ່ມີປະສິດທິພາບສູງ ແລະ ມີຄຸນນະພາບດີເລີດ ແລະ ທ່ວງທ່າທຳນອງທີ່ເຂັ້ມງວດໃນການນັບຖືສັນຍາ,ປະຕິບັດຕາມຄຳໝັ້ນສັນຍາ,ໄດ້ຮັບຄວາມເຊື່ອໃຈຢ່າງເຕັມທີ່ຈາກລູກຄ້າອັນກວ້າງໃຫຍ່ໄພສານ,ກົມກອງຄຸ້ມຄອງຂະແໜງການວິສາຫະກິດ,ວົງການການເງິນ,ໄດ້ຮັບການຕີລາຄາເປັນວິສາຫະກິດຂັ້ນ AA ຫລາຍປີລຽນຕິດ,ໄດ້ຮັບນາມມະຍົດຂັ້ນສູງ.“ຍີ່ຫໍ້ດັງວິສະວະກຳກໍ່ສ້າງຢຸນນານ”ໄດ້ກາຍເປັນ“ຍີ່ຫໍ້ດັງທີ່ມີຊື່ສຽງ”ໃນວົງການວິສະວະກຳກໍ່ສ້າງພາຍໃນປະເທດ.

ບົນພື້ນຖານແຫ່ງການພັດທະນາຕົວຈິງທີ່ໄວສົມຄວນນັ້ນ,ກຸ່ມບໍລິສັດໄດ້ອອກແຮງເລັ່ງລັດບາດກ້າວຫັນປ່ຽນທາງດ້ານຍຸດທະສາດ,ເລັ່ງລັດການປັບປຸງລະບົບຫຸ້ນສ່ວນຂອງວິສາຫະກິດ,ຈະພັດທະນາກຸ່ມບໍລິສັດໃຫ້ກາຍເປັນກຸ່ມບໍລິສັດກໍ່ສ້າງແຖວໜ້າໃນພາກຕາເວັນຕົກຂອງຈີນ ແລະ ເປັນກຸ່ມວິສາຫະກິດວິສະວະກຳກໍ່ສ້າງທັນສະໄໝຂະໜາດໃຫຍ່ທີ່ມີແກນກາງແຫ່ງຄວາມສາມາດແກ່ງແຍ້ງທີ່ຍິ່ງເຂັ້ມແຂງກວ່າເກົ່າໃນດ້ານການລະດົມທຶນກໍ່ສ້າງເປັນອັນໜຶ່ງອັນດຽວກັນ,ກາຍເປັນທີ່ປຶກສາ,ການກໍ່ສ້າງ,ການຄົ້ນຄ້ວາວິທະຍາສາດ ແລະ ການອອກແບບ.



ພາບວິວທິວທັດທີ່ສວຍງາມລະດູໃບໄມ້ຫຼົ່ນ ກຳແພງເມືອງປາຕາລິນ
八达岭长城秋日美景　CFP 图



# ສາລະບານ

11/2015　ສະບັບທີ 122










## ສາລະຄະດີພິເສດ 本刊特稿

08.ປະເທດຈີນທີ່ປະຕິຮູບ ແລະ ເປີດປະຕູສູ່ພາຍນອກຈະເປີດອົກເປີດໃຈຕໍ່ທົ່ວໂລກຕະຫລອດການະບານ

## ຄວາມໃຝ່ຝັນຂອງຈີນ 中国梦

12.ດ່ານເຂົ້າອອກເມືອງສະໜາມບິນສາກົນນະຄອນຫຼວງປັກກິ່ງ

## ໜຶ່ງແລວທາງ ໜຶ່ງເສັ້ນທາງ "一带一路"

14.ການຮ່ວມມື "ໜຶ່ງແລວທາງ ໜຶ່ງເສັ້ນທາງ "ໄດ້ຮັບໝາກຜົນການຮ່ວມມືເກີນຄາດໝາຍ

## ປະຕູເມືອງຈີນ 中国之窗

18.ເຄືອຂ່າຍເຊື່ອມຕໍ່ກັນ＋ຊ່ວຍຊູກະສິກຳຂຶ້ນສູ່"ລະດັບສູງ,ມະຫາສານ,ຂຶ້ນຊັ້ນລະດັບ"

22.ແຜດພື້ນເມືອງຈີນກ້າວສູ່ພາຍນອກ ຊາວຈີນຕ່າງດ້າວແມ່ນຂາດບໍ່ໄດ້

## ການໄປມາຫາສູ່ກັນສັນຖະວະໄມຕີຈິດ 友好往来

26. ບໍລິສັດຈີນຊ່ວຍເຫຼືອປະຊາຊົນລາວເຂດພູດອຍພົ້ນອອກຈາກຄວາມທຸກຍາກ

30.ໃຫ້ການແລກປ່ຽນວັດທະນະທຳຜູກເປັນສາຍສຳພັນມິດຕະພາບ

## ລວມຈຸດຢູນນານ 聚焦云南

34.ແຂວງຢູນນານສ້າງ "ນາມບັດ "ດ້ານກະສິກຳສີສັນພິເສດພູພຽງຕໍ່ໂລກ

## ວິສະວະກຳກໍ່ສ້າງຢູນນານ 云南建工

40. ເພື່ອເປັນຜູ້ນຳໜ້າຍຸດທະສາດຂອງວິສາຫະກິດທີ່ "ກ້າວສູ່ໂລກພາຍນອກ"

## ການທ່ອງທ່ຽວທົ່ວສະມາຈອນ 旅游纵横

46.ທິວທັດຕາມກຳແພງເມືອງຈີນ

## ໂຮງຮຽນຊື່ດັງທີ່ມີສະເໜ່ 魅力名校

50.ມະຫາວິທະຍາໄລນົດຕິງຮາມນິງໂປ່

## ປະຊາຊາດຈີນ 中华民族

52.ຕ່າວລາງ: ເຜົ່າຊົນທີ່ເລິກລັບທີ່ສຸດຂອງຈີນ

## ບໍລິການເພື່ອທ່ານ 为您服务

54.ນວດດ້ວຍນ້ຳມັນຫອມຮ້ອນອົບອ້າວຈະງາມຂຶ້ນໂດຍງ່າຍໆ

## ຮຽນພາສາຈີນ 学汉语

56.ຮຽນພາສາຈີນ



发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D
地址：云南省昆明市环城西路577号
编辑部电话：86–871–64112975
办公室电话：86–871–64101644
传真：86–871–64112975
邮编：650034
邮箱：ynzhanba@163.com

《占芭》杂志社驻老挝代表处：
地址：万象市苏发努冯路湄公酒店二栋2211 室
电话：00856–21–254866

广告经营许可证号：5300004000052
印刷：昆明富新春彩色印务有限公司

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673–3266
ລະຫັດວາລະສານປະເທດຈີນ: CN53–1200/D
ສະຖານທີ່: ຖະໜົນຫວນເຊີນຊີລູເຮືອນເລກທີ 577
ລະຫັດໄປສະນີ: 650034
ໂທ: 86–871–64112975　64101644
ແຟກ: 86–871–64112975
Email:ynzhanba@163.com

ຫ້ອງການຕາງໜ້າສຳນັກພິມວາລະສານ 《ຈຳປາ》 ສປ ຈີນປະຈຳນະຄອນຫຼວງວຽງຈັນ ສປປ ລາວ
ທີ່ ຢູ່:ຫ້ອງ 2211 ຕຶກທີ 2 ໂຮງແຮມແມ່ຂອງ ຖະໜົນສຸພານຸວົງ ນະຄອນຫຼວງວຽງຈັນ
ເບີໂທ: 00856-21-254866

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

RMB ¥10

主　　管　中华人民共和国国务院新闻办公室
主　　办　云南省人民政府新闻办公室
协　　办　云南建工集团有限公司
编辑出版　《占芭》杂志社
总 顾 问　赵　金　卯稳国
顾　　问　张红平　宣宇才　蔡春生
　　　　　张瑞才　李联斌　刘　荣
社　　长　李　茜
副 社 长　吴静波　田虎青　海　江
总 编 辑　杨　云
总编室主任　禹正玉
总编室副主任　汪伟云
编辑总监　王志谦
编辑部副主任　苏雯雯　中文编辑　张　蕾
翻　　译　北京外国语大学亚非学院
　　　　　李小元　吴敦信　刘仁和
老挝文译审　刘仁和
老挝文编辑　白　艳
美术总监　祝　群
网络总监　张守义
总监助理　张俊宏
网络部副主任　李　涛
编　　辑　李文君　李沁颖　韩佐伊
发行部主任　邹和平
发　　行　陈　龙
编　　务　陆　蕊　何如兰

ເຈົ້າໜ້າທີ່ຄຸ້ມຄອງໂດຍ ຫ້ອງການຂ່າວຄະນະລັດຖະບານ ສປ ຈີນ
ຈັດທຳໂດຍ ຫ້ອງການຂ່າວປົກຄອງແຂວງຢຸນນານ
ອົງການປະສານງານ ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ
ຮຽບຮຽງພິມຈຳໜ່າຍ ສຳນັກພິມວາລະສານ 《ຈຳປາ》
ທີ່ປຶກສາໃຫຍ່ ຈາວຈິນ ເມົາເວີນກົວ
ທີ່ປຶກສາ ຈ່າງຫົງພິງ ຊຽນຢູຍໄຊ ໄຊຊຸນແຊງ
ຈ່າງຢຸ້ຍໄຊ ລີລຽນປິ່ນ ລິວຢົງ
ຜູ້ອຳນວຍການໃຫຍ່ ລີສ້ຽນ
ຮອງຜູ້ອຳນວຍການໃຫຍ່ ອູຈິນໂປ ທຽນຫູຊິນ ໄຮຈຽງ
ຫົວໜ້າບັນນາທິການໃຫຍ່ ຢາງຢູນ
ຫົວໜ້າພິມຈຳໜ່າຍ ຢູຍເຈີງຢູຍ
ຮອງຫົວໜ້າພິມຈຳໜ່າຍ ຫວ່າງເວີຍຢູນ
ຫົວໜ້າບັນນາທິການ ຫວາງຈື້ຊ່ຽນ
ຮອງຫົວໜ້າພະແນກບັນນາທິການ ຊູ່ເວີນເວີນ　ບັນນາທິການພາສາຈີນ ຈາງລຸຍ
ຜູ້ແປພາສາລາວ ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ
ຫຼີຊຽວຢວນ ອຸດົນສິນ ລິວເຢີນເຫີ
ຜູ້ກວດແກ້ພາສາລາວ ລິວເຢີນເຫີ
ບັນນາທິການພາສາລາວ ປາຍຍຽນ
ຜູ້ຄຸມງານຝ່າຍສິລະປະ ຈູ້ສິນ
ຜູ້ຄຸມງານຝ່າຍອິນເຕີເນັດ ຈາງເຊີຢີ　ຜູ້ຊ່ວຍຜູ້ຄຸມງານ ຈາງຈຸນຮອງ
ຮອງຫົວໜ້າພະແນກອິນເຕີເນັດ ລີທາວ　ບັນນາທິການ ລີເວີນຈູນ ລີຊີ່ງຢີງ ຮານໂຈ່ວຢີ
ຫົວໜ້າພະແນກແຈກຈ່າຍ ໂຈວເຮີພິງ
ພິມຈຳໜ່າຍແຈກຈ່າຍ ແຊງລົງ
ພະນັກງານຝ່າຍປົກຄອງ ລູຢູຍ　ເຫຼຢູລານ

图 / 新华社

# ປະເທດຈີນທີ່ປະຕິຮູບ ແລະ ເປີດປະຕູສູ່ພາຍນອກ ຈະເປີດອົກເປີດໃຈຕໍ່ທົ່ວໂລກຕະຫລອດການະນານ

## 改革开放的中国永远向世界敞开怀抱

“中国发展的根本出路在于改革”“中国开放的大门永远不会关上”“中国对外开放的力度将会越来越大”。在美国进行国事访问的中国国家主席习近平，一再向世界宣示中国坚持改革开放不动摇的坚定决心。作为世界第二大经济体和全球经济增长的重要动力源，改革不停顿、开放不止步的中国，受到世界广泛关注，不断向世界经济复苏注入来自东方的信心与动力。

“ທາງອອກພື້ນຖານສຳລັບການພັດທະນາຂອງຈີນຢູ່ນຳການປະຕິຮູບ” “ປະຕູໃຫຍ່ທີ່ປະເທດຈີນເປີດກວ້າງສູ່ພາຍນອກຈະບໍ່ປິດຕະຫຼອດການະນານ”“ຈີນຈະເປີດປະຕູສູ່ພາຍນອກຢ່າງມີຄວາມເຂັ້ມແຂງນັບມື້ນັບຫຼາຍຂຶ້ນ”. ທ່ານປະທານ ສີຈິ້ນຜິງ ທີ່ພວມຢ້ຽມຢາມທາງລັດຖະກິດທີ່ອາເມລິກາ,ໄດ້ສະແດງໃຫ້ເຫັນຄວາມຕັດສິນໃຈອັນເດັດດ່ຽວຂອງຈີນທີ່ຈະຍຶດໝັ້ນການປະຕິຮູບ ແລະ ເປີດປະຕູສູ່ພາຍນອກຢ່າງບໍ່ຫວັ່ນໄຫວຄອນແຄນຕໍ່ຊາວໂລກ.ໃນຖານະທີ່ເປັນອົງກອນເສດຖະກິດໃຫຍ່ອັນດັບ 2 ຂອງໂລກ ແລະ ກຳລັງແຮງອັນສຳຄັນທີ່ຊຸກຍູ້ການເຕີບໂຕຂອງເສດຖະກິດໂລກ,ປະເທດຈີນທີ່ບໍ່ໄດ້ຢຸດບາດກ້າວແຫ່ງການປະຕິຮູບ ແລະ ເປີດປະຕູສູ່ພາຍນອກນັ້ນ,ໄດ້ຮັບຄວາມສົນໃຈຈາກທົ່ວໂລກ,ສ້າງຄວາມໝັ້ນໃຈ ແລະ ພະລັງແຮງທີ່ເພີ່ມຂຶ້ນເລື້ອຍໆເຂົ້າສູ່ການຟື້ນຟູເສດຖະກິດຂອງໂລກ.



ວັນທີ 26 ເດືອນ 8,ເຂດເສດຖະກິດພິເສດເຊິນເຈິນຂອງຈີນໄດ້ຍິນດີຕ້ອນຮັບວັນເກີດຄົບຮອບ 35 ປີ

8 月 26 日，中国经济特区深圳迎来了 35 岁生日

ການເຕີບໂຕທີ່ວ່ອງໄວ,ການປ່ຽນແປງອັນໃຫຍ່ຫຼວງ, ແລະ ພະລັງຊີວິດຊີວາທີ່ເຂັ້ມແຂງໃນການພັດທະນາຂອງຈີນ,ໄດ້ສະເທືອນໃຈທົ່ວໂລກ.ໃນ 30 ກວ່າປີນັບແຕ່ຈີນດຳເນີນການປະຕິຮູບ ແລະ ເປີດປະຕູສູ່ພາຍນອກເປັນຕົ້ນມາ,ຈາກການຈັດຕັ້ງປະຕິບັດລະບອບຮັບເໝົາຂອງຄອບຄົວ,ຮອດການກໍ່ສ້າງ “ເຂດເສດຖະກິດພິເສດ” ທີ່ເປີດປະຕູສູ່ພາຍນອກ,ຈາກການເປີດກວ້າງຂອບເຂດທີ່ເປີດປະຕູສູ່ພາຍນອກຢູ່ເຂດແຄມທະເລພາກຕາເວັນອອກຂອງຈີນ,ຮອດພາກກາງ ແລະ ພາກຕາເວັນຕົກຂອງຈີນທີ່ມີເນື້ອທີ່ອັນກວ້າງຂວາງນັ້ນເຊື່ອມໂຍງເຂົ້າສູ່ເສດຖະກິດຕະຫຼາດເທື່ອລະກ້າວ,ການປະຕິຮູບ ແລະ ການເປີດປະຕູສູ່ພາຍນອກເໝືອນກັບສອງປີກຂອງນົກ, ພາໃຫ້ເກີດມີກະແສລົມແຮງ,ຊຸກຍູ້ໃຫ້ເສດຖະກິດຈີນເຂົ້າສູ່ວົງໂຄຈອນທີ່ເຕີບໂຕຢ່າງໄວວາ.

ໃນເວລາທີ່ນັກທ່ອງທ່ຽວຈີນໄປທ່ອງທ່ຽວ ແລະ ຈັດຊື້ສິນຄ້າຢູ່ຕ່າງປະເທດຫຼາຍກວ່າ 100 ລ້ານເທື່ອຄົນຕໍ່ປີ,ຄົນຈີນນັບມື້ນັບຫຼາຍຂຶ້ນໄດ້ສຳຜັດກັບຊີວິດການເປັນຢູ່ ແລະ ວັດທະນະທຳຢູ່ແຫ່ງຕ່າງໆຂອງໂລກ,ທົ່ວໂລກກໍ່ໄດ້ຊົມໃຊ້ຜົນປະໂຫຍດດ້ານເສດຖະກິດຈາກການພັດທະນາຢ່າງວ່ອງໄວຂອງປະເທດຈີນ.ການປະຕິຮູບ ແລະ ເປີດປະຕູສູ່ພາຍນອກໄດ້ນຳເອົາການປ່ຽນແປງອັນໃຫຍ່ຫຼວງຕໍ່ຊີວິດການເປັນຢູ່ຂອງປະຊາຊົນ,ຈີນໄດ້ປະກອບສ່ວນເຂົ້າໃນການເຕີບໂຕຂອງເສດຖະກິດໂລກເຖິງ 30%, ເຊິ່ງໄດ້ສະແດງອອກມາຢ່າງພົ້ນເດັ່ນໃນການທ່ອງທ່ຽວຕາມໃຈມັກຂອງປະຊາຊົນ.ໃນ 5 ປີຂ້າງໜ້ານີ້,ຄາດວ່າຈີນຈະນຳເຂົ້າສິນຄ້າຈາກຕ່າງປະເທດທີ່ມີມູນຄ່າ 1 ໝື່ນຕື້ໂດລາ,ການລົງທຶນຕໍ່ຕ່າງປະເທດຈະຫຼາຍກວ່າ 500 ຕື້ໂດລາ,ຄົນຈີນທີ່ໄປທ່ຽວຕ່າງປະເທດຈະຫຼາຍກວ່າ 500 ລ້ານເທື່ອຄົນ.ປະເທດຈີນທີ່ເປີດປະຕູສູ່ພາຍນອກຢ່າງມີລະດັບສູງກວ່າເກົ່າ,ຈະສ້າງຕະຫຼາດທີ່ກວ້າງຂວາງກວ່າເກົ່າ ແລະ ໂອກາດພັດທະນາທີ່ດີກວ່າເກົ່າໃຫ້ແກ່ປະເທດຕ່າງໆໃນໂລກ.

“ການປະຕິຮູບ ແລະ ການເປີດປະຕູສູ່ພາຍນອກຊ່ວຍຊູຍູ້ໜູນກັນ,ການປະຕິຮູບຮຽກຮ້ອງໃຫ້ມີການເປີດປະຕູສູ່ພາຍນອກ,ການເປີດປະຕູສູ່ພາຍນອກກໍ່ຮຽກຮ້ອງໃຫ້ມີການປະຕິຮູບເຊັ່ນກັນ.” ຫຼັງຈາກຄວາມຫຼ້າຫຼັງຍ້ອນການປິດລ້ອມເປັນເວລາດົນນານ,ຈຶ່ງໄດ້ເຂົ້າໃຈກ່ຽວກັບເຫດຜົນທີ່ວ່າ “ບໍ່ມີການປະຕິຮູບ,ກໍ່ຈະບໍ່ມີກຳລັງແຮງ; ບໍ່ມີການເປີດປະຕູສູ່ພາຍນອກ,ກໍ່ຈະບໍ່ມີຄວາມກ້າວໜ້າ.” ຫັນຈາກການກໍ່ສ້າງແບບປິດປະຕູກາຍມາເປັນເປີດປະຕູເພື່ອສະແຫວງຫາການພັດທະນາ,ການປ່ຽນແປງແນວນີ້ບໍ່ພຽງແຕ່ແມ່ນເນື່ອງຈາກການສະຫຼຸບບົດຮຽນທາງ

ບອກ ແລະ ທາງລົບໃນການກໍ່ສ້າງສັງຄົມນິຍົມເທົ່ານັ້ນ, ຍັງໄດ້ສະແດງໃຫ້ເຫັນເຖິງຄວາມຮັບຮູ້ຢ່າງມີໄຫວພິບຕໍ່ການປ່ຽນແປງຂອງສະຖານະການສາກົນ,ເປັນເຈົ້າການສອດຄ່ອງກັບກະແສຄື້ນຂອງຍຸກສະໄໝ,ທັງເປັນການຕອບສະໜອງອັນຕັ້ງໜ້າຕໍ່ຄວາມປາຖະໜາຂອງປະຊາຊົນ.ການປະຕິຮູບໄດ້ສ້າງເງື່ອນໄຂທາງດ້ານລະບອບ ແລະ ກົນໄກໃຫ້ແກ່ການເປີດປະຕູສູ່ພາຍນອກ,ເລີ່ມຕົ້ນພຶດຕິກຳທີ່ນຳໃຊ້ຊັບພະຍາກອນ ແລະ ຕະຫຼາດທັງພາຍໃນ ແລະ ຕ່າງປະເທດ;ການເປີດປະຕູສູ່ພາຍນອກໄດ້ນຳເຂົ້າເຕັກນິກການຜະລິດ,ບົດຮຽນການຄຸ້ມຄອງ ແລະ ນັກວິຊາການທີ່ກ້າວໜ້າຈາກຕ່າງປະເທດ,ໃນຂະນະດຽວກັນທີ່ນຳເຂົ້າພະລັງແຮງເພີ່ມສຳລັບການພັດທະນານັ້ນ,ກໍ່ໄດ້ກາຍເປັນແຮງຊຸກຍູ້ການປະຕິຮູບ.ການປະຕິຮູບໄດ້ສ້າງເວທີດ້ານລະບອບເພື່ອຊຸກຍູ້ການພັດທະນາ,ສຳລັບວິສາຫະກິດຮ່ວມທຶນ ແລະ ວິສາຫະກິດທຶນຕ່າງປະເທດທີ່ນຳເຂົ້າສູ່ຈີນໃນການເປີດປະຕູສູ່ພາຍນອກນັ້ນກໍ່ໄດ້ສ້າງພະລັງຊີວິດຊີວາໃຫ້ແກ່ຕະຫຼາດພາຍໃນປະເທດ,ຊຸກຍູ້ໃຫ້ລະບອບແລະກົນໄກຕ່າງໆໄດ້ຮັບການປະຕິຮູບ ແລະ ການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ.ການປ່ຽນແປງອັນເລິກເຊິ່ງໃນທັງສອງດ້ານ,ຄວາມຄືບໜ້າໃນທັງສອງທິດທາງພ້ອມກັນ,ໄດ້ປາກົດເປັນສະພາບການລວມ ແລະ ທ່າອ່ຽງລວມທີ່"ຊຸກຍູ້ລົງເລິກການປະຕິຮູບດ້ວຍການເປີດກວ້າງການເປີດປະຕູສູ່ພາຍນອກ,ຊຸກຍູ້ການເປີດປະຕູສູ່ພາຍນອກດ້ວຍການລົງເລິກການປະຕິຮູບ",ສ້າງພະລັງແຮງໃໝ່,ເພີ່ມພະລັງຊີວິດຊີວາ ແລະ ເປີດກວ້າງຂອບເຂດໃໝ່ໃຫ້ແກ່ການພັດທະນາເສດຖະກິດ.

ການປະຕິຮູບເປັນຂະບວນການທີ່ຈາກງ່າຍສູ່ຍາກ, ຈາກຕື້ນສູ່ເລິກ,ການເປີດປະຕູສູ່ພາຍນອກແມ່ນຂະບວນ



ຫຼຽວເບິ່ງທ່າກຳປັ່ນກາວຊຽວເຂດການຄ້າເສລີຊຽງໄຮ
上海自贸区外高桥码头远眺





ການປະຕິຮູບ ແລະ ເປີດປະຕູສູ່ພາຍນອກໄດ້ສະໜອງກຳລັງແຮງອັນໃຫຍ່ຫຼວງແກ່ການພັດທະນາພາກຕະເວັນຕົກ.ຮູບພາບນີ້ແມ່ນສະຖານທີ່ເປີດກອງປະຊຸມເຈລະຈາອູລູມູຈີຄັ້ງທີ 18
改革开放为西部发展提供强大动力，图为第十八届乌洽会现场

ການທີ່ເປີດກວ້າງຈາກຈຸດໃດຈຸດໜຶ່ງໄປສູ່ດ້ານໃດດ້ານໜຶ່ງ,ແລ້ວເປີດກວ້າງໄປສູ່ຮອບດ້ານ,ເຊິ່ງການປະຕິຮູບ ແລະ ການເປີດປະຕູສູ່ພາຍນອກໄດ້ຮ່ວມກັນປະກອບເປັນຂະບວນການປະຫວັດສາດທີ່ຊຸກຍູ້ໃຫ້ລະບົບປົກຄອງ ແລະ ຄວາມສາມາດໃນການປົກຄອງລັດທັນເປັນທັນສະໄໝ. ການພັດທະນາແມ່ນເຫດຜົນທີ່ເຂັ້ມແຂງ.ໃນກອງປະຊຸມຄັ້ງທີ 3 ສະໄໝທີ 18 ຂອງພັກຄອມມູນິດຈີນໄດ້ວາງ 330 ກວ່າມາດຕະການ ໂດຍປິ່ນອ້ອມການລົງເລິກການປະຕິຮູບຢ່າງຮອບດ້ານ,ສຸມໃສ່ຍົກລະດັບເສດຖະກິດແບບເປີດກວ້າງ,ບັນລຸເປົ້າໝາຍທີ່ໃຊ້ການເປີດປະຕູສູ່ພາຍນອກເພື່ອຊຸກຍູ້ການປະຕິຮູບ,ການພັດທະນາ ແລະ ການປະດິດສ້າງໃໝ່,ທັງໝົດເຫຼົ່ານີ້ກໍ່ແມ່ນເພື່ອກຳແໜ້ນທ່າບຸກໃນການພັດທະນາ,ເລັ່ງລັດຫັນປ່ຽນຮູບການພັດທະນາເສດຖະກິດ, ໂດຍພາຍໃຕ້ສະພາບການທີ່ສະພາບແວດລ້ອມການເມືອງ ແລະ ເສດຖະກິດສາກົນມີການປ່ຽນແປງຢ່າງເລິກເຊິ່ງ,ການພັດທະນາຂອງເສດຖະກິດຈີນເຂົ້າສູ່ສະພາບປົກກະຕິແບບໃໝ່,ເພື່ອບັນລຸການພັດທະນາທີ່ມີຄຸນນະພາບສູງກວ່າເກົ່າ,ມີປະສິດທິຜົນທີ່ດີກວ່າເກົ່າ, ແລະ ສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນຫຼາຍກວ່າເກົ່າ.

"ພວກຂ້າພະເຈົ້າຈະປະຕິບັດຕາມຍຸດທະສາດເປີດປະຕູສູ່ພາຍນອກທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດຢ່າງເດັດດ່ຽວໜຽວແໜ້ນ,ສືບຕໍ່ຍາດແຍ່ງໂອກາດດ້ານການພັດທະນາຈາກໂລກ,ກໍ່ເຮັດໃຫ້ການພັດທະນາຂອງຈີນສ້າງຜົນປະໂຫຍດຫຼາຍກວ່າເກົ່າຕໍ່ໂລກ." ນີ້ຄືຄຳໝັ້ນສັນຍາອັນເຄັ່ງຂຶມຕໍ່ອະນາຄົດ,ກໍ່ເປັນການກະທຳຕົວຈິງທີ່ກຳລັງຊຸກຍູ້ກ້າວໄປຂ້າງໜ້າ.ການຊຸກຍູ້ພາລະກິດປະຕິຮູບ ແລະ ເປີດປະຕູສູ່ພາຍນອກທີ່ຍິ່ງໃຫຍ່,ປະເທດຈີນທີ່ພັດທະນາຢ່າງວ່ອງໄວຮ່ວມມືກັບໂລກ,ແນ່ນອນແລ້ວຈະສ້າງອະນາຄົດທີ່ດີງາມກວ່າເກົ່າ.

文 / 楚 然　　图 / 新华社

# ດ່ານເຂົ້າອອກເມືອງສະໜາມບິນສາກົນນະຄອນຫຼວງປັກກິ່ງ



ຜູ້ໂດຍສານກຳລັງສອບຖາມກ່ຽວກັບນະໂຍບາຍຄືນພາສີພາຍຫລັງໄປຕ່າງປະເທດກັບມາທີ່ປ່ອງຄືນພາສີຢູ່ເຂດຂາອອກອາຄານໂດຍສານ T2 ເດີ່ນບິນສາກົນນະຄອນຫຼວງປັກກິ່ງ
旅客在位于北京首都国际机场 T2 航站楼国际出发区离境退税柜台咨询退税政策

## 北京首都国际机场空港口岸

北京首都国际机场，位于中国北京市顺义区，是中国最繁忙的国际空港。北京首都国际机场不但是中国首都北京的空中门户和对外交往的窗口，而且是中国民航最重要的航空枢纽，是中国民用航空网络的辐射中心。

ສະໜາມບິນສາກົນນະຄອນຫຼວງປັກກິ່ງຕັ້ງຢູ່ເຂດຊຸ້ນອີ້ນະຄອນຫຼວງປັກກິ່ງຂອງຈີນ,ເປັນສະໜາມບິນສາກົນທີ່ປະຕິບັດໜ້າທີ່ວຽກງານຫຼາຍທີ່ສຸດຂອງຈີນ.ສະໜາມບິນສາກົນນະຄອນຫຼວງປັກກິ່ງບໍ່ພຽງແຕ່ແມ່ນປະຕູທາງອາກາດຂອງປັກກິ່ງ ແລະ ປ່ອງຢ້ຽມທີ່ແລກປ່ຽນກັບພາຍນອກເທົ່ານັ້ນ,ຍັງເປັນຂຸມທາງການບິນທີ່ສຳຄັນທີ່ສຸດໃນການບິນພົນລະເຮືອນຂອງຈີນ,ເປັນໃຈກາງຂອງເຄືອຂ່າຍການບິນພົນລະເຮືອນຈີນ.

ສະໜາມບິນສາກົນນະຄອນຫຼວງປັກກິ່ງສ້າງຕັ້ງຂຶ້ນໃນປີ 1958,ແຕ່ການປະຕິບັດວຽກງານເປັນເວລາ 50 ກວ່າປີຜ່ານມາ,ຈຳນວນຂົນຖ່າຍຜູ້ໂດຍສານຢູ່ສະໜາມບິນສາກົນນະຄອນຫຼວງປັກກິ່ງໄດ້ເພີ່ມຈາກ 1 ລ້ານ 3 ໝື່ນເທື່ອຄົນໃນປີ 1978 ຂຶ້ນເປັນ 86,2 ລ້ານເທື່ອຄົນໃນປີ 2014,ເປັນອັນດັບໜຶ່ງຢູ່ອາຊີ,ແລະ ເປັນອັນດັບ 2 ໃນໂລກ.

ສະໜາມບິນສາກົນນະຄອນຫຼວງປັກກິ່ງເປີດບໍລິການຢ່າງເປັນທາງການໃນວັນທີ 2 ມີນາ ປີ1958,ແມ່ນສະໜາມບິນພົນລະເຮືອນແຫ່ງທຳອິດທີ່ເປີດບໍລິການພາຍໃນປະເທດຈີນ.ໃນເວລານັ້ນມີແຕ່ອາຄານສະໜາມບິນຂະໜາດນ້ອຍຫຼັງໜຶ່ງ,ປະຈຸບັນເອີ້ນວ່າອາຄານໃຕ້,ສຳຄັນແມ່ນໃຫ້ບໍລິການແກ່ຜູ້ໂດຍສານ VIP,ແລະ ເຮືອບິນຮັບເໝົາ.

ສະໜາມບິນສາກົນນະຄອນຫຼວງປັກກິ່ງມີອາຄານ 3 ຫຼັງ,ທາງແລ່ນລະດັບ 4E ສອງສາຍ,ທາງແລ່ນລະດັບ 4F ສາຍໜຶ່ງ,ພ້ອມດ້ວຍສິ່ງກໍ່ສ້າງບໍລິການຜູ້ໂດຍສານ ແລະ ອຸປະກອນດຳເນີນການກັບສິນຄ້າ ແລະ ວັດຖຸສິ່ງຂອງ.ແມ່ນໜຶ່ງໃນສະໜາມບິນສາກົນພຽງ 2 ແຫ່ງຂອງຈີນທີ່ມີທາງແລ່ນຂອງຍົນ 3 ສາຍ(ອີກແຫ່ງໜຶ່ງແມ່ນສະໜາມບິນສາກົນພູຕົ່ງຊຽງໄຮ),ຢູ່ສະໜາມບິນມີທາງແລ່ນສອງທິດລະດັບ 4E ສອງສາຍຕາມທິດຕາເວັນອອກ-ຕາເວັນຕົກ,ເຊິ່ງມີຂະໜາດ 3800 × 60 ແມັດ,3200 × 50 ແມັດ,ແລະ ມີລະບົບລົງຈອດໜ້າດິນດ້ວຍເຄື່ອງອຸປະ





ກອນປະເພດ 2; ໃນນັ້ນມີອາຄານໝາຍເລກ 1, ແລະ ອາຄານໝາຍເລກ 2. ປີ 2008 ໄດ້ສ້າງອາຄານໝາຍເລກ 3 ແລະ ທາງແລ່ນສາຍທີ 3 (3800 × 60 ແມັດ),ເຊິ່ງສາມາດຕອບສະໜອງຕາມຄວາມຕ້ອງການໃນເຮືອບິນປະເພດ F, ຕັ້ງຢູ່ທາງຕາເວັນອອກຂອງສະໜາມບິນ.

ແຕ່ເວລາ 0 ໂມງຂອງວັນທີ 15 ເມສາ ປີ 2015 ເປັນຕົ້ນໄປ,ຜູ້ໂດຍສານທີ່ໄປນຳຖ້ຽວບິນສາກົນຫຼືພາກພື້ນຜ່ານສະໜາມບິນສາກົນນະຄອນຫຼວງປັກກິ່ງໄປອີກປະເທດຫຼືເຂດແຄວ້ນໜຶ່ງ,ຖ້າຢູ່ສະໜາມບິນນະຄອນຫຼວງບໍ່ກາຍເວລາ 24 ຊົ່ວໂມງ,ແລະ ບໍ່ໄດ້ອອກຈາກຂອບເຂດທີ່ກຳນົດໄວ້ໃນດ່ານເຂົ້າອອກເມືອງສະໜາມບິນນັ້ນ,ຈະໄດ້ຍົກເວັ້ນຂັ້ນຕອນກວດກາຜ່ານດ່ານ.ຜູ້ໂດຍສານທີ່ຖືກກັບເງື່ອນໄຂດັ່ງກ່າວຈະໃຫ້ພະນັກງານບໍລິການທາງໜ້າດິນຂອງສະໜາມບິນເກັບຂໍ້ມູນຂອງຜູ້ໂດຍສານ.ເວລາເກັບກຳຂໍ້ມູນຂອງຜູ້ໂດຍສານກໍ່ໄດ້ຈາກປະມານ 45 ວິນາທີຕໍ່ຄົນຫຼຸດລົງເປັນປະມານ 10 ວິນາທີຕໍ່ຄົນ,ເຊິ່ງເປັນການເກັບຂໍ້ມູນຜູ້ໂດຍສານຜ່ານດ່ານທີ່ວ່ອງໄວທີ່ສຸດ ແລະ ມີປະສິດທິພາບສູງທີ່ສຸດພາຍໃນປະເທດຈີນ,ອັນໄດ້ຍົກສູງຄວາມສາມາດ ແລະ ປະສິດທິພາບຕໍ່ຖ້ຽວບິນສາກົນຢູ່ສະໜາມບິນນະຄອນຫຼວງ.ເຈົ້າໜ້າທີ່ສະໜາມບິນສາກົນໃຫ້ຮູ້ວ່າ,ຜູ້ໂດຍສານທີ່ສາມາດຊົມໃຊ້ນະໂຍບາຍຍົກເວັ້ນຂັ້ນຕອນກວດກາຜ່ານດ່ານພາຍໃນເວລາ 24 ຊົ່ວໂມງນັ້ນບໍ່ມີການຈຳກັດດ້ານສັນຊາດ,ພົນລະເມືອງຕ່າງປະເທດ,ເຂດໃນຈີນ,ຮົງກົງ,ມາກາວ ແລະ ໄຕ້ຫວັນຂອງຈີນລ້ວນແຕ່ສາມາດຊົມໃຊ້ນະໂຍບາຍດັ່ງກ່າວ.ຂອບເຂດຂອງຖ້ຽວບິນລວມທັງຖ້ຽວບິນທີ່ໄປສູ່ປະເທດ ແລະ ເຂດແຄວ້ນທີສາມ,ຫຼື ກັບຄືນສູ່ປະເທດຕົ້ນທາງ.



ເລີ່ມແຕ່ວັນທີ 1 ເດືອນ 1 ປີ 2013 ເປັນຕົ້ນໄປ,ສະໜາມບິນສາກົນນະຄອນຫລວງປັກກິ່ງໄດ້ເປີດຊ່ອງທາງພິເສດຍົກເວັ້ນວີຊາໃຫ້ແຂກຜ່ານແດນເປັນເວລາ 72 ຊົ່ວໂມງ
2013 年 1 月 1 日起，北京首都国际机场为过境旅客开放 72 小时过境免签专用通道

图 / 新华社

# ການຮ່ວມມື"ຫນຶ່ງແລວທາງ ຫນຶ່ງເສັ້ນທາງ"ໄດ້ ຮັບຫມາກຜົນການຮ່ວມມືເກີນຄາດຫມາຍ

## “一带一路”合作超预期

近日，中国商务部新闻发言人沈丹阳表示，今年上半年，中国与“一带一路”沿线国家的经贸合作进展积极，进度与效果均“超乎预期”。

ວັນທີ 4 ສິງຫາ 2015,ທ່ານ ເສີນຕານຢາງ, ໂຄສົກກະຊວງການຄ້າຈີນກ່າວວ່າ,ໃນຫົກເດືອນຕົ້ນປີນີ້,ການຮ່ວມມືດ້ານເສດຖະກິດການຄ້າລະຫວ່າງຈີນກັບປະເທດຕາມ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”ໄດ້ຮັບຄວາມຄືບໜ້າຢ່າງຕັ້ງໜ້າ,ຈັງຫວະຄວາມຄືບໜ້າ ແລະ ປະສິດທິຜົນລ້ວນແຕ່ຫຼາຍກວ່າການຄາດໝາຍໄວ້.

### ການລົງທຶນຕໍ່ກັນໄດ້ເພີ່ມຂຶ້ນຢ່າງພົ້ນເດັ່ນ

ຕົວເລກສະຖິຕິຂອງກະຊວງການຄ້າຈີນສະແດງໃຫ້ເຫັນວ່າ,ຍ້ອນໄດ້ຮັບຜົນກະທົບຈາກການຄ້າທົ່ວໂລກຊຸດໂຊມໂດຍລວມ,ໃນຫົກເດືອນຕົ້ນປີນີ້,ການຄ້າສອງຝ່າຍລະຫວ່າງຈີນກັບປະເທດຕາມ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”ກໍ່ໄດ້ຫຼຸດຕ່ຳລົງໃນລະດັບໃດໜຶ່ງ,ຍອດປະລິມານແມ່ນ 485,37 ຕື້ໂດລາ,ຫຼຸດລົງ 8,4% ເມື່ອທຽບກັບໄລຍະດຽວກັນຂອງປີກາຍ,ກວມ 25,8% ຂອງຍອດປະລິມານຂາເຂົ້າຂາອອກຂອງຈີນໃນໄລຍະດຽວກັນ.




ລູກຄ້າເລືອກຊື້ສິນຄ້າຢູ່ຮ້ານຄ້າ "ຊື້ເຄື່ອງທົ່ວໂລກ "ທີ່ລານໂຈວ
顾客在兰州的“全球购”商店选购商品






ງານວາງສະແດງສິນຄ້າກວາງໂຈວ:ມີ 353 ວິສາຫະກິດຮ່ວມງານວາງສະແດງລຽບຕາມ " 1 ແລວທາງ 1 ເສັ້ນທາງ"
广交会：“一带一路”沿线 353 家企业参展

ພ້ອມກັນນັ້ນ, ການລົງທຶນຕໍ່ກັນລະຫວ່າງຈີນກັບປະເທດຕາມ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”ພັດໄດ້ມີການເຕີບໂຕ.

ຖືການດຶງດູດທຶນຕ່າງປະເທດເປັນຕົວຢ່າງ,ໃນຫົກເດືອນຕົ້ນປີນີ້,ປະເທດຕາມ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”ໄດ້ລົງທຶນສ້າງວິສາຫະກິດ 948 ແຫ່ງຢູ່ຈີນ,ເພີ່ມຂຶ້ນ 10,62% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍນີ້; ໄດ້ດຶງດູດທຶນຕ່າງປະເທດຕົວຈິງ 3,67 ຕື້ໂດລາ,ເພີ່ມຂຶ້ນ 4,15% ເມື່ອທຽບກັບໄລຍະດຽວກັນຂອງປີກາຍ.ໃນນັ້ນ,ການລົງທຶນຂອງໂປໂລຍຕໍ່ຈີນເພີ່ມຂຶ້ນຫຼາຍທີ່ສຸດ,ໄດ້ຫຼາຍກວ່າ 36 ເທົ່າ,ອາຣາບີຊາອູດີໄດ້ເພີ່ມຂຶ້ນເກືອບ 7 ເທົ່າ,ການລົງທຶນຂອງມາເລເຊຍ,ຣັດເຊຍ,ສະໂລວັກຕໍ່ຈີນລ້ວນແຕ່ເພີ່ມຂຶ້ນຫຼາຍກວ່າ 100%.ສຳລັບເຂດແຄວ້ນທີ່ມີທຶນຕ່າງປະເທດໄຫຼເຂົ້ານັ້ນ,ກຳແພງນະຄອນຊຽງໄຮ,ແຂວງຈ່ຽງຊູ່,ແຂວງສ່ານຕົ່ງກວມອັດຕາສ່ວນຫຼາຍທີ່ສຸດ,ເຊິ່ງໄດ້ຮັບຄວາມນິຍົມຫຼາຍຈາກນັກລົງທຶນສາກົນ.ຢູ່ເບື້ອງຫຼັງທີ່ປະລິມານການລົງທຶນເພີ່ມຂຶ້ນຢ່າງຫຼວງຫຼາຍນັ້ນ,ຂະແໜງການຂອງຈີນທີ່ດຶງດູດທຶນຕ່າງປະເທດນັ້ນກໍ່ໄດ້ຍົກລະດັບຄຸນນະພາບໃຫ້ສູງຂຶ້ນ.ຂະແໜງການທີ່ຈະເລີນໃໝ່ ແລະ ຂະແໜງການບໍລິການລະດັບສູງທີ່ມີຕົວແທນຄື: ເຕັກໂນໂລຊີຂໍ້ມູນຂ່າວສານ,ການທະນາຄານ,ແລະການບໍລິການດ້ານການໃຫ້ເຊົ່າ ແລະ ການຄ້າ,ຈັງຫວະເພີ່ມໃນການດຶງດູດທຶນຕ່າງປະເທດຕ່າງໄດ້ເພີ່ມຂຶ້ນຫຼາຍກວ່າ 1,6 ເທົ່າ,12 ເທົ່າ ແລະ 1,5 ເທົ່າ.

ການລົງທຶນຂອງຈີນຕໍ່ປະເທດຕາມ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”ກໍ່ໄດ້ເພີ່ມຂຶ້ນຢ່າງພົ້ນເດັ່ນເຊັ່ນກັນ.ໃນຫົກ


ໂຄງການ 900 mw ແລວທາງເສດຖະກິດລະຫວ່າງຈີນ-ປາກີສະຖານ
中巴经济走廊 900 兆瓦光伏项目

ເດືອນຕົ້ນປີນີ້,ວິສາຫະກິດຈີນໄດ້ລົງທຶນໂດຍກົງຕໍ່ 48 ປະເທດຕາມ"ໜຶ່ງແລວທາງ ໜຶ່ງເສັ້ນທາງ"ເຖິງ 7,05 ຕື້ໂດລາ, ເພີ່ມຂຶ້ນ 22% ເມື່ອທຽບກັບໄລຍະດຽວກັນຂອງປີກາຍ,ກວມ 15,3% ໃນການລົງທຶນໂດຍກົງທີ່ບໍ່ແມ່ນປະເພດການທະນາຄານຂອງຈີນຕໍ່ຕ່າງປະເທດ.ການລົງທຶນເຫຼົ່ານີ້ຕົ້ນຕໍແມ່ນໄຫຼໄປສູ່ສິງກະໂປ,ອິນໂດເນເຊຍ,ລາວ, ຣັດເຊຍ,ກາຊັກສະຖານ ແລະ ໄທເປັນຕົ້ນ.

ທ່ານ ຣົວຈ້ຽນກົວ,ຫົວໜ້າສະຖາບັນຄົ້ນຄວ້າການຄ້າສາກົນຂອງກະຊວງການຄ້າຈີນກ່າວວ່າ,ການລົງທຶນຂອງປະເທດຕາມ"ໜຶ່ງແລວທາງ ໜຶ່ງເສັ້ນທາງ"ຕໍ່ຈີນເພີ່ມຂຶ້ນ,ມີສ່ວນພົວພັນກັບການເປີດກວ້າງເຂດການຄ້າເສລີຈີນ,ແລະ ການພັດທະນາຂອງຂະແໜງການບໍລິການ ແລະ ຂະແໜງການຜະລິດເຄື່ອງຈັກລະດັບສູງ. ສຳລັບການລົງທຶນຂອງຕ່າງປະເທດຕໍ່ຂະແໜງການເຫຼົ່ານີ້,ກໍ່ມີຜົນດີຕໍ່ການຊຸກຍູ້ການຍົກກະດັບໂຄງປະກອບອຸດສາຫະກຳພາຍໃນປະເທດຈີນ.

### ວິສາຫະກິດເລັ່ງລັດ "ກ້າວສູ່ຕ່າງປະເທດ"

ການກໍ່ສ້າງ"ໜຶ່ງແລວທາງ ໜຶ່ງເສັ້ນທາງ",ຕົວຫຼັກແມ່ນວິສາຫະກິດ.ຕົວເລກສະຖິຕິຂອງກະຊວງການຄ້າຈີນສະແດງໃຫ້ເຫັນວ່າ,ໃນຫົກເດືອນຕົ້ນປີນີ້,ວິສາຫະກິດຈີນໄດ້ຮັບໝາກຜົນອັນພົ້ນເດັ່ນໃນດ້ານ"ກ້າວສູ່ຕ່າງປະເທດ".

ໃນດ້ານການຮັບເໝົາໂຄງການຕ່າງປະເທດ,ໃນຫົກເດືອນຕົ້ນປີນີ້, ວິສາຫະກິດຈີນໄດ້ຮັບເໝົາໂຄງການເຖິງ 1401 ໂຄງການຢູ່ 60 ປະເທດຕາມ"ໜຶ່ງແລວທາງ ໜຶ່ງເສັ້ນທາງ",ມູນຄ່າສັນຍາທີ່ເຊັນກັນໃໝ່ມີເຖິງ 37,55 ຕື້ໂດລາ,ກວມ 43,3% ໃນມູນຄ່າສັນຍາທີ່ເຊັນກັນໃໝ່ຂອງໂຄງການຮັບເໝົາຕໍ່ຕ່າງປະເທດຂອງຈີນ,ເພີ່ມຂຶ້ນ 16,7%.

ໃນນັ້ນ,ສັນຍາທີ່ເຊັນກັນໃໝ່ທີ່ມີມູນຄ່າສູງກວ່າ 50 ລ້ານໂດລານັ້ນກໍ່ມີ 137 ໂຄງການ,ເຊິ່ງມີຍອດມູນຄ່າເຖິງ 3,09 ຕື້ໂດລາ,ເຊິ່ງສ່ວນຫຼາຍພົວພັນເຖິງຂະແໜງການທ່າແຮງຂອງຈີນ,ເຊັ່ນ,ພະລັງງານໄຟຟ້າ,ການສື່ສານ,ການກໍ່ສ້າງ,ການຂົນສົ່ງຄົມມະນາຄົມ,ການກໍ່ສ້າງອຸດສາຫະກຳເຄມີນ້ຳມັນເຊື້ອໄຟ ແລະ ອື່ນໆ.

ໃນດ້ານການມອບໝາຍວຽກງານການບໍລິການໃຫ້ຕ່າງປະເທດ services outsourcing ນັ້ນ,ໃນຫົກເດືອນຕົ້ນປີນີ້,ວິສາຫະກິດຈີນກັບປະເທດຕາມ"ໜຶ່ງແລວທາງ ໜຶ່ງເສັ້ນທາງ"ໄດ້ເຊັນສັນຍາມອບໝາຍວຽກງານການບໍລິການທີ່ມີມູນຄ່າ 7,06 ຕື້ໂດລາ,ເພີ່ມຂຶ້ນ 17% ເມື່ອທຽບກັບໄລຍະດຽວກັນຂອງປີກາຍ.ສ່ວນສັນຍາມອບໝາຍວຽກງານການບໍລິການໃຫ້ຕ່າງປະເທດຂອງວິສາຫະກິດຈີນນັ້ນ,ເຂດທີ່ເພີ່ມຂຶ້ນຢ່າງພົ້ນເດັ່ນທີ່ສຸດແມ່ນອາຊີຕາເວັນອອກສຽງໃຕ້,ຍອດມູນຄ່າມີເຖິງ 4,03 ຕື້ໂດລາ,ເພີ່ມຂຶ້ນ 18,2% ເມື່ອທຽບກັບໄລຍະດຽວກັນຂອງປີກາຍ.




## ບໍລິສັດລາວເຈແລ່ມເຈີຈຳກັດ

老挝成捷企业有限公司




ທ່ານ ຮວງ ຈິນຜູ ປະທານບໍລິສັດ
黄金浦 董事长

昆明门市部：昆明市白龙路世博大道387号
豪都家具三楼
电话：13759179402
老挝厂址：老挝万象市塔德路八公里处
电话：856-21-314880
856-20-55763908
传真：856-21-314882



ທີ່ຢູ່:ຫຼັກ 8ຖະໜົນທ່າເດື່ອນະຄອນຫຼວງວຽງຈັນ
ເບີໂທ: 856-21-314880
ມືຖື: 856-20-55763908
ແຟກ: 856-21-314882






图 / 新华社

# ເຄືອຂ່າຍເຊື່ອມຕໍ່ກັນ + ຊ່ວຍຊຸກຍູ້ກະສິກຳຂຶ້ນສູ່"ລະດັບສູງ,ມະຫາສານ,ຂັ້ນສູງ"



ຕັ້ງກ້ອງວົງຈອນປິດໄວ້ພາຍໃນເຮືອນໃຫຍ່ປູກຜັກຈະສະໜອງໃຫ້ເວທີ ແລະ ຜູ້ຊົມໃຊ້ກວດກາສະພາບການຜະລິດໄດ້

种植蔬菜的大棚内设有摄像头可供平台及用户查阅生产情况

## 互联网 + 助推农业“高大上”

中国农业部近日发布消息，初步估算，去年中国农产品网络交易额超过 1000 亿元，占农产品销售额的 3%。据农业部官员介绍，不仅是农业电子商务，“互联网 + 现代农业”在农业物联网、农业信息服务等方面也已取得初步成效。

ຫວ່າງແລ້ວນີ້,ກະຊວງກະສິກຳຈີນອອກຂ່າວວ່າ,ຕາມການຄາດຄະເນເບື້ອງຕົ້ນ,ຈຳນວນເງິນຊື້ຂາຍຜະລິດຕະພັນກະສິກຳຈີນທາງເຄືອຂ່າຍອິນເຕີເນັດໃນປີກາຍໄດ້ລື່ນກາຍ 100 ຕື້ຢວນຈີນ,ກວມເອົາ 3% ຂອງຈຳນວນຈຳໜ່າຍຜະລິດຕະພັນກະສິກຳ.ຕາມການແນະນຳຂອງເຈົ້າໜ້າທີ່ກະຊວງກະສິກຳ,ບໍ່ພຽງແຕ່ແມ່ນທຸລະກິດເອເລກໂຕຼນິກກະສິກຳ, “ເຄືອຂ່າຍເຊື່ອມຕໍ່ກັນ + ກະສິກຳທັນສະໄໝ”ໄດ້ຮັບປະສິດທິຜົນເບື້ອງຕົ້ນທາງດ້ານເຄືອຂ່າຍເຊື່ອມຕໍ່ກັນວັດຖຸກະສິກຳ ແລະ ທາງດ້ານບໍລິການຂໍ້ມູນຂ່າວສານກະສິກຳ.

ຄຽງຄູ່ກັບເຄືອຂ່າຍເຊື່ອມຕໍ່ກັນກັບກະສິກຳເຊື່ອມໂຍງເຂົ້າກັນຢ່າງເລິກເຊິ່ງ,ນັກທຸລະກິດໄຟຟ້າເອເລກໂຕຼນິກ,ການເງິນເຄືອຂ່າຍເຊື່ອມຕໍ່ກັນ,ຂໍ້ມູນຂ່າວສານໃຫຍ່......ຄຳສັບດັ່ງກ່າວນີ້ກຳລັງກ້າວເຂົ້າສູ່ຊົນນະບົດເປັນກ້າວໆ.

ບຽດອອກປ້ອງຂໍ້ຕໍ່ລະຫວ່າງກາງ

ໃນເມືອງມົງແຂວງອານຮຸ້ຍ,ຊາວບ້ານຈາງຈີລານຂຽນຂໍ້ມູນຂ່າວສານແລ້ວ,ກາຍເປັນສະມາຊິກນິຄົມກະເສດຢູນ.ໄດ້ຊື້ນ້ຳຢາຂ້າຫຍ້າກອງໜຶ່ງຈະຕ້ອງຖືກກວ່າຫຼາຍຢວນ,ເຫດຜົນທີ່ຈາງຈີລານເຂົ້າສູ່ນິຄົມກະເສດຢູນແມ່ນງ່າຍດາຍ,ແຕ່ວ່າ,ມູນຄ່ານິຄົມກະເສດຢູນແພງກວ່ານີ້ຫຼາຍ.

ຈາງຈີລານເລືອກເອົາການຊື້ຂອງທາງອິນເຕີເນັດ,ແມ່ນຜ່ານການຄິດໄລ່ຢ່າງລະອຽດ; ແຕ່ກ່ອນຊື້ປຸຍເຄມີຖົງໜຶ່ງຕ້ອງການ 110 ຢວນ,ດຽວນີ້,ມີແຕ່ໃຊ້ເງິນ 88 ຢວນ,ໜຶ່ງປີມານີ້ດິນສາມສີ່ຮ້ອຍມູທີ່ທຳການປູກຝັງກໍສາມາດປະຫຍັດເງິນຄ່າຝຸ່ນເຄມີໄດ້ບໍ່ໜ້ອຍ.

ທ່ານຖຽນຟອງຜູ້ອຳນວຍການໃຫຍ່ເຈົ້າໜ້າທີ່ເອກເຜີຍແຜ່ຂອງນິຄົມກະເສດຢູນແນະນຳວ່າ,ນິຄົມກະເສດຢູນໄດ້ມີຜະລິດຕະພັນກະເສດ 3500 ປະເພດຂອງວິສາຫະກິດພວມຈຳໜ່າຍຢູ່ເຄືອຂ່າຍອິນເຕີເນັດ,ຮັບໃຊ້ລູກຄ້າເກືອບ 1 ລ້ານຄອບຄົວ,ຄອບຄົວກະສິກຳສາມາດຊື້ໄດ້ຜະລິດຕະພັນຂອງໂຮງງານແທ້ຈິງໃນເວທີໂດຍກົງໂດຍລາຄາຕ່ຳກວ່າ 15—45% ຈາກຊ່ອງທາງທີ່ເປັນມູນເຊື້ອ.

ຫລັງຈາກເຄືອຂ່າຍອິນເຕີເນັດເຂົ້າຮ່ວມແລ້ວ,ປ້ອງຂໍ້ຕໍ່ລະຫວ່າງຊື້ຂາຍຖືກບຽດອອກໄປແລ້ວ.ສອງເດືອນກ່ອນ,ທ.ຫວາງກູຍຄອບຄົວກະສິກຳມົງໂກນໃນໄດ້ເລີ່ມຕົ້ນຂາຍນ້ຳມັນຕົ້ນປ່ານຢູ່ໃນເວທີເຄືອຂ່າຍເນັດຈຳໜ່າຍຜະລິດຕະພັນກະສິກຳນິຄົມອາລີ,ສ້າງຄວາມເຂົ້າໃຈກັນກັບຜູ້ຊື້ໂດຍກົງ,ເຮັດໃຫ້ເຂົາເຈົ້າໄດ້ຜົນປະໂຫຍດຫຼາກຫຼາຍ.ຕາມສະຖິຕິ,ຈົນເຖິງທ້າຍປີກາຍທີ່ຜ່ານມານີ້,ຜູ້ຊື້ທີ່ຊື້ຢູ່ໃນເວທີດັ່ງກ່າວນີ້ໄດ້ບັນລຸເຖິງ 750,000 ຄອບຄົວ,ໄດ້ເພີ່ມຂຶ້ນ 98% ທຽບໃສ່ປີກາຍເວລາດຽວກັນ.

ນອກຈາກຂາຍໄດ້ລາຄາເປັນຢ່າງດີແລ້ວ,ໄລຍະຜ່ານການຂາຍກໍໄດ້ງ່າຍດາຍຫຼາຍ,ທ.ຈາງຟົງຮວາຄອບຄົວກະສິກຳໃນເມືອງຈີເຢຍແຂວງຊານຕຸງ,ຫລັງຈາກເມື່ອບ້ານຮັບເໝົາທີ່ດິນ 300 ມູ,ລາວເວົ້າວ່າ,ໝາກຄາຍສຸກແລ້ວ,ກົດເນັດບາດດຽວ,ຂາຍຢູ່ໃນເວທີເນັດ"ສະສົມຜົນການເກັບກຽວອຸດົມສົມບູນ"ຂອງນິຄົມກະເສດຢູນໂດຍກົງ,ທັງສະດວກສະບາຍທັງໝົດຄວາມເປັນຫ່ວງໃຍ.

ດູດດຶງເອົາຊັບພະຍາກອນເປັນຈຳນວນຫຼວງຫຼາຍ

ນ. ຫວາງເມີຍ ລາອອກຈາກບໍລິສັດໃຫຍ່ແຫ່ງໜຶ່ງ,ໄດ້ສ້າງຕັ້ງບໍລິວັດໝາກເຊີລີ,ໄດ້ເຮັດ 020 ຜະລິດຕະພັນກະສິກຳ; ທ. ແລວຈຸນຢວນ,ຕາມເດີມແມ່ນຜູ້ອຳນວຍການຫຼັກຊັບຜູ້ໜຶ່ງ,ຕໍ່ມາ,ໄດ້ຮັບເໝົາທີ່ດິນ 100 ມູ,ໄດ້ສ້າງຕັ້ງນິຄົມກະເສດອິນຊີແຫ່ງໜຶ່ງ......ເຄືອຂ່າຍເຊື່ອມຕໍ່ກັນທາງເນັດຄ້າຍຄືກັນແມ່ແຮງຕິດຕັ້ງໄວ້ຢູ່ໃນທົ່ງນາ,ໄດ້ດູດດຶງເອົາຊັບພະຍາກອນເປັນຈຳນວນຫຼວງຫຼາຍເຊັ່ນ: ບຸກຄະລາກອນ,ທຶນຮອນ ແລະ ອື່ນໆເຂົ້າມາຢ່າງບໍ່ຂາດສາຍ.



ເອກະຊົນຈອງນິຄົມກະເສດໃນເຄືອຂ່າຍເຊື່ອມຕໍ່ກັນໃນບ້ານຈວງຖຽນຕາແສງຈີຊີຊາງອານແຂວງອານຮູຍ

安徽绩溪长安镇庄团村的互联网私人订制农场

ທ. ຕີຊວຽນ ຊາວບ້ານເມືອງເຈຍຊຽງແຂວງຊານຕຸງເຄີຍຖອດຖອນໃຈວ່າ,ຢູ່ຊົນນະບົດກູ້ຢືມເງິນໄດ້ຍາກ,ຕໍ່ມາ,ໄດ້ໃຊ້“ກຳສິກຳຢູນລອງປ້າວ”ໄປກູ້ຢືມເງິນຈາກທະນາຄານໄດ້ຮັບເງິນກູ້ດອກເບຍຕ່ຳລວງທັງໝົດໄດ້ເງິນກູ້ດອກເບຍຕ່ຳ 50 ລ້ານຢວນສະໜອງໃຫ້ຊາວໄຮ່ນາ,ໄດ້ຮັບປະສິດທິພາບດ້ານເສດຖະກິດເປັນຈຳນວນຮ້ອຍລ້ານຢວນ.

ທ່ານ ສົງຮົງຢ້ວນ ຫົວໜ້າສູນຄົ້ນຄ້ວາເສດຖະກິດຊົນນະບົດກະຊວງກະສິກຳສະແດງວ່າ,ເຄືອຂ່າຍເຊື່ອມຕໍ່ກັນທາງເນັດໄດ້ມີບົດບາດພົວພັນຕິດຕໍ່ກັນ.ທຶນຮອນ,ບຸກຄະລາກອນໃນຕົວເມືອງຈະຕ້ອງຊອກຫາທາງອອກ,ຊົນນະບົດມີຄວາມຕ້ອງການຢ່າງໃຫຍ່ຫຼວງ,ເຄືອຂ່າຍເຊື່ອມຕໍ່ກັນທາງເນັດເອົາສິ່ງດັ່ງກ່າວນີ້ຕິດພັນກັນ,ໄດ້ມີຮູບແບບເສດຖະກິດທີ່ມີອະນາຄົດຫຼາກຫຼາຍ.

ນອກຈາກການກະສິກຳນຳມາຊັບພະຍາກອນ,ເຄືອຂ່າຍເຊື່ອມຕໍ່ກັນທາງເນັດຍັງໄດ້ລົງເລິກຂຸດຄົ້ນກຳລັງບົ່ມຊ້ອນຂອງກະສິກຳຕົວເອງ.ເມືອງຈີຊີແຂວງອານຮູຍມີທີ່ດິນຫວ່າງເປັນຈຳນວນຫຼວງຫຼາຍ,ປີກາຍ,ໝູ່ຄະນະ“ຈີທູຕີ”(ສະສົມທີ່ດິນ)ຮ່ວມສຳພັນກັບອາລີບາບາ,ໄດ້ປະ



ຮູບການສະໜອງ ແລະ ຈຳໜ່າຍຜັກ ແລະ ອາຫານ "ແບບຕ່ອງໂສ້ກິດຈະກຳເຄືອຂ່າຍເຊື່ອມຕໍ່ກັນ "ຂາຍດີຢູ່ຮູເຮີຫາວເທ,ຮູບພາບນີ້ແມ່ນພະນັກງານໄດ້ກວດເບິ່ງສະພາບການຜະລິດຕະພັນຂອງຜັກໂດຍຜ່ານພາບກະຈາຍໂດຍກົງ

“互联网产业链式”蔬菜食品供销模式走俏呼和浩特，图为平台工作人员通过直播画面查看蔬菜生产情况

ຕິບັດໂຄງການ"ຈີທູຕີ",ໄດ້ສ້າງຕັ້ງ"ນິຄົມກະເສດສ່ວນບຸກຄົນ"ໃນເຄືອຂ່າຍເຊື່ອມຕໍ່ກັນທາງເນັດແຫ່ງທຳອິດພາຍໃນປະເທດ.ຜູ້ຊົມໃຊ້ສາມາດເລືອກຊື້ທີ່ດິນຕອນໜຶ່ງໂດຍຜ່ານເຄືອຂ່າຍເຊື່ອມຕໍ່ກັນທາງເນັດ,ເລືອກເອົາພືນລະປູກທີ່ຈະດຳເນີນການປູກຝັງ.ໝາກຜົນທີ່ເກີດຈາກທີ່ດິນດັ່ງກ່າວນີ້ສາມາດຝາກໃຫ້ຜູ້ຊົມໃຊ້ຕາມເວລາກຳນົດ.ຜູ້ທີ່ຮູ້ຈັກວຽກນີ້ມັກຮູບແບບດັ່ງກ່າວນີ້.

ທົ່ງນາປ່ຽນເປັນຫ້ອງທົດລອງ

ສາສະດາຈານຈ້ຽງລິນຊູວິທະຍາຄານປ່າໄມ້,ທຸກມື້ຕອນເຊົ້າຕື່ນມາ,ກໍຈະຕ້ອງເປີດ APP ອອກເພື່ອຕິດຕາມກວດກາເດີ່ນງົວ,ເບິ່ງໂຕງົວ"ເປີດໃຈຫຼືຍັງ"?ຊ໊ອບແວ໊ຊະນິດນີ້ສາມາດສະຖິຕິວິເຄາະທ່າອ່ຽງລະດັບຄາດໝາຍຊີລະຂອງງົວໃນໄລຍະມໍ່ໆນີ້ອອກໄດ້,ແລ້ວປັບອາກາດໃຫ້ລ່ອງ,ສະໜອງນ້ຳ ແລະ ເພີ່ມຕື່ມ ຫຼື ຫລຸດຜ່ອນປະລິມານປ້ອນເຂົ້າຫົວອາຫານ.ອັນນີ້ແມ່ນສະພາບການໃນສະໜາມລ້ຽງງົວທົດລອງໃນເຄືອຂ່າຍເຊື່ອມຕໍ່ກັນທາງເນັດແຫ່ງທຳອິດໃນທົ່ວປະເທດຈີນ.

ຄຽງຄູ່ການລົງເລິກ"ເຄືອຂ່າຍເຊື່ອມຕໍ່ກັນທາງເນັດ + ກະສິກຳ",ທົ່ງນານັບວັນນັບຄືກັນກັບຫ້ອງທົດລອງແຫ່ງໜຶ່ງ,"ເຄືອຂ່າຍເຊື່ອມຕໍ່ກັນທາງເນັດຖືເປັນເວທີແຫ່ງໜຶ່ງ,ບໍ່ພຽງແຕ່ມີເຕັກໂນໂລຊີໃໝ່ເກີດຂຶ້ນເປັນຈຳນວນຫລວງຫຼາຍເທົ່ານັ້ນຍັງສະສົມຂໍ້ມູນຂ່າວສານຫຼາກຫຼາຍອີກດ້ວຍ.ເຊິ່ງມີຜົນປະໂຫຍດການຜະລິດທີ່ຍອດຢ້ຽມ.ພ້ອມກັນນັ້ນ,ຍັງສາມາດດຳເນີນການວິເຄາະທ່າອ່ຽງການປ່ຽນແປງຂອງການຕະຫລາດ ແລະ ລາຄາ".ເບິ່ງຕາມໄລຍະຜ່ານການພັດທະນາແບບຂໍ້ມູນຂ່າວສານຂອງການກະສິກຳ,ອັນນີ້ແມ່ນທ່າອ່ຽງອັນໜຶ່ງ".ທ່ານສິງຮົງຢວນເວົ້າວ່າ.

ແນ່ນອນແລ້ວວ່າ,ສຳລັບຂໍ້ມູນຂ່າວສານຂໍ້ໃຫຍ່ນຳໃຊ້ນຳກະສິກຳ,ທ່ານນາງ ປີຮູຍຟາງ ປະທານສະຫະພັນຊາວກະສິກອນແບບໃໝ່ມີແນວຄວາມຄິດຂອງຕົນ:"ເວົ້າສຳລັບຜູ້ຜະລິດແນວໜ້າກະສິກຳ,ການນຳໃຊ້ຂໍ້ມູນຂ່າວສານຂໍ້ໃຫຍ່ແທ້ໆຍັງຕົກຢູ່ໄລຍະລິ້ນຫາຢູ່.ຍ້ອນວ່າ,ຂໍ້ມູນຂ່າວສານຂໍ້ໃຫຍ່,ຕ້ອງການວິສາຫະກິດວິຊາຊີກເກັບກຳຂໍ້ມູນ ແລະ ວິເຄາະເປັນຈຳນວນຫຼວງຫຼາຍ,ເປັນເວລາຍາວນານ,ຈຶ່ງຈະສາມາດເຮັດໃຫ້ຊາວກະສິກອນຍິ່ງຫຼາຍກວ່າເກົ່າໄດ້ຮັບຜົນປະໂຫຍດຂອງເຄືອຂ່າຍເຊື່ອມຕໍ່ກັນທາງເນັດໄດ້".

ທ່ານ ສິງຮົງຢວນ ເຫັນວ່າ,"ເຄືອຂ່າຍເຊື່ອມຕໍ່ກັນທາງເນັດ + ກະສິກຳ"ອາດຈະປ່ຽນແປງສະພາວະກະສິກຳທັງໝົດ,ເກີດການປະຕິຮູບລັກສະນະປະຕິວັດ,ການຜະລິດ,ການດຳເນີນທຸລະກິດ ແລະ ການຈຳໜ່າຍ ແລະ ບໍລິການຂອງກະສິກຳລ້ວນແຕ່ມີການພັດທະນາຢ່າງມີວິທະຍາສາດ.




## ບໍລິສັດ ກວາງໂຈວກົງເຊີນ ຂົນສົ່ງຈຳກັດ
## ກວາງໂຈວຈີນ ວຽງຈັນລາວ ບໍລິການຂົນສົ່ງດ່ວນ 4 ມື້

-ບໍລິສັດ ກວາງໂຈວ ກົງເຊີນຂົນສົ່ງ ຈຳກັດ ເລີ່ມສະໜອງບໍລິການຂົນສົ່ງ ແລະ ຊຳລະດ່ານ ລະຫວ່າງລາວກັບຈີນແຕ່ປີ 2008 ເປັນຕົ້ນມາ.ບໍລິສັດເຮົາໄດ້ສ້າງສຳນັກງານຂຶ້ນທີ່ ແຂວງກວາງໂຈວ, ນະຄອນຫລວງວຽງຈັນ, ເມືອງຍີວູ, ເມືອງນານນີງ, ເມືອງພິງຊຽງ, ເມືອງຄຸນໝີງ, ເມືອງມໍ່ຫານ ແລະ ມີຕາໜ່າງຄອບຄຸມຢ່າງຮອບດ້ານ. ບໍລິສັດເຮົາມີທີມງານບໍລິການທີ່ປະກອບດ້ວຍຄົນຈີນ, ຄົນລາວ, ຄົນ ໄທ ແລະ ຄົນຫວຽດນາມປະມານ 60 ກ່ວາຄົນ. ບໍລິສັດເຮົາໄດ້ເປີດເສັ້ນທາງແຕ່ຈີນ-ລາວ ໂດຍຜ່ານຫວຽດນາມ ໃນເມື່ອປີ 2011, ເຮັດໃຫ້ເວລາ ຂົນສົ່ງແຕ່ 15 ມື້ຢູ່ນເປັນ 4 ມື້ ແລະ ສຳຄັນ ແມ່ນໄດ້ສົ່ງເສີມການຄ້າລະຫ່ວາງປະເທດລາວກັບປະເທດຈີນອີກດ້ວຍ.

-ບໍລິສັດເຮົາໄດ້ສະໜອງບໍລິການ ທາງດ້ານວິສະວະກຳໃຫ້ແກ່ເຂື່ອນໄຟຟ້າ, ສະຖານທີ່ກໍ່ສ້າງ, ໄຟຟ້າ,ການຄຸດຄົ້ນແຮ່ທາດແລະອື່ນໆ.ທອດຖອນບົດຮຽນດ້ານຈໍລະຈອນຢ່າງສົມບູນ. ໂດຍສະເພາະແມ່ນບົດຮຽນມຈາກໂຄງການ ຂົນສົ່ງ ກໍ່ສ້າງຫໍປະຊຸມ ASEM ລາວ, ຍ້ອນບໍລິການຂົນສົ່ງທີ່ປອດໄພ ແລະ ໃຊ້ເວລາອັນສັ້ນຊຶ່ງໄດ້ຮັບການຕີລາຄາສູງຈາກຂະແໜງການທີ່ກ່ຽວຂ້ອງ.

ບໍລິສັດເຮົາສະໜອງບໍລິການດັ່ງລຸ່ມນີ້:
-ກວາງໂຈວຈີນຮອດວຽງຈັນລາວຂົນສົ່ງດ່ວນ 4 ມື້
-ບໍລິການຂົນສົ່ງສົມທົບທາງທະເລ ແລະ ທາງບົກຈາກ ກວາງໂຈວຈີນຫາວຽງຈັນລາວໂດຍຜ່ານບາງກອກ
-ບໍລິການຂົນສົ່ງ ຈາກປະເທດລາວໄປຫາປະເທດຈີນອື່ນໆ
ໂທລະສັບຈີນ: 86 20 36517965
ໂທລະສັບລາວ: 020 98000013
ພາສາລາວ: 020 98209598
EMAIL: ocean@transgz.com
ເວບໄຊ:www.transgz.com



广州共成运输代理有限公司
中国广州—老挝万象 4天快运服务

——广州共成运输代理有限公司从2008年开始提供中国和老挝之间的运输与清关服务。我司在广州、万象、义乌、南宁、凭祥、昆明、磨憨等都设有办事处，网络全面。 公司有一支60多名包括中国、老挝、泰国、越南籍同事组成的服务团队。

——我司在2011年初开辟的中国经越南到老挝线路，把原本需要15天物流的时间缩短到了4天，大大促进了中老贸易。

——我司多次为水电站、建筑工地、电力、矿山等提供工程物流服务，积累了丰富的项目物流经验。特别是老挝欧亚峰会场馆的建设项目运输，我们安全快速的运输服务得到了相关部门高度赞扬。

我司提供的服务项目：
——中国广州到老挝万象4天汽车快运
——中国广州经曼谷到万象的海陆联运服务
——老挝出口到中国等国家的物流服务
中国热线：86 20 36517965
老挝热线：020-98000013
老挝文： 020-28140016
EMAIL:ocean@transgz.com
网址：www.transgz.com



图 / 新华社

# ແພດພື້ນເມືອງຈີນກ້າວສູ່ພາຍນອກ ຊາວຈີນຕ່າງດ້າວແມ່ນຂາດບໍ່ໄດ້

## 中医走出去 华人不可缺

近年来，中医药的地位逐渐获得多个国家的认可。据不完全统计，全世界（中国大陆除外）目前受过培训的中医药人员约 50 多万名，中医教学机构 1500 多所，中医药产品和服务已经遍布全球 170 多个国家，并被一些国家纳入医疗保健体系。中国国务院侨办副主任谭天星表示中国国内中医院将携手海外华人医院，在全球推广中医。

ແຕ່ວັນທີ 29 ມິຖຸນາ ຮອດ ວັນທີ 6 ກໍລະກົດ 2015 ນີ້, ຜູ້ຮັບຜິດຊອບຂະແໜງການແພດ ແລະ ຢາພື້ນເມືອງຈີນເກືອບຮ້ອຍທ່ານໄດ້ເຕົ້າໂຮມກັນຢູ່ຊຽງໄຮ,ເຂົ້າຮ່ວມຊຸດອົບຮົມຜູ້ຮັບຜິດຊອບສະມາຄົມຈີນຕ່າງດ້າວ ແລະ ເຊື້ອສາຍຈີນຊຸດທີ 31 ທີ່ແມ່ນຫ້ອງການວຽກງານຈີນຕ່າງດ້າວຄະນະລັດຖະບານຈີນເປັນເຈົ້າພາບ,ຫ້ອງການວຽກງານຈີນຕ່າງດ້າວນະຄອນຊຽງໄຮ ແລະ ມະຫາວິທະຍາໄລແພດສາດ ແລະ ຢາພື້ນເມືອງຈີນເປັນຜູ້ຈັດ.

ເວທີປຶກສາຫາລືພາຍໃຕ້ຫົວຂໍ້“ແພດ ແລະ ຢາພື້ນເມືອງຈີນກ້າວສູ່ພາຍນອກ”ທີ່ຫາກໍ່ສິ້ນສຸດລົງນັ້ນແມ່ນພາກສ່ວນສຳຄັນໃນຊຸດອົບຮົມເທື່ອນີ້.ທ່ານທານທຽນສິງ,ຮອງຫົວໜ້າຫ້ອງການວຽກງານຈີນຕ່າງດ້າວຄະນະລັດຖະບານຈີນໄດ້ເຂົ້າຮ່ວມເວທີປຶກສາຫາລືຄັ້ງນີ້,ແລະ ກ່າວວ່າໂຮງໝໍແພດພື້ນເມືອງຈີນຈະຮ່ວມມືກັບໂຮງໝໍຈີນຕ່າງດ້າວຢູ່ຕ່າງປະເທດ,ເຜີຍແຜ່ການແພດພື້ນເມືອງຈີນຢູ່ທົ່ວໂລກ.

ແພດພື້ນເມືອງຈີນໄດ້ຮັບຄວາມຮັບຮູ້ເທື່ອລະກ້າວ

ໃນຊຸມປີມໍ່ໆມານີ້,ຖານະບົດບາດຂອງແພດ ແລະ ຢາພື້ນເມືອງຈີນໄດ້ຮັບການຮັບຮູ້ຈາກຫຼາຍປະເທດ.ຕາມສະຖິຕິທີ່ບໍ່ຄົບຖ້ວນ,ໃນທົ່ວໂລກ(ຍົກເວັ້ນແຜ່ນດິນໃຫຍ່ຈີນ),ປະຈຸບັນຜູ້ປະກອບການທີ່ໄດ້ຮັບການອົບຮົມດ້ານການແພດແລະຢາພື້ນເມືອງຈີນມີປະມານ 5 ແສນກວ່າຄົນ,ສະຖາບັນສອນການແພດພື້ນເມືອງຈີນມີ 1500 ກວ່າແຫ່ງ,ຜະລິດຕະພັນຢາພື້ນເມືອງຈີນ ແລະ ການບໍລິການໄດ້ມີຢູ່ໃນ 170 ກວ່າປະເທດ,ແລະ ບາງປະເທດໄດ້ຈັດເຂົ້າໃນລະບົບສາທາລະນະສຸກ.




ນັກຊ່ຽວຊານວິທະຍາຄານແພດສາດຢາພື້ນເມືອງຈີນຢຸນນານ 9 ຄົນເປີດການກວດພະຍາດໂດຍບໍ່ເກັບຄ່າຕອບແທນຢູ່ທີ່ນະຄອນຫລວງວຽງຈັນລາວ

云南中医学院的 9 名专家在老挝首都万象开展义诊活动

ໃນສັນຍາການຄ້າເສລີຈີນ-ອົສຕຼາລີທີ່ຕົກລົງກັນໃນຫວ່າງກ່ອນນີ້ບໍ່ດົນ,ອົສຕຼາລີໄດ້ໃຫ້ໂກຕາເຂົ້າເມືອງຈຳນວນໜຶ່ງໃຫ້ແກ່ແພດພື້ນເມືອງຈີນຂອງຝ່າຍຈີນເປັນຄັ້ງທຳອິດ,ໃຫ້ຄຳໝັ້ນສັນຍາວ່າຈະດຳເນີນການຮ່ວມມືກັບຈີນໃນດ້ານການບໍລິການການແພດພື້ນເມືອງຈີນ,ແລະ ສົ່ງເສີມໃຫ້ສອງຝ່າຍຮັບຮູ້ຄຸນວຸດທິຂອງແພດພື້ນເມືອງຈີນເຊິ່ງກັນແລະ ກັນ,ສະໜັບສະໜູນການຮ່ວມມືດ້ານການຄົ້ນຄວ້າພັດທະນາການແພດພື້ນເມືອງຈີນ.ນີ້ສະແດງໃຫ້ເຫັນວ່າ,ການແພດພື້ນເມືອງຈີນກ້າວສູ່ພາຍນອກນັ້ນໄດ້ຮັບໝາກຜົນໃນຂັ້ນເບື້ອງຕົ້ນ.

ກ່ຽວກັບເລື່ອງນີ້,ທ່ານ ທານທຽນສິງ ກ່າວວ່າ,ການແພດ ແລະ ຢາພື້ນເມືອງຈີນກ້າວສູ່ພາຍນອກ,ບໍ່ສາມາດປາສະຈາກຊາວຈີນຕ່າງດ້າວ ແລະ ເຊື້ອສາຍຈີນທີ່ເປັນກຳລັງແບບຫາອັນອື່ນທົດແທນບໍ່ໄດ້.

ຕົວຢ່າງວ່າ,ທ່ານ ຊົ້ງນານຮວາ ເປັນໝໍຝັງເຂັມເຊື້ອສາຍຈີນຜູ້ທຳອິດທີ່ໄດ້ຮັບໃບອະນຸຍາດບໍລິການແພດໝໍຢູ່ເປຼຊິນ,ເພິ່ນໄດ້ປະກອບສ່ວນອັນໃຫຍ່ຫຼວງໃນການເຜີຍແຜ່ການແພດພື້ນເມືອງຈີນຢູ່ເປຼຊິນ.ຫວ່າງມໍ່ໆມານີ້,ທ່ານຊົ້ງນານຮວາ ໄດ້ຮັບ“ຫຼຽນໄຊສຳລັບຜູ້ຍົກຍ້າຍຖິ່ນຖານທີ່ດີເດັ່ນ”ຈາກສະຖາບັນວິທະຍາສາດສິລະປະກຳປະຫວັດສາດ ແລະ ວັນນະກຳຂອງເປຼຊິນເຊິ່ງເປັນເຊື້ອສາຍຈີນຜູ້ທຳອິດທີ່ໄດ້ຮັບລາງວັນດັ່ງກ່າວຢູ່ເປຼຊິນ.ຈີນຕ່າງດ້າວ ແລະ ເຊື້ອສາຍຈີນທີ່ຕັ້ງໃຈເຜີຍແຜ່ການແພດພື້ນເມືອງຈີນຄືທ່ານຊົ້ງນານຮວານີ້ຍັງມີຈຳນວນຫຼວງຫຼາຍ.

ຊາວຈີນຕ່າງດ້າວໄດ້ຮັບຜົນປະໂຫຍດຕົວຈິງ

ຄວາມຈິງແລ້ວ,ໂຮງໝໍຊາວຈີນທັງພາຍໃນ ແລະ ຕ່າງປະເທດຮ່ວມມືເຜີຍແຜ່ການແພດພື້ນເມືອງຈີນແມ່ນມາດຕະການຕົວຈິງອັນໜຶ່ງໃນ “ແຜນການເອົາໃຈໃສ່ຂອງແພດພື້ນເມືອງຈີນ ”ທີ່ເປັນພາກສ່ວນອັນສຳຄັນໃນໂຄງການສ້າງຜົນປະໂຫຍດໃຫ້ແກ່ຊາວຈີນຕ່າງດ້າວທີ່ຈັດຂຶ້ນໂດຍຫ້ອງການວຽກງານຈີນຕ່າງດ້າວຄະນະລັດຖະບານຈີນ.

“ແຜນການເອົາໃຈໃສ່ຂອງແພດພື້ນເມືອງຈີນ”ມີຈຸດປະສົງທີ່ຜ່ານຈາກຮູບການຕ່າງໆ,ເຊັ່ນ,ຈັດໃຫ້ມີການກວດພະຍາດໂດຍບໍ່ເກັບຄ່າ,ງານໂຄສະນາຄວາມຮູ້ຮັກສາສຸຂະພາບ,ຈັດຊຸດອົບຮົມແພດໝໍພື້ນເມືອງຈີນຢູ່ຕ່າງປະເທດ,ແລະ ອື່ນໆ,ໄດ້ສ້າງຜົນປະໂຫຍດໃຫ້ແກ່ຈີນຕ່າງດ້າວຢູ່ຮາກຖານ,ຍົກສູງລະດັບ ແລະ ສ້າງພາບພົດທີ່ດີງາມໃຫ້ແກ່ຂະແໜງການການແພດພື້ນເມືອງຈີນຢູ່ຕ່າງປະເທດ,ເປີດກວ້າງອິດທິພົນ ແລະ ບົດບາດຂອງແພດ ແລະ ຢາພື້ນເມືອງຈີນຢູ່ໃນຂອບເຂດທົ່ວໂລກ.

ໃນເດືອນມີນາປີນີ້,ຫ້ອງການວຽກງານຈີນຕ່າງດ້າວຮ່ວມມືກັບກົມຄຸ້ມຄອງແພດ ແລະ ຢາພື້ນເມືອງຈີນແຫ່ງຊາດໄດ້ເຊັນ “ສັນຍາຮ່ວມມືຍຸດທະສາດກ່ຽວກັບການຊຸກຍູ້ແຜນການສ້າງຜົນປະໂຫຍດໃຫ້ແກ່ຈີນຕ່າງດ້າວດ້ວຍການແພດ ແລະ ຢາພື້ນເມືອງຈີນ”.ເດືອນມິຖຸນາ,ຄະນະຊ່ຽວຊານການແພດພື້ນເມືອງຈີນຄະນະທຳອິດໄດ້ເດີນທາງໄປຢ້ຽມຢາມແບນຊິກ,ອັງໂກລາ,ໂມຣິຕຸດສ໌ ແລະ ແຫ່ງອື່ນໆ,ຈັດກິດຈະກຳໃຫ້ຄຳປຶກສາຮັກສາສຸຂະພາບ ແລະ ການກວດພະຍາດໂດຍບໍ່ເກັບຄ່າໃຫ້ແກ່ຈີນຕ່າງດ້າວຢູ່ປະເທດເຫຼົ່ານີ້,ແລະ ໄດ້ຮັບສຽງຕອບຮັບທີ່ດີ.

ຊ່ຽວຊານການແພດພື້ນເມືອງຈີນໃນຄະນະຜູ້ແທນມີບົດຮຽນຫຼາຍ,ສາມາດປິ່ນປົວພະຍາດທີ່ປົວຍາກຫຼາຍຢ່າງ,ການບໍລິການກວດພະຍາດໂດຍບໍ່ເກັບຄ່າທີ່ມີຄຸນນະພາບສູງນັ້ນເຮັດໃຫ້ຊາວຈີນຕ່າງດ້າວໄດ້ສຳຜັດເຖິງ



ເຂດວາງສະແດງວັນວັດທະນະທຳມໍລະດົກຊາອູດິດເຈນາລີຢາທີ່ຕັ້ງຢູ່ນະຄອນຫຼວງອາລີອັດອາລາບີຊາອູດິດ,ມີຜູ້ຊົມຜູ້ໜຶ່ງຊົມເບິ່ງລະອຽດຈຸດແທງເຂັມຮູບຈຳລອງຕົວຄົນໃນຫໍວາງສະແດງຈີນ
位于沙特阿拉伯首都利雅得的沙特杰纳第利亚遗产文化节展览区，一名参观者在中国馆内仔细端详中医穴位人体模型

ຄວາມເອົາໃຈໃສ່ຂອງປະເທດຊາດ,ໄດ້ຮັບຜົນປະໂຫຍດຢ່າງແທ້ຈິງ.ນອກຈາກການກວດພະຍາດໂດຍບໍ່ເກັບຄ່າແລ້ວ,ຄະນະຜູ້ແທນຍັງໄດ້ຈັດງານສົນທະນາກັບໂຮງໝໍທ້ອງຖິ່ນ, ໂຄສະນາວັດທະນະທຳການແພດພື້ນເມືອງຈີນ,ສ້າງພື້ນຖານໃຫ້ແກ່ການເຜີຍແຜ່ການແພດພື້ນເມືອງຈີນໃນອະນາຄົດ.

ການແພດ ແລະ ຢາພື້ນເມືອງຈີນແມ່ນມີ່ງຂວັນຮ່ວມຂອງລູກເຕົ້າປະຊາຊາດຈີນ,ການຊຸກຍູ້ເຜີຍແຜ່ການແພດ ແລະ ຢາພື້ນເມືອງຈີນຢູ່ໃນຂອບເຂດທົ່ວໂລກ,ບໍ່ພຽງແຕ່ຈະສ້າງໂອກາດປະກອບອາຊີບຫຼາຍກວ່າເກົ່າໃຫ້ແກ່ຊາວຈີນຕ່າງດ້າວ ແລະ ເຊື້ອສາຍຈີນທີ່ມີອາຊີບໃນຂະແໜງການການແພດ ແລະ ຢາພື້ນເມືອງຈີນ,ຍັງສາມາດປັບປຸງຊີວິດການເປັນຢູ່ຂອງຈີນຕ່າງດ້າວ ແລະ ເຊື້ອສາຍຈີນໃຫ້ດີຂຶ້ນ.

## ສ້າງຂົວຕິດຕໍ່ ແລະ ແລກປ່ຽນ

ໃນເວລາຈັດກິດຈະກຳກວດພະຍາດ,ຜູ້ລົງທະບຽນແຖວບໍ່ພຽງແຕ່ມີຊາວຈີນຕ່າງດ້າວເທົ່ານັ້ນ,ຍັງມີປະຊາຊົນທ້ອງຖິ່ນຢ່າງຫຼວງຫຼາຍ.ເຂົາເຈົ້າໄດ້ຖືກດຶງດູດຈິດໃຈຈາກຄວາມອັດສະຈັນຂອງການແພດ ແລະ ຢາພື້ນເມືອງຈີນ,ຫຼັງຈາກສຳຜັດກັບຜົນການປິ່ນປົວແລ້ວລ້ວນແຕ່ຮູ້ສຶກອັດສະຈັນທີ່ສຸດ,ແລະ ໄດ້ສ້າງຄື້ນນິຍົມແພດພື້ນເມືອງຈີນຢູ່ແຫ່ງນັ້ນ.

ຄົນຕ່າງປະເທດຈຳນວນຫຼາຍໄດ້ຜ່ານການແພດພື້ນເມືອງຈີນເພື່ອເຂົ້າໃກ້ຊິດກັບຈີນ ແລະ ຮັບຮູ້ຈີນ,ໄດ້ເພີ່ມທະວີຄວາມເຂົ້າໃຈລະຫວ່າງເພື່ອນມິດຕ່າງປະເທດກັບຈີນຕ່າງດ້າວຢູ່ແຫ່ງນັ້ນ,ກໍ່ໄດ້ສ້າງຂົວພົວພັນ ແລະ ແລກປ່ຽນລະຫວ່າງຈີນກັບໂລກ.

ທ່ານ ທານທຽນສິ່ງ ຊີ້ອອກວ່າ,ໃນໄລຍະດົນນານມາແລ້ວ,ການແພດ ແລະ ຢາພື້ນເມືອງຈີນໄດ້ເສີມຂະຫຍາຍບົດບາດອັນສຳຄັນໃນການປັບປຸງຊີວິດການເປັນຢູ່ຂອງຊາວຈີນຕ່າງດ້າວ ແລະ ຊຸກຍູ້ການແລກປ່ຽນວັດທະນະທຳລະຫວ່າງຈີນກັບຕ່າງປະເທດ,ໄດ້ກາຍເປັນເວທີທີ່ມີປະສິດທິຜົນສຳລັບໂລກຮັບຮູ້ວັດທະນະທຳຈີນ.ຖ້າຢາກໃຫ້ການແພດພື້ນເມືອງຈີນແຕກດອກອອກຜົນຢູ່ທົ່ວໂລກ,ຕ້ອງເອົາໃຈໃສ່ນຳກົດໝາຍ,ວັດທະນະທຳ ແລະ ສະພາບແວດລ້ອມດ້ານພາສາຢູ່ຕາມປະເທດຕ່າງໆ,ປະຕິບັດວຽກງານຢ່າງຊອບກັບກົດໝາຍ ແລະ ໃຫ້ບັງເກີດຜົນຕົວຈິງໃນການປິ່ນປົວ.ສຳລັບຂະບວນການທີ່ການແພດ ແລະ ຢາພື້ນເມືອງຈີນແຕກດອກອອກຜົນໃນທົ່ວໂລກ,ກໍ່ແມ່ນຂະບວນການທີ່ວັດທະນະທຳຈີນທີ່ຖືວັດທະນະທຳການແພດພື້ນເມືອງຈີນເປັນຕົວແທນນັ້ນກ້າວສູ່ໂລກເທື່ອລະກ້າວ.






# ບໍລິສັດຈີນຊ່ວຍເຫຼືອປະຊາຊົນລາວເຂດພູດອຍພົ້ນອອກຈາກຄວາມທຸກຍາກ

## 中国公司助力老挝深山居民脱贫

地广人稀的老挝，一部分居民世代生活在大山里，由于交通不便，他们过着几乎与世隔绝的贫苦生活。随着中国公司在老挝投资项目的增多，许多处于深山的大型水电工程给那里村民的生活带来了转机。

ຢູ່ປະເທດລາວທີ່ມີດິນແດນກວ້າງຂວາງ ແລະ ປະຊາກອນໜ້ອຍ,ມີປະຊາຊົນສ່ວນໜຶ່ງດຳລົງຊີວິດຢູ່ໃນເຂດພູດອຍສອກຫຼີກມາຫຼາຍເຊັ່ນຄົນ.ຍ້ອນວ່າເງື່ອນໄຂຄົມມະນາຄົມບໍ່ເອື້ອອຳນວຍ,ເຂົາເຈົ້າດຳລົງຊີວິດຢ່າງທຸກຍາກລຳບາກໂດຍເກືອບຫ່າງເຫີນຈາກໂລກປະຈຸບັນ.ຄຽງຄູ່ກັບບໍລິສັດຈີນມາລົງທຶນຢູ່ລາວນັບມື້ນັບຫຼາຍຂຶ້ນ,ໂຄງການໄຟຟ້ານ້ຳຕົກຂະໜາດໃຫຍ່ທີ່ຕັ້ງຢູ່ເຂດພູດອຍຫ່າງໄກສອກຫຼີກນັ້ນໄດ້ເປັນບາດລ້ຽວຕໍ່ຊີວິດການເປັນຢູ່ຂອງປະຊາຊົນຢູ່ແຫ່ງນັ້ນ.

ບ້ານຜາດົ່ງທີ່ຢູ່ເຂດພູດອຍຫ່າງໄກສອກຫຼີກຂອງເມືອງງອຍແຂວງຫຼວງພະບາງທາງພາກເໜືອຂອງລາວ,ນັກຂ່າວໄດ້ພົບກັບຊາວບ້ານຄົນໜຶ່ງທີ່ຊື່ວ່ານາງແສງ,ນາງອຸ້ມລູກສາວຫຼ້າໄປເລາະຫຼິ້ນຢູ່ເຮືອນເກົ່າທີ່ຖືກທັບມ້າງຖິ້ມໃນຫວ່າງກ່ອນນີ້ບໍ່ດົນ.ເມື່ອເຫັນວ່ານັກຂ່າວກຳລັງຖ່າຍຮູບເຮືອນຕູບຫຍ້າຢູ່ໃນບ້ານ,ນາງກໍ່ມາລົມກັບນັກຂ່າວ.

ນາງເວົ້າດ້ວຍຄວາມດີໃຈວ່າ,"ແຕ່ກ່ອນຄອບຄົວເຮົາກໍ່ແມ່ນຢູ່ໃນເຮືອນຕູບຫຍ້າແນວນີ້,ເຮັດອີ່ຫຍັງກໍ່ບໍ່ສະດວກ,ເວລາຝົນຕົກກໍ່ຖືກນ້ຳຖ້ວມ,ເປື້ອນຫຼາຍ.ປະຈຸບັນບໍລິສັດຈີນຊ່ວຍຍົກຍ້າຍຊາວບ້ານພວກເຮົາໄປອາໄສຢູ່ບ້ານໃໝ່ປະມານ 2 ເດືອນແລ້ວ,ເຮືອນທັງໃໝ່ທັງກວ້າງ,ເຮັດອີ່ຫຍັງກໍ່ສະດວກ,ລູກສາວກົກອ້ອຍກໍ່ໄປເຮັດວຽກຢູ່ເຂື່ອນຂອງເຂົາເຈົ້າ,ເງິນເດືອນກໍ່ດີ,ຊີວິດການເປັນຢູ່ກໍ່ດີຂຶ້ນຫຼາຍແລ້ວ."

ເມື່ອຍ່າງໄປຕາມນາງແສງໄດ້ເຫັນເຮືອນໃໝ່ຂອງນາງທີ່ຢູ່ໃນກຸ່ມຊາວບ້ານຜູ້ຖືກຍົກຍ້າຍຢູ່ບໍລິເວນໃກ້ຄຽງເຊິ່ງເປັນເຮືອນຍົກພື້ນສອງຊັ້ນທີ່ສ້າງດ້ວຍໄມ້.ເຮືອນຂອງນາງແສງຍັງບໍ່ທັນສ້າງສຳເລັດເທື່ອ,ແຕ່ເຮືອນຈຳນວນໜຶ່ງທີ່ໄດ້ສ້າງສຳເລັດແລ້ວນັ້ນໄດ້ທາເປັນສີສັນຕ່າງໆທີ່ສົດຊື່ນ,ເຮັດໃຫ້ເຮືອນ 4 ແຖວ 51 ຫຼັງທີ່ເປັນລະບຽບຮຽບຮ້ອຍນັ້ນໄດ້ກາຍເປັນເຂດເຮືອນວິນລາທີ່ມີສີສັນຢ່າງຫຼາກຫຼາຍ.ເມື່ອເຫັນຈາກບ່ອນສູງໄປແລ້ວຈົ່ງແມ່ນງາມຫຼາຍ.ຍ້ອນວ່າຢູ່ໃນບ້ານເກົ່າມີແຕ່ຈຳນວນໜຶ່ງຢູ່ໃຕ້ເສັ້ນສະສົມນ້ຳ,ສະນັ້ນມີຊາວບ້ານສ່ວນໜຶ່ງບໍ່ຕ້ອງຍົກຍ້າຍ,ເຮືອນຕູບຫຍ້າເກົ່າທີ່ບໍ່ຕ້ອງຍົກຍ້າຍເຫັນແລ້ວກໍ່ມີຄວາມແຕກຕ່າງກັນຫຼາຍສົມຄວນເມື່ອທຽບກັບເຮືອນໃໝ່.

ບ້ານຊາວຍົກຍ້າຍໃໝ່ແຫ່ງນີ້ເປັນໜຶ່ງໃນ 6 ບ້ານໃນເຂດອ່າງນ້ຳເຂື່ອນໄຟຟ້ານ້ຳຕົກລະດັບ 2 ໃນລ້ອງນ້ຳອູທີ່ສ້າງຂຶ້ນໂດຍບໍລິສັດໄຟຟ້ານ້ຳອູລາວທີ່ຂຶ້ນກັບບໍລິສັດ Power Construction Corporation of China,ຕັ້ງຢູ່ຈຸດ 20 ຫຼັກຂອງທາງຫຼວງທີ່ບໍລິສັດສ້າງຂຶ້ນເພື່ອໂຄງການ ແລະ ຜູ້ຖືກຍົກຍ້າຍ.ເສັ້ນທາງສາຍນີ້ໄດ້ເຊື່ອມຈອດບ້ານທີ່ຢູ່ໃນເຂດພູດອຍຫ່າງໄກສອກຫຼີກກັບເສັ້ນທາງເລກ 13,ເຖິງວ່າໄລຍະທາງຍາວທັງໝົດ 30 ກິໂລແມັດເທົ່ານັ້ນ,ແຕ່ຕ້ອງສ້າງຂົວ 6 ແຫ່ງ,ລົງທຶນທັງໝົດ 7 ລ້ານ 1 ແສນ 8 ໝື່ນໂດລາ.ຊາວບ້ານຂອງອີກບ້ານໜຶ່ງທີ່ຢູ່ຈຸດສິ້ນສຸດທີ່ຫຼັກ 30 ຂອງເສັ້ນທາງສາຍນີ້ມີຄວາມຮັບຮູ້ຢ່າງເລິກເຊິ່ງທີ່ສຸດຕໍ່ຄວາມສຳຄັນຂອງເສັ້ນທາງດັ່ງກ່າວ.

ທ່ານ ເສີນຣຸ່ຍ,ຮອງຜູ້ອຳນວຍການໂຄງການທີ່ຮັບຜິດຊອບວຽກງານຍົກຍ້າຍປະຊາຊົນຂອງເຂື່ອນໄຟຟ້າລະດັບ 2 ຂອງບໍລິສັດນ້ຳອູໄດ້ພານັກຂ່າວໄປຮອດບ້ານດັ່ງກ່າວພໍລົງຈອດກໍ່ໄດ້ຫຸ້ມລ້ອມໂດຍຊາວບ້ານທີ່ດີໃຈ.ທ່ານ ເສີນຣຸ່ຍ ເປັນຄົນແຂວງເຫີນານຂອງຈີນ,ມາປະເທດລາວພຽງແຕ່ 2 ປີເຄິ່ງ ແລະ ບໍ່ເຄີຍຮຽນພາສາລາວ,ບັດນີ້ໄດ້ໃຊ້ພາສາລາວທີ່ຍັງມີສຳນຽງພາສາທ້ອງຖິ່ນຂອງແຂວງເຫີນານນັ້ນທັກທາຍກັບຊາວບ້ານ,ແລະ ດົງທ່ານທອງວັນທີ່ເປັນນາຍບ້ານອອກຈາກປະຕູເຮືອນມາໃຫ້ສຳພາດຕໍ່ນັກຂ່າວ.

ທ່ານ ທອງວັນ ເວົ້າວ່າ,ແຕ່ກ່ອນບໍ່ມີທາງຫຼວງ,ລົດກໍ່ເຂົ້າມາບໍ່ໄດ້,ຊາວບ້ານໄປນອກກໍ່ມີແຕ່ຍ່າງເອົາ,ປະຈຸບັນມີທາງຫຼວງແລ້ວ,ຊາວບ້ານຕັດເອົາໄມ້ລຳກໍ່ສາມາດສົ່ງໄປນອກແລກເງິນໄດ້,ສິ່ງຂອງຕ່າງໆທີ່ຢູ່ພາຍນອກ,ໂດຍສະເພາະແມ່ນເບຍລາວທີ່ທຸກຄົນມັກນັ້ນກໍ່ສົ່ງເຂົ້າມາໄດ້,ຊີວິດການເປັນຢູ່ຂອງຊາວບ້ານໄດ້ຮັບການປັບປຸງດີຂຶ້ນຫຼາຍສົມຄວນ.

ທ່ານ ຊາວຈີ້ຊ່ວນ,ຮອງຜູ້ອຳນວຍການໃຫຍ່ທີ່ຮັບຜິດຊອບການນຳໃຊ້ທີ່ດິນ ແລະ ຍົກຍ້າຍປະຊາຊົນຂອງບໍລິສັດນ້ຳອູບອກນັກຂ່າວວ່າ,ບ້ານແຫ່ງນີ້ເຖິງວ່າມີແຕ່ 3 ຄອບຄົວທີ່ຢູ່ພາຍໃຕ້ເສັ້ນສະສົມນ້ຳນັ້ນຕ້ອງຍົກຍ້າຍ,ແຕ່ເພື່ອເຮັດໃຫ້ຊາວບ້ານຫຼາຍກວ່າໄດ້ຮັບຄວາມສະດວກ ແລະ ຜົນປະໂຫຍດຕົວຈິງ,ບໍລິສັດຈຶ່ງໄດ້ສ້າງທາງຫຼວງເຂົ້າມາທາງໃນຕື່ມອີກ."ສະນັ້ນຊາວບ້ານຈຶ່ງໄດ້ຂອບອົກຂອບໃຈເປັນຢ່າງສູງ,ຂອບໃຈນຳບໍລິສັດຈີນໄດ້ຊ່ວຍແກ້ໄຂບັນຫາການເດີນທາງທີ່ເປັນເລື່ອງໃຫຍ່ອັນສຳຄັນ."

ບໍລິສັດໄຟຟ້ານ້ຳອູລາວແມ່ນບໍລິສັດໂຄງການສະເພາະທີ່ສ້າງຂຶ້ນຢູ່ລາວຫຼັງຈາກກຸ່ມບໍລິສັດ Power Construction Corporation of China ໄດ້ຮັບສິດສຳປະທານພັດທະນາໄຟຟ້ານ້ຳຕົກຢູ່ທົ່ວລ້ອງນ້ຳອູ,ຮັບຜິດຊອບການພັດທະນາ ແລະ ທຸລະກິດຂອງເຂື່ອນໄຟຟ້ານ້ຳຕົກ 3 ແຫ່ງໃນໂຄງການໄລຍະທີ 1 ຂອງນ້ຳອູ.

ສິ່ງທີ່ໜ້າສົນໃຈແມ່ນ,ປະຈຸບັນ,ຈຸດຕັ້ງຖິ່ນຖານ 2 ແຫ່ງຂອງຊາວບ້ານຜູ້ຖືກຍົກຍ້າຍທີ່ໄດ້ສ້າງສຳເລັດໃນໂຄງການນ້ຳອູໄລຍະທີ 1 ນັ້ນໄດ້ຖືກຈັດເປັນເວທີໂຄສະນາຕໍ່ພາຍນອກຂອງແຂວງ,ແລະ ໄດ້ຮັບການຍ້ອງຍໍຈາກອົງການປົກຄອງທ້ອງຖິ່ນ.ນອກນີ້,ໂຄງການດັ່ງກ່າວຍັງໄດ້ແກ້ໄຂບັນຫາປະກອບອາຊີບສຳລັບປະຊາຊົນຈຳນວນຫຼວງຫຼາຍ,ໄດ້ເສີມຂະຫຍາຍບົດບາດອັນຕັ້ງໜ້າຕໍ່ການພັດທະນາເສດຖະກິດສັງຄົມຂອງທ້ອງຖິ່ນ.

ປະຈຸບັນ,ສີລາຈາລຶກກ້ອນໜຶ່ງທີ່ມີຮູບທຸງຊາດຈີນ ແລະ ລາວ,ພ້ອມດ້ວຍຕົວໜັງສືທີ່ວ່າ"ຂີດໝາຍແຫ່ງມິດຕະພາບປະຊາຊົນຈີນລາວ"ໄດ້ຕັ້ງຂຶ້ນຢູ່ຫົວບ້ານບ້ານຊາວບ້ານຜູ້ຖືກຍົກຍ້າຍໃໝ່ທີ່ໄດ້ກວມລວມເອົາສອງບ້ານທີ່ຢູ່ໃກ້ບໍລິເວນນັ້ນ,ບ້ານຮ່າຄີ ແລະ ບ້ານຮ່າພາງ(ແປຕາມສຽງ),ເຮັດໃຫ້ປະຊາຊົນທ້ອງຖິ່ນຈະໄດ້ຈົດຈຳມິດຕະພາບຈີນລາວຕະຫຼອດໄປ.

# 《占芭》老挝全国广告招商总代理
## ——LAO FUTURE 传媒公司

扫一扫，掌握老挝最新资讯

ຍິນດີຕ້ອນຮັບຂໍເຊີນທຸກໆທ່ານມາລົງໂຄສະນານຳພວກເຮົາ

ພວກເຮົາເນັ້ນໃສ່ສ່ວນຫລາຍແມ່ນດ້ານການເສດຖະກິດ, ການເມືອງ,ການສຶກສາ,ວັດທະນາທຳ,ການທອງທ່ຽວ ແລະ ອື່ນໆ

老挝资讯网

www.360laos.com 搜索一下

商务服务 | 二手买卖 | 吃喝玩乐 | 人才招聘

www.360laos.com

新闻资讯 | 政策法规 | 招标投资 | 风土民情


## ບາງອາການຕອບຮັບດັ່ງລຸ່ມນີ້:

ຜູ້ທີ່ມີບັນຫາກ່ຽວກັບຄວາມດັນ ຮູ້ສຶກໜັກຫົວ ຄວາມດັນສູງຂຶ້ນເລັກນ້ອຍ ຫຼື ອາດປວດຮາກ

ຜູ້ເປັນຄວາມດັນຕ່ຳ ອາດຈະເກີດເປັນມືກ ຫຼື ຈຸດຕຸ່ມດຳໆ ຫຼື ຕຸ່ມສີເລືອດຕາມຜິວໜັງ

ຄົນເປັນໂລກກະເພາະ ຮູ້ສຶກຮ້ອນທ້ອງ ຮ້ອນໜ້າເອິກ ແໜ້ນທ້ອງ ມັກເອື້ອມ ບໍ່ມັກກິນອາຫານ ບາງຄົນກໍອາດເຈັບກະເພາະຂຶ້ນຕື່ມເລັກນ້ອຍ

ເປັນບາດແຜໃນກະເພາະອາຫານ ລຳໄສ້ ຈະມີການສຸທ້ອງປະມານ 2 ຫາ 3 ວັນ

ຜູ້ເປັນໂລກຫົວໃຈ ຮູ້ສຶກເມື່ອຍ ຫາຍໃຈບໍ່ອີ່ມ ຈິດໃຈຫງຸດຫງິດ

ຄົນເຈັບໝາກໄຂ່ຫຼັງ ຈະຮູ້ສຶກຮ້ອນຫຼັງ ປວດຍ່ຽວຫຼາຍ ຍ່ຽວປ່ຽນສີ

ຄົນເປັນໂລກຕັບ ຮູ້ສຶກເມື່ອຍ ຫາຍໃຈຫອບ ປວດຫົວ ຫິວນ້ຳ ແລະປວດຮາກ

ຜູ້ເປັນເບົາຫວານ ຈະເກີດອາການບວມ ຄັນ ແລະເບົາຫວານຈະເພີ່ມຂຶ້ນ

ຜູ້ເປັນລິດສີດວງທະວານ ອາຈົມຈະປ່ຽນສີ ມີເລືອດປະປົນອອກມາ

ຜູ້ເປັນປະດົງ ຈະຮູ້ສຶກປວດຕາມຂໍ້ກະດູກ ຕ່າງໆ

ຜູ້ເປັນໂລກຜິວໜັງ ແລະສິວ ຈະເກີດພິດພື່ນຂຶ້ນ ຕາມໂຕ ແລ້ວຈະຄ່ອຍຍຸບຫາຍໄປ

ຜູ້ເຈັບຫົວເບື້ອງດຽວ ເຈັບຫົວເພີ່ມຂຶ້ນ 2 ຫາ 3 ວັນ

ຄົນເປັນໂລກປະສາດ ຈະນອນບໍ່ຫຼັບ ໃນໄລຍະທຳອິດ ຫຼັງຈາກນັ້ນຈະນອນຫຼັບດີ ແລະກິນເຂົ້າແຊບ

ຄົນເປັນໂລກປອດ ເວລາໄອຈະມີຂີ້ກະເທີ່ຂຽວອອກມາ ຂີ້ມູກຈະໄຫຼເພີ່ມຂຶ້ນ

ຜູ້ເປັນອຳມະພຶກ ອຳມະພາດ ຈະຮູ້ສຶກຮ້ອນໃນບໍລິເວນ ກະມ່ອມກາງຫົວ ຖືຄືງໄຂ້ ແລະ ປວດຕາມຕົນໂຕ

ຄົນຕຸ້ຍ ຈະຮູ້ສຶກບໍ່ຢາກກິນອາຫານ ຢາກນອນ ແລະແໜ້ນເອິກ ຕໍ່ມາຈະຮູ້ສຶກຢາກອາຫານ ແຕ່ບໍ່ຕຸ້ຍຄືເກົ່າ ຍ້ອນໄຂມັນລະລາຍອອກທາງນ້ຳເຫື່ອ ແລະ ລະບົບຂັບຖ່າຍ

ຜູ້ເປັນທາດລົມ ດື່ມປະມານ 10 ຫາ 15 ວັນ ຈະຄ່ອຍໆມີຄວາມຮູ້ສຶກອາລົມທາງເພດຫຼາຍຂຶ້ນ



# ນ້ຳໝາກຍໍ ທິບສະຫວ່າງ
## Thipsavang Noni Juice

**ປອດສານພິດ**







## ເຮົາປຸງແຕ່ງ ແລະຈຳໜ່າຍ

ຜະລິດຕະພັນ ຈາກທຳມະຊາດ ບໍ່ໃສ່ສານເຄມີໃດໆ

ໄດ້ຮັບການຢັ້ງຢືນຄຸນນະພາບຈາກສູນວິໄຈອາຫານ ແລະ ຢາ ເລກທີ 07 09 1001 / 07.

ໄດ້ຮັບອານຸຍາດປຸງແຕ່ງ ຈາກກົມອາຫານແລະຢາ ກະຊວງສະທາລະນະສຸກ ເລກທີ 10 HL 0006/07.

ໄດ້ຮັບອານຸຍາດສ້າງຕັ້ງ ຜະລິດ ແລະຈຳໜ່າຍຈາກກະຊວງອຸດສາຫະກຳການຄ້າ ເລກທີ 001/07.

ຄຳແນະນຳການດື່ມນ້ຳໝາກຍໍ ບັນດາສານຕ່າງໆ ທີ່ໄດ້ຜ່ານການວິໄຈຈາກບັນດາ ສະຖາບັນການແພດ ຫຼື ສູນວິໄຈອາຫານ ແລະຢາ ຈາກຫຼາຍປະເທດກໍ່ເຫັນວ່າ ໝາກຍໍບໍ່ມີສານຕົກຄ້າງ ຫຼື ຜົນຮ້າຍຕໍ່ສຸຂະພາບຂອງມະນຸດ ຫ້ອງປຸງແຕ່ງນ້ຳໝາກຍໍທິບສະຫ່ວາງ ຜະລິດນ້ຳໝາກຍໍປອດສານພິດ ຮັກສາຄຸນຄ່າ ແລະສັບພະຄຸນຂອງໝາກຍໍໃຫ້ເໝາະສົມສຸຂະພາບ

ດື່ມເບື້ອງຕົ້ນ ມື້ໜຶ່ງປະມານ 300 ຫາ 400 ຊີຊີ ຫຼື ໜຶ່ງຕຸກນ້ອຍ ເມື່ອສຸຂະພາບດີ ແລະສົມບູນຂຶ້ນ ກໍ່ດື່ມຕາມໃຈມັກ ຄືນ້ຳໝາກໄມ້ທົ່ວໄປ

**ວິທີເກັບຮັກສາ: ໄວ້ບ່ອນອາກາດເຢັນ ຫຼື ຕູ້ເຢັນ ເປີດຝາແລ້ວຕ້ອງປິດໃຫ້ແໜ້ນ**

ຝາສີຟ້າ: ລົດທຳມະຊາດ ດື່ມຫລັງອາຫານ

ຝາສີຂາວ: ລົດຫວານ ດື່ມຍາມໃດກໍ່ໄດ້ ຄວນດື່ມມື້ລະ 1 ຕຸກນ້ອຍ

ທຳພັກໂຮງໝໍ 150 ຕຽງ

ຖະໜົນ ໂພນສະຫວ່າງ - ດົງໂດກ

ນ້ຳໝາກຍໍທິບສະຫວ່າງ

ຂໍ້ຫ້າມ: ຜູ້ຍິງຖືພາຫ້າມດື່ມ


**ສະຖານທີ່ ຕິດຕໍ່ພົວພັນ**

ບ້ານ ໂພນສະຫ່ວາງ ຖະໜົນໂພນຕ້ອງ-ດົງໂດກ
ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ
ຫ້ອງການ: (+856 21) 710 840 ມືຖື (+856 20 5015 941 0086-13608807967
E-mail: thipsavang noni@hotmail.com

文、图／徐 宁 杨秋平

# ໃຫ້ການແລກປ່ຽນວັດທະນະທຳຜູກເປັນສາຍສຳພັນມິດຕະພາບ



ທ່ານ ວາງອີຈື ຮອງເຈົ້າກົ່ງແຂວງຜູ້ປະຈຳການ,ຄະນະປະຈຳກົ່ງແຂວງຕາລີຂຶ້ນກ່າວຄຳປາໄສ
大理州州委常委、州人民政府常务副州长王以志致辞




ທ່ານ ຢາງຈຽນ ປະທານສະພາປຶກສາການເມືອງກົ່ງແຂວງຕາລີເປັນເຈົ້າພາບຈັດງານໄມຕີຈິດມິດຕະພາບ
大理州政协主席杨健主持联谊会

## 让文化交流缔结友谊纽带

在中国传统佳节中秋节到来之际，大理白族自治州政协和大理大学联合筹办的“寻梦大理”留学生中秋联谊会，通过留学生架起大理与留学生家庭所在国、所在地区的桥梁。大理白族自治州政协主席杨健告诉记者：“留学生中秋联谊会的成功举办对促进大理乃至云南的对外开放、友好交流产生了积极的影响，搭建了地方党委政府与留学生沟通的平台。”

ເນື່ອງໃນໂອກາດບຸນໄຫວ້ພະຈັນທີ່ເປັນບຸນປະເພນີທີ່ຈະວຽນມາເຖິງນັ້ນ,ງານຮ່ວມສຳພັນມິດຕະພາບນັກສຶກສາ“ສະແຫວງຫາຄວາມຝັນຕາຫຼີ” ທີ່ຮ່ວມກັນຈັດຂຶ້ນໂດຍສະພາປຶກສາການເມືອງກົ່ງແຂວງຕາລີ ແລະ ມະຫາວິທະຍາໄລຕາລີ,ໂດຍຜ່ານຂົວຕໍ່ຂອງຄອບຄົວນັກສຶກສາທີ່ອາໄສຢູ່ປະເທດ ແລະ ພາກພື້ນທີ່ນັກສຶກສາກໍ່ຕັ້ງຂຶ້ນ.ທ່ານຢາງຈຽນປະທານສະພາປຶກສາການເມືອງກົ່ງແຂວງຕາລີບອກນັກຂ່າວວ່າ:“ການທີ່ຈັດງານຮ່ວມສຳພັນມິດຕະພາບບຸນໄຫວ້ພະຈັນນັກສຶກສາຢ່າງສຳເລັດຜົນໄດ້ມີຜົນສະທ້ອນຢ່າງຕັ້ງໜ້າທີ່ເປັນການຊຸກຍູ້ການເປີດປະຕູສູ່ພາຍນອກ ແລະ ກໍ່ສ້າງເວທີສ້າງຄວາມເຂົ້າໃຈກັນລະຫວ່າງອຳນາດການປົກຄອງທ້ອງຖິ່ນກັບນັກສຶກສາຂອງກົ່ງແຂວງຕາລີຈົນເຖິງແຂວງຢຸນນານ”.

ຊີມລົດຊາດບຸນໄຫວ້ພະຈັນສຳຜັດກັບຕາລີ

ຄົນດຽວຢູ່ຕ່າງແດນເປັນແຂກຕ່າງເມືອງ,ເມື່ອຮອດມື້ບຸນຈະຄຶດຮອດຍາດຕິພີ່ນ້ອງຫຼາຍ.ທ່ານ ວາງເວີຍ ນັກກະວີລາຊະວົງຖັງຂໍຝາກຄວາມລະທົມທຸກເຖິງບ້ານເມືອງທີ່ເຂັ້ມຂຸ້ນດ້ວຍກະວີ.ຈະເຂົ້າໃຈບຸນໄຫວ້ພະຈັນທີ່ເປັນບຸນປະເພນີຂອງຈີນແນວໃດແດ່?

ໃນງານຮ່ວມສຳພັນມິດຕະພາບບຸນໄຫວ້ພະຈັນໃນປີ 2013 ນັ້ນ,ນັກສຶກສາອິນເດຍໄດ້ສະແດງລາຍການ



ທ່ານ ຈາງຊຽວກຸຍ ຜູ້ອຳນວຍການມະຫາວິທະຍາໄລຕາລີຂຶ້ນກ່າວຄຳປາໄສ
大理大学校长张桥贵致辞

《ເດັກຊາຍຕູມູ》,ນັກສຶກສາກຳປູເຈຍໄດ້ສະແດງລາຍການອ່ານສຽງດັງກາບກອນ《ຊວຍຕຽວໂກເທີ》,ນັກສຶກສາອາເມລິກາຮ້ອງເພງ《ແຄມບໍ່ນ້ຳກະເບືອ》,ນັກສຶກສາລາວຟ້ອນ《ສຽງແຄນ》,ບັນດານັກສຶກສາພາກັນສະແດງລາຍການເພື່ອສະເຫຼີມສະຫລອງບຸນໄຫວ້ພະຈັນ.ບັນດານັກສຶກສາທີ່ມາຈາກປະເທດຕ່າງກັນລົມກັນດ້ວຍວັດທະນະທຳຈີນຢ່າງເບີກບານມ່ວນຊື່ນ,ດີອົກດີໃຈເປັນຢ່າງຍິ່ງ.

"ຂ້ອຍໄດ້ຊີມລົດຊາດເຂົ້າໜົມໄຫວ້ພະຈັນທີ່ເປັນຂະໜົມພື້ນເມືອງທີ່ແຊບຊ້ອຍແລ້ວ,ງານຮ່ວມສຳພັນມິດຕະພາບໄດ້ສ້າງບັນຍາກາດວັນບຸນທີ່ເຂັ້ມຂຸ້ນເບີກບານມ່ວນຊື່ນໃຫ້ແກ່ນັກສຶກສາທີ່ຕ່າງແດນພວກເຮົາ",ເວົ້າສຳລັບນັກສຶກສາລານບຸນຟົງຂອງລາວ,ເຮັດບຸນໄຫວ້ພະຈັນຢູ່ຈີນຈະເຮັດໃຫ້ລາວຍາກທີ່ຫລົງລືມຊົ່ວຊີວິດ.

“ບັນຍາກາດວັດທະນະທຳທີ່ເປັນມູນເຊື້ອອັນເຂັ້ມຂຸ້ນຂອງເຜົ່າປາຍເມືອງບູຮານຕາລີ,ສິ່ງປຸກສ້າງບູຮານທີ່ເປັນລະບຽບຮຽບຮ້ອຍດີ,ຮ້ານຊາ ແລະ ຮ້ານກາເຟທີ່ເປັນເອກະລັກສະເພາະດຶງດູດຄົນທັງຫຼາຍຢ່າງເລາະຫຼີ້ນຊ້າໆຢູ່ທີ່ນີ້,ຈາກບໍ່ຮູ້ຫຍັງໝົດຂອງຕາລີຮອດໂຕໜັງສືຈີນທັງໝົດໃນປຶ້ມລ້ວນແຕ່ກາຍເປັນພາສາທີ່ລື້ງເຄີຍຂອງຂ້ອຍ,ຂ້ອຍຮູ້ສຶກວ່າ,ເມືອງຕາລີເປັນບ່ອນທີ່ສຳຄັນສຸດບ່ອນໜຶ່ງໃນຊີວິດຂອງຂ້ອຍທີ່ຜ່ານມານັ້ນ”.ຈາກການສະແດງອອກຂອງລາວ,ລາວໄດ້ຮັກຕາລີຢ່າງເລິກເຊິ່ງແລ້ວ.

ສຳຫລວດກວດສອບຕາລີດ້ວຍສາຍຕາແບບສາກົນ

ຕາລີທີ່ມີພາບວິວທິວທັດທີ່ສວຍງາມດ້ວຍລົມດອກທິມະລາຕີເຊິ່ງມີເນື້ອຫາທີ່ເຂັ້ມຂຸ້ນຂອງເມືອງບູຮານຕາລີ ແລະ ມີລະບຽງຄູ່ບ້ານປະມົງທີ່ສວຍງາມລຽບງ່າຍ,ຍັງມີນ້ຳຊາສາມເຍື່ອງທີ່ຂົມກ່ອນຫວານທີ່ຫລັງ……ໄດ້ຜະສົມຜະສານກັນດ້ວຍປະຫວັດສາດກັບຍຸກສະໄໝໃໝ່,ທີ່ເປັນມູນເຊື້ອກັບແຟຊັນ,ວ່ຽບສະຫງົບກັບຈະເລີນຮຸ່ງເຮືອງ.ເມືອງຕາລີກຳລັງສະທ້ອນໃຫ້ເຫັນສະເໜ່ທີ່ເປັນເອກະລັກສະເພາະຂອງມັນແກ່ຊາວໂລກ.“ນ້ຳໜອງຂຽວໃສດັ່ງຢົກ,ສົດໃສເຫັນພື້ນ,ກະແສຟອງບໍ່ຕື່ນ,ວ່ຽບດັ່ງແວ່ນ”,ໃນກິດຈະກຳແຂ່ງຂັນສູນທອນພົດ “ຕາລີໃນດວງໃຈຂອງຂ້ອຍ”ງານຮ່ວມສຳພັນມິດຕະພາບບຸນໄຫວ້ພະຈັນນັກສຶກສາ“ສະແຫວງຫາຄວາມຝັນຕາລີ”ທີ່ຈັດຂຶ້ນໃນປີ 2014 ນັ້ນ,ນັກສຶກສາຊາງຈຽງທຽນທີ່ມາຈາກກຳປູເຈຍນຳໃຊ້ຄຳປະໂຫຍກດັ່ງເທິງນີ້ມາອຸປະມາສະພາບການຂອງສວນເງົາປີ້ນຂອງວັດໄຕຼທາດຕາລີ.

ງານຮ່ວມສຳພັນມິດຕະພາບໃນປີ 2014,ໄດ້ເພີ່ມຕື່ມອີກການແຂ່ງຂັນສູນທອນພົດທີ່ວ່າ“ຕາລີໃນດວງໃຈຂອງຂ້ອຍ”ເປັນຫົວຂໍ້ບົນພື້ນຖານໂດຍຜ່ານການສະແດງລາຍການສິລະປະວັນນະຄະດີມາສະແດງໃຫ້ເຫັນຮີດຄອງພື້ນແຜ່ນ ແລະ ການແລກປ່ຽນວັດທະນະທຳໃນເມື່ອກ່ອນ.

ທ່ານ ລີນເຕັນ ທີ່ມາຈາກອາເມລິກາກ່າວຢູ່ໃນສູນ




ການນຳກົງແຂວງຕາລີຖ່າຍຮູບກັບນັກສະແດງ ແລະ ພະລາກອນເປັນທີ່ລະນຶກ
大理州领导与演职人员留影

ທອນພົດເວົ້າວ່າ: "ຄວາມສວຍງາມຂອງຕາລີບໍ່ພຽງແຕ່ແມ່ນພູນ້ຳຂອງມັນ,ຍັງມີວັດທະນະທຳຊົນເຜົ່າຂອງມັນ,ກໍແມ່ນຍ້ອນແນວນີ້,ເມືອງຕາລີໄດ້ຮັບຜົນສະທ້ອນຢ່າງໃຫຍ່ຫຼວງຈາກວັດທະນະທຳດ້ານການທ່ອງທ່ຽວ ແລະ ການຄ້າ,ພວກເຮົາຈະບອກໃຫ້ຜູ້ຄົນທັງຫຼາຍຮູ້ຈັກ, ສະຖານບູຮານວັດທະນະທຳຈະຕ້ອງອະນຸຮັກສາໄວ້,ສິ່ງທີ່ຍິ່ງສຳຄັນກວ່ານີ້ແມ່ນຈະຕ້ອງຖືກການນຳໃຊ້.ກໍຄືສວນສີລິນເຮືອນພັກຂອງເຜົ່າປາຍເມືອງສີໂຈວຈະກາຍເປັນສະຖານທີ່ແລກປ່ຽນການຮ່ຳຮຽນ,ໃຫ້ນັກທ່ອງທ່ຽວເຂົ້າໃຈປະຫວັດສາດຂອງຄົນທ້ອງຖິ່ນ,ທັງໃຫ້ຊາວເຜົ່າປາຍຮູ້ສຶກພາກພູມໃຈຕໍ່ວັດທະນະທຳຂອງຕົນ."

"ຈັດກິດຈະກຳແຂ່ງຂັນສູນທອນພົດຕາລີໃນດວງໃຈຂອງຂ້ອຍກໍແມ່ນສຳຫລວດກວດສອບຕາລີ,ຄິດຮິນຕອງຕໍ່ຕາລີຕື່ມອີກກ້າວໜຶ່ງດ້ວຍສາຍຕາແບບສາກົນ,ຮັບຟັງຄຳຄິດຄຳເຫັນ ແລະ ຂໍ້ສະເໜີຂອງຄົນທັງຫຼາຍທີ່ມີຕໍ່ການສ້າງສາຕາລີໃໝ່ທີ່ສວຍງາມ ແລະ ມີຄວາມຜາສຸກ,ເປັນການຊ່ວຍເຫຼືອຕາລີສົ່ງເສີມຈຸດດີຫລີກເວັ້ນຂໍ້ຂາດຕົກບົກພ່ອງ,ສົ່ງເສີມທ່າແຮງ,ຊຸກດັນຕາລີກ້າວກະໂດດຢ່າງໄຫຽ".ທ່ານ ປາງຈຽນ ເວົ້າຈັ່ງຊັ້ນ.

"ສະແຫວງຫາຄວາມຝັນຕາລີ"ປູກຝັງຂໍ້ຜູກພັນມິດຕະພາບທີ່ແກ້ບໍ່ໄດ້

ເມືອງຕາລີເປັນບ່ອນຄົບກັນຂອງເສັ້ນທາງສາຍໄໝພາກໃຕ້ ແລະ ທາງບູຮານຊາມ້າ,ທັງເປັນຈຸດຊຸມຄົມມະນາຄົມທີ່ສຳຄັນເຊື່ອມຕໍ່ອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້ໃນປະຫວັດສາດ.ແຫ່ງນີ້ມີໂພດຊັບອຸດົມສົມບູນ,ການຄົມມະນາຄົມສະດວກສະບາຍ,ມີບົດບາດທີ່ສຳຄັນ,ເຮັດໃຫ້ເສດຖະກິດການຄ້າໄປມາຫາສູ່ກັນພາຍໃນພາກພື້ນ ແລະ ນຳພາເສດຖະກິດທ້ອງຖິ່ນ ແລະ ດ້ານອື່ນໆ.

ຫວນຄືນງານຮ່ວມສຳພັນມິດຕະພາບບຸນໄຫວ້ພະຈັນໃນປີ 2013-2014 ລຽນຕິດສອງສະໄໝ,ກິດຈະກຳສອງເທື່ອດັ່ງກ່າວນີ້,ນອກຈາກຜູ້ເຂົ້າຮ່ວມງານມີນັກສຶກສາ,ຄູອາຈານຕ່າງປະເທດຂອງໂຮງຮຽນແລ້ວ,ຍັງມີຜູ້ຕາງໜ້າຄູອາຈານຂອງນະຄອນມິເອີຕີລາທີ່ເປັນເມືອງມິດຕະພາບຂອງອົສຕຣາລີກັບເມືອງຕາລີ ແລະ ເພື່ອນມິດຕ່າງປະເທດທີ່ພັດທະນາຍາວນານຢູ່ຕາລີ,ເຮັດໃຫ້ນັກສຶກສາ ແລະ ເພື່ອນມິດຕ່າງປະເທດຍິ່ງຫຼາຍກວ່າເກົ່າເຂົ້າໃຈ ແລະ ຮັກຫອມວັດທະນະທຳຈີນ ແລະ ຮັບຮູ້ ແລະ ຮັກຫອມເມືອງຕາລີຕື່ມອີກ.

ຫວ່າງປີມໍ່ໆມານີ້,ການແລກປ່ຽນລະຫວ່າງຊາດ ແລະ ການຮ່ວມມືສາກົນຂອງມະຫາວິທະຍາໄລຕາລີນັບມື້ນັບຂະຫຍາຍກວ້າງອອກຢ່າງຕໍ່ເນື່ອງ,ເຊິ່ງມີເນື້ອໃນນັບວັນນັບອຸດົມສົມບູນຂຶ້ນເລື້ອຍໆ.ຮ່ວມມືກັນຈັດທຳໂຮງຮຽນໄດ້ຮັບການຂະຫຍາຍຕົວທີ່ສຳຄັນເວທີການແລກປ່ຽນສາກົນໄດ້ຂະຫຍາຍຕົວຢ່າງບໍ່ຂາດສາຍ,ຈຳນວນນັກສຶກສາຕ່າງປະເທດມາຮຽນຢູ່ຕາລີໄດ້ເພີ່ມຂຶ້ນຫຼວງຫຼາຍ,ນັກຮຽນ ແລະ ຄູອາຈານໄປສຶກສາຢູ່ຕ່າງປະເທດເພີ່ມຂຶ້ນເປັນກ້າວໆ,ການແລກປ່ຽນລະຫວ່າງໂຮງຮຽນກັບໂຮງຮຽນໄດ້ຍົກຊັ້ນລະດັບສູງຂຶ້ນຢ່າງຕໍ່ເນື່ອງ.ນຳໃຊ້ຊັບພະຍາກອນການສຶກສາສາກົນດຶງດູດຄວາມສົນໃຈປັນຍາໄດ້ເພີ່ມຂຶ້ນຕື່ມອີກ,ການສິດສອນພາສາຈີນຕໍ່ຕ່າງປະເທດໄດ້ດຳເນີນການເປັນປົກກະຕິ.ສະຖານະພາບທີ່ເປີດປະຕູສູ່ພາຍນອກ"ສົ່ງລັດສະໝີໄປອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້"ໄດ້ເປັນຮູບເປັນຮ່າງຂຶ້ນເບື້ອງຕົ້ນ.ທ່ານລີວໝິງຫົວໜ້າພະແນກການຮ່ວມມື ແລະ ການແລກປ່ຽນສາກົນຂອງໂຮງຮຽນແນະນຳວ່າ, ປັດຈຸບັນນີ້,ໂຮງຮຽນມະຫາວິທະຍາໄລຕາລີມີນັກສຶກສາເປັນຈຳນວນ 900-1000 ຄົນ,ຈຳນວນນັກສຶກສາຕ່າງປະເທດເປັນອັນດັບ 24 ໃນທົ່ວປະເທດຈີນ,ເປັນອັນດັບທີ 1 ຂອງແຂວງຢຸນນານ.

ນັກສຶກສາຕ່າງປະເທດສຶກສາຢູ່ໂຮງຮຽນຕາລີນັ້ນເປັນຕົ້ນແມ່ນຮຽນສາຂາວິຊາການຢາວິທະຍາ,ແພດສາດ,ການສຶກສາສາດ,ຊົນເຜົ່າສາດ,ພວກເຂົາເຈົ້າຈະນຳເອົາມິດຕະພາບໄມຕີຈິດຂອງປະຊາຊົນຈີນກັບຄືນສູ່ປະເທດຂອງຕົນເພື່ອປະກອບສ່ວນເຂົ້າການແລກປ່ຽນ ແລະ ການພົວພັນຂອງປະເທດພວກເຂົາເຈົ້າກັບເມືອງຕາລີ.ທ່ານ ປາງເຈີເຫີງ ຮອງປະທານສະພາປຶກສາການເມືອງກົງແຂວງຕາລີ,ຫົວໜ້າຄະນະຄະນິດສາດ ແລະ ຄອມພິເຕີມະຫາວິທະຍາໄລຕາລີເວົ້າຈັ່ງຊີ້.

ການຜູກພັນກັນລະຫວ່າງຊາດຢູ່ນຳຄວາມສະນິດສະໜົມຂອງປະຊາຊົນ,ຄວາມສະນິດສະໜົມຂອງປະຊາຊົນເນັ້ນໜັກຢູ່ນຳຮູ້ໃຈກັນ.ການແລກປ່ຽນວັດທະນະທຳກໍເປັນຮູບການສຳຄັນທີ່ກໍ່ສ້າງຂົວແຫ່ງການສ້າງຄວາມເຂົ້າໃຈກັນ,ທັງເປັນຂໍ້ບ້ວງທີ່ສຳຄັນທີ່ຜູກສາຍສຳພັນມິດຕະພາບຂໍ້ໜຶ່ງ.ທ່ານ ຫວາງອີຈື ຄະນະປະຈຳກົງແຂວງຕາລີ,ຮອງເຈົ້າກົງແຂວງປະຈຳຄະນະການປົກຄອງກົງແຂວງຕາລີເວົ້າວ່າ: "ເມືອງຕາລີເປັນບ່ອນຄົບກັນຂອງເສັ້ນທາງສາຍໄໝພາກໃຕ້ ແລະ ທາງບູຮານຊາມ້າ,ທັງເປັນປ່ອງຢ້ຽມທີ່ສຳຄັນຂອງຈີນໃນການແລກປ່ຽນກັບອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້.ເປັນຂົງເຂດເປີດປະຕູສູ່ພາຍນອກ ແລະ ໂອບອ້ອມອາລີແຫ່ງໜຶ່ງ, ດັ່ງນັ້ນ,ແຕ່ໃດມາ,ວັດທະນະທຳຕາລີທັງຮັບເຂົ້າມາທັງແຮ່ໄວ້ ແລະ ໃຈກວ້າງໂອບອ້ອມອາລີ.ໃນຊຸ່ມມື້ນີ້,ເມືອງຕາລີເປັນຖານະຕົວເມືອງໃຈກາງພາກຕາເວັນຕົກຢຸນນານເຊິ່ງມີກຳລັງເຕົ້າໂຮມຕົວເມືອງ,ກຳລັງສົ່ງລັດສະໝີ ແລະ ທີ່ມີຜົນສະທ້ອນໄດ້ຖືກຍົກສູງຂຶ້ນຢ່າງຊັດເຈນ.

ເມືອງຕາລີໄດ້ປະສົບກັບການທ້າທາຍໃໝ່ທີ່ເປີດປະຕູສູ່ພາຍນອກ,ແບກຫາບພາລະກິດໃໝ່,ຕ້ອງການເປີດປະຕູສູ່ພາຍນອກ,ການແລກປ່ຽນ ແລະ ການຮ່ວມມືຢ່າງກວ້າງຂວາງກວ່າເກົ່າ ແລະ ທີ່ມີຊັ້ນລະດັບຍິ່ງສູງກວ່າເກົ່າ ແລະ ທີ່ມີຂົງເຂດຍິ່ງກວ້າງຂວາງກວ່າເກົ່າອີກດ້ວຍ."

图 / 楚 然

# ແຂວງຢູນນານສ້າງ"ນາມບັດ"ດ້ານກະສິກຳສີສັນພິເສດພູພຽງຕໍ່ໂລກ

## 云南打造高原特色农业“世界名片”

云南，是享誉世界的“植物王国”、“动物王国”，是气候多样性典型地区，是生物多样性宝库。2011 年以来，云南省聚焦高原特色农业现代化，至 2014 年，全省农牧渔业总产值、增加值均升至全国第 14 位，高原特色农业成为云南又一张响当当的“世界名片”。

ແຂວງຢຸນນານເປັນ"ອານາຈັກພືດ"ແລະ"ອານາຈັກສັດ"ທີ່ມີຊື່ສຽງໃນໂລກ,ເປັນເຂດທີ່ມີຄວາມຫຼາກຫຼາຍໃນທາງດ້ານດິນຟ້າອາກາດ ແລະ ຊີວະນານາພັນ.ແຕ່ປີ 2011 ເປັນຕົ້ນມາ,ແຂວງຢຸນນານໄດ້ສຸມໃສ່ພັດທະນາກະສິກຳແບບທັນສະໄໝທີ່ມີສີສັນພູພຽງ,ຮອດປີ 2014,ຍອດມູນຄ່າການຜະລິດ ແລະ ມູນຄ່າເພີ່ມຂອງກະສິກຳ,ການລ້ຽງສັດ,ການປະມົງໃນທົ່ວແຂວງໄດ້ກ້າວຂຶ້ນເປັນອັນດັບທີ 14 ຂອງທົ່ວປະເທດ,ກະສິກຳສີສັນພູພຽງໄດ້ກາຍເປັນ"ນາມບັດ"ທີ່ພົ້ນເດັ່ນອີກໃບໜຶ່ງຂອງແຂວງຢຸນນານ.

ເຮັດແນວໃດຈະນຳໃຊ້ທັດສະນະແບບທັນສະໄໝເພື່ອຊຸກຍູ້ໃຫ້ກະສິກຳສີສັນພູພຽງໄດ້ຮັບການພັດທະນາແບບກ້າວກະໂດດ,ແຂວງຢຸນນານໄດ້ທຳຄວາມພະຍາຍາມຄົ້ນຄວ້າຕະຫຼອດມາ.ເດືອນ ພະຈິກປີ 2011,ໃນກອງປະຊຸມຜູ້ແທນສະມາຊິກພັກຄັ້ງທີ 9 ຂອງແຂວງຢຸນນານໄດ້ສະເໜີອອກວ່າ,ຕ້ອງເລັ່ງລັດພັດທະນາກະສິກຳຢ່າງມີຄຸນນະພາບສູງ,ພະຍາຍາມພັດທະນາກະສິກຳທີ່ມີສີສັນພູພຽງ,ເຊິ່ງໄດ້ເປີດໄລຍະໃໝ່ແຫ່ງການພັດທະນາກະສິກຳສີສັນພູພຽງ.



ເຂດປູກຝັງພືດແຖບຮ້ອນໃນສະຖາບັນຄົ້ນຄວ້າວິທະຍາສາດພືດແຖບຮ້ອນແຂວງຢຸນນານ
云南省热带作物科学研究所内热带植物种植区



ໃນຊຸມປີມໍ່ໆມານີ້,ພາກສ່ວນກະສິກຳຂັ້ນຕ່າງໆຂອງແຂວງຢຸນນານໄດ້ປິ່ນອ້ອມເປົ້າໝາຍຍຸດທະສາດຂອງຄະນະພັກ ແລະ ອົງການປົກຄອງແຂວງຢຸນນານກ່ຽວກັບການສ້າງສາແຂວງເຂັ້ມແຂງດ້ານເສດຖະກິດສີຂຽວ,ປະຕິບັດຕາມທິດທາງລວມທີ່ວ່າ"ທິດຊີ້ນຳຂອງຕະຫຼາດ,ວິສາຫະກິດເປັນຕົວຫຼັກ,ອົງການປົກຄອງເປັນຜູ້ຊຸກຍູ້,ມີສ່ວນຮ່ວມຂອງສັງຄົມ",ອີງຕາມທ່າແຮງ 8 ດ້ານ,ຄື,ທ່າແຮງດ້ານພູມສາດ,ດ້ານທີ່ຕັ້ງ,ດ້ານດິນຟ້າອາກາດ,ດ້ານຊັບພະຍາກອນນ້ຳ,ດ້ານຊັບພະຍາກອນທີ່ດິນ,ດ້ານຊັບພະຍາກອນຊີວະນານາພັນ,ດ້ານລະບົບນິເວດແຫຼ່ງຜະລິດ,ດ້ານຊັບພະຍາກອນມະນຸດ,ໃຫ້ຄວາມສຳຄັນແກ່ການສ້າງຖານຜະລິດ,ເພີ່ມຄວາມເຂັ້ມແຂງໃນການຕິດຕາມຄຸ້ມຄອງ,ເປີດກວ້າງຕະຫຼາດ ແລະ ສ້າງເວທີ,ສ້າງຈຸດພິເສດອັນພົ້ນເດັ່ນໃນສີສັນພູພຽງ.

ແຂວງຢຸນນານໄດ້ປິ່ນອ້ອມເປົ້າໝາຍທີ່ວ່າ"ຊຸກຍູ້ການພັດທະນາ,ເພີ່ມທະວີການຕິດຕາມຄຸ້ມຄອງ,ສ້າງຍີ່ຫໍ້ຊື່ດັງ,ຍົກສູງປະສິດທິຜົນ",ພະຍາຍາມຊຸກຍູ້ການກໍ່ສ້າງມາດຕະຖານສູງໃນຂັ້ນຕອນຕ່າງໆຂອງການຜະລິດກະສິກຳ,ອອກແຮງປູພື້ນຖານອັນໜັກແໜ້ນໃຫ້ແກ່ການສ້າງຍີ່ຫໍ້ຊື່ດັງ.ການເຜີຍແຜ່ມາດຕະຖານດ້ານກະສິກຳຂອງແຂວງຢຸນນານຢູ່ອັນດັບໜຶ່ງໃນແຂວງເຂດພາກຕາເວັນຕົກຂອງຈີນ,ລະດັບຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນກະສິກຳໄດ້ສູງຂຶ້ນເລື້ອຍໆ,ມີຄວາມສາມາດຮັບປະກັນສູງຂຶ້ນຢ່າງພົ້ນເດັ່ນ.

ຫຼັງຈາກທຳຄວາມພະຍາຍາມເປັນເວລາຫຼາຍປີ,ມາຮອດປະຈຸບັນ,ຜະລິດຕະພັນກະສິກຳຢຸນນານມີ 21 ຊະນິດໄດ້ຮັບຍີ່ຫໍ້ຊື່ດັງຂອງຈີນ,59 ຊະນິດໄດ້ຮັບໃບຢັ້ງຢືນ



ມູມໜຶ່ງເມືອງດອກໄມ້ຄຸນໝິງ
昆明花之城一角

ລົງທະບຽນສັນຍາລັກພູມສາດຜະລິດຕະພັນກະສິກຳຈາກກະຊວງກະສິກຳຈີນ,ຜະລິດຕະພັນ 7 ງວດລວມ 424 ຊະນິດໄດ້ຮັບຮອງເປັນຜະລິດຕະພັນກະສິກຳຍີ່ຫໍ້ຊື່ດັງຂອງແຂວງຢຸນນານ.

ໂດຍທຳຄວາມພະຍາຍາມສ້າງຍີ່ຫໍ້ຊື່ດັງໃຫ້ແກ່ຜະລິດຕະພັນກະສິກຳໃນພາກພື້ນ,ແຂວງຢຸນນານໄດ້ສ້າງຄວາມເຂັ້ມແຂງ ແລະ ຂະໜາດໃຫຍ່ໃຫ້ແກ່ຂະແໜງການທ່າແຮງທີ່ມີສີສັນພິເສດ,ສ້າງຍີ່ຫໍ້ຊື່ດັງໃຫ້ແກ່ຂະແໜງການທີ່ມີສີສັນທ້ອງຖິ່ນ,ໃບຊາ,ກາເຟ,ດອກໄມ້,ຢາງພາລາ,ແລະ ຜັກເປັນຕົ້ນໄດ້ສ້າງຊື່ສຽງທັງພາຍໃນ ແລະ ຕ່າງປະເທດ.

ໃນຫຼາຍປີມານີ້,ຫຼາຍແຫ່ງຂອງແຂວງຢຸນນານອີງຕາມທ່າແຮງດ້ານຊັບພະຍາກອນຂອງຕົນ,ເລືອກເອົາຜະລິດຕະພັນກະສິກຳທີ່ເໝາະສົມແກ່ການປູກຝັງໃນທ້ອງຖິ່ນຂອງຕົນນັ້ນເປັນຂະແໜງການຫຼັກເພື່ອດຳເນີນການພັດທະນາ,ຈັດເອົາແນວພັນ ແລະ ຜະລິດຕະພັນທີ່ມີປະຫວັດສາດອັນຍາວນານ,ຄຸນນະພາບທີ່ດີ,ມີອິດທິພົນອັນໃຫຍ່ຫຼວງຂອງແຂວງຢຸນນານນັ້ນເພື່ອລົງທະບຽນອະນຸລັກເປັນສັນຍາລັກພູມສາດ.ໄດ້ສ້າງຍີ່ຫໍ້ຜະລິດຕະພັນທີ່ມີສີສັນທ້ອງຖິ່ນຢ່າງຫຼວງຫຼາຍ,ເຊັ່ນ,ຊາພູເອີ,ຂາໝູຮົມ



ໝາກໄມ້ແຖບຮ້ອນຢຸນນານ
云南热带水果

ຄ້ອນຊ່ອນເວີ່ຍ,ຊານຊີເວີນຊ່ານ,ດອກໄມ້ໂຕວນານ,ທຽນມ໊ວຈາວທົງ, ໝາກເຜັດຊື່ອເປີຍເປັນຕົ້ນ.

ແຂວງຢຸນນານໄດ້ຮັບປະສິດທິຜົນອັນພົ້ນເດັ່ນໃນການເປີດກວ້າງຕະຫຼາດພາຍໃນ ແລະ ຕ່າງປະເທດ. ໃນຊຸມປີມໍ່ໆມານີ້,ແຂວງຢຸນນານໄດ້ຈັດຕັ້ງວິສາຫະກິດສຳຄັນດ້ານກະສິກຳໄປເຂົ້າຮ່ວມການວາງສະແດງ ແລະ ການຈຳໜ່າຍຢູ່ນະຄອນຫຼວງປັກກິ່ງ,ນະຄອນຊຽງໄຮ,ແຂວງຫູເປີຍ,ແຂວງເຫີນານ,ແຂວງເຫີເປີຍ,ແຂວງອ່ານຫຸ່ຍ,ແຂວງຊານສີ່,ນະຄອນເສີ່ນເຈີ້ນ,ໄຕ້ຫວັນ,ຮົງກົງ,ມາກາວຂອງຈີນ,ແລະ ດູໄບ,ຕວກກີ,ຣັດເຊຍ,ແລະໄທ,ໄດ້ຈັດງານສະເໜີແນະ,ງານສັງສັນສະເພາະກັບລູກຄ້າ, ແລະ ກິດຈະກຳດຶງດູດການລົງທຶນ.

ໂດຍຜ່ານຄວາມພະຍາຍາມຢ່າງບໍ່ລົດລະໃນການສະເໜີຜະລິດຕະພັນກະສິກຳດ້ວຍຫຼາຍຮູບການຢ່າງມີຊີວິດຊີວາ,ຜະລິດຕະພັນກະສິກຳສີສັນພູພຽງຂອງແຂວງຢຸນນານພວມກວມອັດຕາສ່ວນໃນຕະຫຼາດສູງຂື້ນຢ່າງໄວວາ ແລະ ຕໍ່ເນື່ອງໃນຕະຫຼາດທັງພາຍໃນ ແລະ ຕ່າງປະເທດ.







# THE SACRED MOUNTAIN OF LIFE - MT. GAOLIGONGSHAN
# AN IDEAL DESTINATION FOR ECO-TOURISM

We are expecting your inquiry about and trips for such attractions: the ancient path of over 2 000 years, 16 indigenous ethnic groups, 4 303 species of higher plants, 581 kinds of wild animals, a high mountain with a vertical height difference of 4 000 meters, ··· one more scenic area just one step ahead, and one may experience four seasons in a single day!




**Yunnan Gaoligongshan Mountain Tourism Developing Co., Ltd.**
+86-875-2222011 2222012
+86-875-2222013
E-mall: lishannushui@163.com

BBL
-BEST BUY LAO-

BBL农业资源（老挝）有限公司是一家专业致力于开发老挝野生资源、提供老挝本地特产的企业。公司总部设在老挝首都万象，在老挝川矿省、占巴色省、他曲省、丰沙里省等都设有办事处收购当地特产。

公司主要收购老挝本地农民从原始森林中收集的野生物产，包括石斛、灵芝、大树茶、松茸、红蘑菇、蜂蜜、沉香等。采用天然晾晒等办法保存产品，不使用任何化学原料处理，为纯天然有机无公害食品。欢迎广大客户订购。

公司地址：
老挝万象市赛色塔县T4路
东南亚市场往里第三排Asean Mall
联系电话：030–9658213
020–59526888
网址：www.bestbuylao.com
微信公众号：老挝特产网



## 老挝原生态土特产

营养健康
是您回国馈赠的最佳选择



>>

ບໍລິສັດພວກເຮົາ
ຮັບຊື້ເຄື່ອງປ່າຂອງດົງຂອງທ້ອງຖິ່ນທີ່ປະເທດລາວ,
ເຄື່ອງປ່າຂອງດົງທີ່ພວກເຮົາຮັບຊື້ລວມມີກ້ວຍໄມ້ສະກຸນຫວາຍລາວ, ເຫັດຫຼິນຈື, ຕົ້ນຊາບູຮານ, ເຫັດ matsutake, ເຫັດແດງ, ນ້ຳເຜີ້ງ, ໄມ້ເກດສະໜາ ແລະ ອື່ນໆ.
ຖ້າພວກທ່ານມີຜະລິດຕະພັນເຄື່ອງປ່າຂອງດົງດັ່ງກ່າວ,
ກະລຸນາຕິດຕໍ່ຫາພວກເຮົາ.
ເບີໂທຕິດຕໍ່: 030-9658213
020-59526888



古茶树


松茸


灵芝


野生蜂蜜

文、图 / 云南建工集团有限公司

# ເພື່ອເປັນຜູ້ນຳໜ້າຍຸດທະສາດຂອງວິສາຫະກິດທີ່"ກ້າວສູ່ໂລກພາຍນອກ"

## ——ບັນທຶກພະແນກວິສະວະກຳກໍ່ສ້າງສາກົນກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານ

## 做企业"走出去"战略的排头兵

### ——记云南建工集团有限公司国际工程部

40 多年前，云南建工集团有限公司国际工程部（原海外部）设立。从援外办公室到中国建筑工程总公司云南分公司，再到云南中建工程公司，从云南建工集团总公司海外部，到云南建工集团有限公司国际工程部，40 多年的风雨岁月，期间名称几经更迭，但积极拓展海外市场的脚步从未停止。

40 ກວ່າປີກ່ອນ,ພະແນກວິສະວະກຳກໍ່ສ້າງສາກົນ (ອະດີດພະແນກພົ້ນທະເລ)ຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານສ້າງຕັ້ງຂຶ້ນເລີ່ມຈາກຫ້ອງການຊ່ວຍເຫຼືອຕ່າງປະເທດເຖິງບໍລິສັດໃຫຍ່ວິສະວະກຳກໍ່ສ້າງຈີນສາຂາຢູນນານເຖິງບໍລິສັດວິສະວະກຳກໍ່ສ້າງຈີນຢູນນານອີກ.ຈາກພະແນກພົ້ນທະເລກຸ່ມບໍລິສັດໃຫຍ່ວິສະວະກຳກໍ່ສ້າງຢູນນານເຖິງພະແນກວິສະວະກຳສາກົນກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານ ໂດຍຜ່ານຟ້າຝົນລົມແດດເປັນເວລາ 40 ກວ່າປີມານີ້,ໃນໄລຍະທີ່ຜ່ານມານີ້ຊື່ບໍລິສັດໄດ້ປ່ຽນແປງຫຼາຍຄັ້ງ,ແຕ່ວ່າ,ບາດກ້າວພັດທະນາຕະຫລາດຕ່າງປະເທດບໍ່ໄດ້ຢຸດສະຫງັກຈັກເທື່ອເລີຍ.

ຕົ້ນຊຸມປີ 80 ສະຕະວັດທີ່ຜ່ານມານີ້,ກະແສປະຕິຮູບ ແລະ ເປີດປະຕູສູ່ພາຍນອກໄດ້ໂໝພັດມາ.ທີ່ເປັນຖານະລັດວິສາຫະກິດຂະໜາດໃຫຍ່ບໍລິສັດໜຶ່ງ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານໄດ້ຖືໂອກາດລົມບູລະພາໃນການປະຕິຮູບນຳໜ້າອອກໄປຕ່າງປະເທດດ້ວຍຈິດໃຈເປີດກວ້າງ ແລະ ຈິດສຳນຶກຄົ້ນຫາປ່ຽນແປງຢ່າງຕັ້ງໜ້າ,ບຸກເບີກຕະຫລາດການກໍ່ສ້າງຂອງຕ່າງປະເທດຢ່າງຂະຫຍັນຫ້າວຫັນ.ບໍລິສັດໃຫຍ່ໄດ້ສ້າງຕັ້ງບໍລິສັດໃຫຍ່ວິສະວະກຳກໍ່ສ້າງຈີນສາຂາຢູນນານຂຶ້ນ(ອະດີດພະແນກວິສະວະກຳສາກົນກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານ) ໂດຍການຮັບເໝົາໂຄງການຂອງຕ່າງປະເທດເປັນຫຼັກ,ໄດ້ຮັບເໝົາກໍ່ສ້າງໂຄງການວິສະວະກຳກໍ່ສ້າງ 50 ກວ່າໂຄງການເປັນລຳດັບໃນ 10 ກວ່າປະເທດ ແລະ ເຂດແຄ້ວນ,ໄດ້ສຳເລັດຈຳນວນເງິນທຸລະກິດເກືອບ 1 ຮ້ອຍລ້ານໂດລາສະຫະລັດ.

ຄຽງຄູ່ກັບໂຄງການຮັບເໝົາກໍ່ສ້າງ ແລະ ໂຄງການຊ່ວຍເຫຼືອດ້ານເສດຖະກິດໄດ້ຂະຫຍາຍກວ້າງອອກ ແລະ ເພີ່ມຂຶ້ນຢ່າງບໍ່ຂາດສາຍ,ຖືເອົາໂຄງການຕ່າງປະເທດຊັກນຳຄວາມຮຽກຮ້ອງຕ້ອງການຂາອອກຢ່າງຕໍ່ເນື່ອງ,ໃນປີ 1996,ບົນພື້ນຖານທີ່ໄດ້ຮັບສິດເສດຖະກິດຕໍ່ຕ່າງປະເທດຂອງກະຊວງເສດຖະກິດການຄ້າຕໍ່ຕ່າງປະເທດຈີນ,ກຸ່ມບໍລິສັດໃຫຍ່ໄດ້ຮັບສິດດຳເນີນທຸລະກິດຂາອອກອີກເທື່ອໜຶ່ງ.ຕໍ່ມາ,ເພື່ອເໝາະສົມກັບຄວາມຕ້ອງການໃນການຮັບເໝົາໂຄງການກໍ່ສ້າງ ແລະ ການຮ່ວມມືດ້ານແຮງງານສາກົນ,ກຸ່ມບໍລິສັດໃຫຍ່ຢູນນານໄດ້ຮັບ"ໃບອະນຸມັດແຕ່ງຕັ້ງຄົນງານອອກໄປເຮັດວຽກຢູ່ຕ່າງປະເທດ"ທີ່ກະຊວງເສດຖະກິດການຄ້າຕໍ່ຕ່າງປະເທດຈີນອອກໃຫ້ໃນປີ 1994.ຕັ້ງແຕ່ນັ້ນມາ,ກິດຈະກຳທຸລະກິດຂອງກຸ່ມບໍລິສັດໃຫຍ່ລວມທັງໃບອະນຸມັດທັງ 3 ໃບຄື:ຮັບເໝົາກໍ່ສ້າງ,ແຕ່ງຕັ້ງຄົນງານອອກໄປຕ່າງປະເທດ,ແລະ ການຄ້າຂາອອກຂາເຂົ້າທີ່ຕ້ອງການນັ້ນກໍ່ໄດ້ຄົບຖ້ວນໝົດແລ້ວ,ສາມາດດຳເນີນທຸລະກິດວິສະວະກຳກໍ່ສ້າງໃນແຫ່ງຕ່າງໆໃນທົ່ວໂລກແລ້ວ,ບາດກ້າວບຸກເບີກຕະຫລາດຢູ່ຕ່າງປະເທດໄດ້ກ້າວໄປໜ້າຢ່າງໃຫຍ່ແລ້ວ.

ປະດິດສ້າງຍີ່ຫໍ້ ກໍ່ສ້າງພາບພົດຂຶ້ນ

ເດືອນ 3 ປີ 2004,ອີງຕາມຄວາມຮ້ອງຂໍຂອງລັດຖະບານກຳປູເຈຍ,ຈີນຕົກລົງຊ່ວຍສ້າງຕຶກອາຄານຫ້ອງການລັດຖະບານກຳປູເຈຍຢ່າງຮອບດ້ານ, ໂຄງການກໍ່ສ້າງດັ່ງກ່າວນີ້ໄດ້ເຮັດໃຫ້ຜູ້ນຳຈີນ ແລະ ການນຳກະຊວງການຄ້າຈີນ,ການນຳທຸກຂັ້ນຂອງແຂວງຢູນນານມີຄວາມເອົາໃຈໃສ່ຢ່າງສູງ,ພະແນກວິສະວະກຳກໍ່ສ້າງສາກົນຂອງກຸ່ມບໍລິສັດໃຫຍ່ຢູນນານໄດ້ເດັ່ນຂຶ້ນຮັບປະມູນໃນຫຼາຍກົມກອງເຂົ້າປະມູນ.

ອາຄານຫ້ອງການລັດຖະບານກຳປູເຈຍຕັ້ງຢູ່ໃນນະຄອນຫລວງພະນົມເປັນເຊິ່ງມີເນື້ອທີ່ 4 ເຮັກຕາ,ເນື້ອທີ່ກໍ່ສ້າງລວມ 33970 ຕາແມັດ,ໃນນັ້ນ,ຕຶກຫ້ອງການຫຼັກ ແລະ ຕຶກຫ້ອງການສຳຮອງຕ່າງກໍ 1 ຫລັງ,ຍັງມີຫ້ອງການນາຍົກ,ຮອງນາຍົກແລະຫ້ອງການການນຳສຳຄັນອື່ນໆເປັນຕົ້ນ,ອາຍຸການນຳໃຊ້ອອກແບບກຳນົດ 100 ປີ,ເປັນສິ່ງປູກສ້າງ EQ ທີ່ມີຄວາມສາມາດສັງລວມຄົບຖ້ວນຄົບຄູ່ກັນຫລັງໜຶ່ງ.

ໃນວັນທີ 28 ເດືອນ 1 ປີ 2007,ອາຄານຫ້ອງການລັດຖະບານກຳປູເຈຍທີ່ພະແນກວິສະວະກຳກໍ່ສ້າງສາກົນ



ໂຮງແຮມກອງປະຊຸມສຸດຍອດອາຊີນລາວ
老挝亚欧峰会酒店

ຂອງກຸ່ມບໍລິສັດໃຫຍ່ຢຸນນານໄດ້ເລີ່ມຕົ້ນກໍ່ສ້າງ.ເພື່ອຮັບປະກັນວິສະວະກຳການກໍ່ສ້າງທີ່ເປັນ 1,ການລົງມືກໍ່ສ້າງທີ່ເປັນ 1,ຄຸນລະພາບທີ່ເປັນ 1,ກຸ່ມບໍລິສັດໃຫຍ່ຢຸນນານໄດ້ປະຕິບັດຄຳຂວັນ"ຍີ່ຫໍ້ວິສະວະກຳກໍ່ສ້າງຢຸນນານ-ຈີນ",ໄດ້ເຊື້ອເຊີນນັກຊ່ຽວຊານພື້ນດິນພາຍໃນຈີນທີ່ມີຊື່ສຽງຮ່ວມກັບສະຖາບັນອອກແບບ,ບໍລິສັດທີ່ປຶກສາໄປເຮັດວຽກຢູ່ພາກສະໜາມເຮັດວຽກກໍ່ສ້າງ,ກວດກາ,ອອກແບບໃນການກໍ່ສ້າງໂຄງການໃຫ້ດີ,ປະຕິບັດລະບອບ"3 ກວດກາ"ໃນໄລຍະຜ່ານການກໍ່ສ້າງຢ່າງເຂັ້ມງວດເພື່ອຮັບປະກັນດຳເນີນງານຕາມຄວາມຮ້ອງຂໍດ້ານຄຸນນະພາບ.

ເດືອນ 11 ປີ 2008 ໄດ້ຜ່ານການພະຍາຍາມຢ່າງທໍລະຫົດອົດທົນເປັນເວລາ 22 ເດືອນ,ໃຕ້ການກະທົບຈາກທໍລະນີສາດສັບສົນ,ທຳການກໍ່ສ້າງໃນຍາມຝົນ,ທ່າກຳປັ່ນຕາມໄວ້,ໄພພິບັດຫິມະ,ແຜ່ນດິນໄຫວ,ພະຍາດລະບາດແຖບຮ້ອນ ແລະ ປັດໃຈພາວະວິໄສທຸກຊະນິດ,ກຸ່ມບໍລິສັດເຮົາໄດ້ສຳເລັດໜ້າທີ່ຊ່ວຍກໍ່ສ້າງໂຄງການຕຶກອາຄານຫ້ອງການລັດຖະບານຳປູເຈຍຢ່າງຈົບງາມ,ໄດ້ຮັບຄວາມຍ້ອງຍໍສັນລະເສີນຈາກທຸກຝ່າຍຂອງກຳປູເຈຍ.

ໂຄງການດັ່ງກ່າວນີ້ໄດ້ຮັບ"ລາງວັນຊັ້ນ 1 ວິສະວະກຳກໍ່ສ້າງທີ່ດີເລີດແຂວງຢຸນນານ"ໃນປີ 2010,"ລາງວັນຊັ້ນທີ 1 ການອອກແບບວິສະວະກຳກໍ່ສ້າງທີ່ດີເລີດຂັ້ນອອກແບບ'BIAD'ສະຖາບັນອອກແບບກໍ່ສ້າງນະຄອນປັກກິ່ງ",ໄດ້ຮັບລາງວັນລູປານວິສະວະກຳກໍ່ສ້າງພົ້ນທະເລ ປີ 2010 (ວິສະວະກຳກໍ່ສ້າງທີ່ມີຄຸນນະພາບດີເລີດຂອງລັດ). "ເປັນຂີດໝາຍອັນໜຶ່ງຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງໃນໄລຍະຜ່ານການປະຕິບັດຍຸດທະສາດ"ອອກໄປນອກ"!ທັງເປັນບົດປະພັນ"ລາດາ"ຂອງພະແນກວິສະວະກຳກໍ່ສ້າງສາກົນຢຸນນານທີ່ໄດ້ຮັບຜົນງານຢ່າງໃຫຍ່ຫຼວງ!

ວາງແຜນໄປກ່ອນ,ຈັດສັນອະນາຄົດ

ຄຽງຄູ່ກັບການຊຸກຍູ້ຍຸດທະສາດ"ອອກໄປນອກ",ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານທີ່ມີຜົນງານກໍ່ສ້າງຢູ່ຕະຫລາດຕ່າງປະເທດນັ້ນໄດ້ເລີ່ມຕົ້ນເອົາສາຍຕາເບິ່ງເຂົ້າສູ່ຕະຫລາດອາຊີໃຕ້ອັນກວ້າງຂວາງລຽບຕາມແຄມທະເລອິນເດຍ.

ເນື່ອງຈາກວ່າ,ກຸ່ມບໍລິສັດເຮົາມີຄວາມສົນໃຈຢ່າງສູງຕໍ່ຕະຫລາດອາຊີໃຕ້,ວາງແຜນຈັດສັນ,ກະກຽມໄວ້ຢ່າງເຕັມສ່ວນກ່ອນ,ໃນປີກາຍນີ້,ກຸ່ມບໍລິສັດເຮົາໄດ້ຮັບໂຄງການວິສະວະກຳກໍ່ສ້າງໂຄງການທີ 1 ຢູ່ສີລັງກາ,ໄດ້ບັນລຸເຖິງການບຸກທະລຸຕະຫລາດອາຊີໃຕ້ໃຫ້ປະກົດເປັນຈິງ.

ຍ້ອນວ່າ,ກຸ່ມບໍລິສັດເຮົາໄດ້ມີການຄົ້ນຄວ້າ ແລະ ການກະກຽມໄວ້ຕໍ່ຕະຫລາດອາຊີໃຕ້ເປັນເວລາຍາວນານ,ມີການປ່ຽນແປງວິທີການເປັນມູນເຊື້ອທີ່ເຄີຍໃຊ້ໃນເມື່ອກ່ອນທີ່ວ່າໂດຍຜ່ານໂຄງການໄປກ່ອນແລ້ວຈຶ່ງບຸກເບີກຕະຫລາດຕາມຫລັງ,ຫັນເປັນຮູບການແບບໃໝ່,ກໍ່ສ້າງເວທີກ່ອນ,ສ້າງສາຊ່ອງທາງດຳເນີນທຸລະກິດຈຳໜ່າຍແລ້ວພະຍາຍາມຍາດແຍ່ງເອົາໂຄງການຮ່ວມມືໄປສູ່ອາຊີໃຕ້.

ກຳແຜນແມ່ບົດ, ກະກຽມໄວ້ກ່ອນ,ເລືອກເອົາຈຸດຈັດສັນ,ກໍ່ສ້າງເວທີ,ສ້າງຄວາມເຊື່ອໃຈກັນ,ສະແຫວງຫາອະນາຄົດ,ກໍຄືການຫຼິ້ນໝາກລຸກວາງແຜນທົ່ວເຖິງ


ໂຮງໝໍຫຼວງພະບາງລາວທີ່ຈີນຊ່ວຍເຫຼືອລາວ
中国援助老挝琅勃拉邦医院

ກັນ...ກຸ່ມບໍລິສັດໂດຍຜ່ານການສ້າງຕັ້ງສຳນັກງານຢູ່ບັນດາປະເທດອາຊີໃຕ້ເປັນເທື່ອລະກ້າວຊອກຫາຄູ່ຮ່ວມມືຍຸດທະສາດ,ສ້າງເປັນສາຍພົວພັນແລກປ່ຽນຊ່ວຍຊູກັນທີ່ດີເດັ່ນ,ຜ່ານການສ້າງຄວາມເຂົ້າໃຈກັນຢ່າງເລິກເຊິ່ງ,ສ້າງພື້ນຖານເຊື່ອໃຈກັນ,ໄດ້ເປີດຕະຫລາດອາຊີໃຕ້ຢ່າງສຳເລັດຜົນ. ປັດຈຸບັນນີ້,ໂຄງການໃນສີລັງກາໄດ້ເປີດກິດຈະການແລ້ວ,ຍັງມີໂຄງການຂອງເນປານ ແລະ ສີລັງກາກຳລັງເຈລະຈາກັນຢູ່.ພ້ອມກັນນັ້ນ,ໂດຍຜ່ານຫຼາຍຮູບແບບຄື:ຮ່ວມມືກັນກັບວິສາຫະກິດສູນກາງ,ຍາດເອົາໂຄງການໃໝ່ຈາກຫຼາຍວິທີທາງ.

"ເອົາໂຄງການອອກໄປນອກຂອງກຸ່ມບໍລິສັດເຮົາກາຍເປັນວິຖີທາງອອກໄປນອກຂອງປະເທດອາຊີໃຕ້." ແມ່ນຮູບແບບຊະນິດໜຶ່ງທີ່ປັບເຂົ້າກັນກັບຊັບພະຍາກອນແບບກໍ່ສ້າງຂົວກຳລັງກາຍເປັນວິຖີທາງຂອງກຸ່ມບໍລິສັດເຮົາບັນລຸເຖິງຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ຊະນະພ້ອມກັນເພື່ອປະຕິບັດຢູ່ອາຊີໃຕ້.

ຈາກໂຄງການທຸລະກິດເຖິງຊັບພະຍາກອນທຸລະກິດ,ອັນນີ້ແມ່ນຈິດສຳນຶກພັດທະນາໃໝ່ອ່ຽມຂອງກຸ່ມບໍລິສັດເຮົາທີ່ມີເຈດຈຳນົງນັ້ນທັງເປັນທິດທາງການຫັນຮູບແບບເລື່ອນຊັ້ນ.ນຳໃຊ້ເວທີ ແລະ ວິຖີທາງຂອງວິສາຫະກິດດຳເນີນການປັບເຂົ້າກັນກັບຕະຫຼາດ,ໃນຂະນະອອກໄປນອກນັ້ນ,ຊ່ວຍເຫຼືອບັນດາປະເທດອາຊີໃຕ້ບັນລຸເຖິງຊັບພະຍາກອນແຮງງານອອກໄປນອກ,ຈິດສຳນຶກທຸລະກິດຊັບພະຍາກອນຂອງກຸ່ມບໍລິສັດເຮົາເຮັດໃຫ້ລູກຄ້າມອງເຫັນທ່າທີຊື່ສັດຂອງວິສາຫະກິດຈີນປະຕິບັດຍຸດທະສາດບັນລຸເຖິງຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ຊະນະພ້ອມກັນ.

10 ປະເທດ,ໂຄງການກຳລັງກໍ່ສ້າງເປັນມູນຄ່າ 7 ຕື້,ກຸ່ມບໍລິສັດເຮົາເລັ່ງລັດບາດກ້າວອອກໄປນອກດຳເນີນທຸລະກິດແບບສາກົນໄດ້ຮັບປະສິດທິພາບ.



ຮູບພາບລວມໂຮງງານທໍ່ອາຫານພາກເໜືອລາວ
老北饲料厂全景图

“ອອກໄປນອກ”,ທົ່ວແຖວຍຸດທະສາດ

ໃນໄລຍະຜ່ານການ“ອອກໄປນອກ”ຂອງພະແນກວິສະວະກຳກໍ່ສ້າງສາກົນບໍລິສັດການລົງທຶນຢູ່ຕ່າງປະເທດແຂວງຢູນນານຈຳກັດສັງກັດກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານ ແລະ ບໍລິສັດລູກພາກສ່ວນກິດຈະການຕົວຕົນ 10 ກວ່າແຫ່ງລ້ວນແຕ່ໄດ້ເຂົ້າຮ່ວມກິດຈະການຕ່າງປະເທດ,“ບໍລິສັດອອກໄປນອກໜຶ່ງບໍລິສັດ,ນຳພາບໍລິສັດອອກໄປນອກງວດໜຶ່ງ.”ຄຽງຄູ່ກັບການເລັ່ງລັດບາດກ້າວລົງທຶນຢູ່ຕ່າງປະເທດໂດຍໄວຂອງກຸ່ມບໍລິສັດລົງທຶນຕ່າງປະເທດ,ວິສາຫະກິດທາງເທິງທາງລຸ່ມທີ່ກ່ຽວຂ້ອງຂອງແຂວງຢູນນານໄດ້ໄປຕາມເຄື່ອງປະກອບຄົບຄູ່ກັນໂດຍໄວ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານໃນເມື່ອກ່ອນອອກໄປນອກແຕ່ຜູ້ດຽວ,ຈົນເຖິງປັດຈຸບັນນີ້,ໄດ້ພັດທະນາເຖິງອອກໄປທົ່ວໂລກ“ແບບເປັນກຸ່ມ”.

ເດືອນ 3 ປີນີ້, ສູນທ່ອງທ່ຽວການຄ້າສາກົນສັງລວມວຽງຈັນລາວ(ວຽງຈັນເຊັນເຕີ)ເປັນອັນດັບໜຶ່ງນັ້ນໄດ້ເປີດກິດຈະການຢ່າງໃຫຍ່ໂຕມະໂຫລານແລ້ວ.ວິສະວະກຳກໍ່ສ້າງຢູນນານເຊິ່ງເປັນຝ່າຍລົງທຶນໂຄງການໄດ້ເຊື້ອເຊີນກຸ່ມບໍລິສັດສັບພະສິນຄ້າຄຸນໝິງເປັນທີ່ປຶກສາໃນການຄຸ້ມຄອງຂອງວຽງຈັນເຊັນເຕີ,ນຳພາວິສາຫະກິດພື້ນທີ່ຢູນນານພ້ອມກັນ“ອອກໄປຕ່າງປະເທດ”.

ຢູ່ໃນເຂດພັດທະນາກອມລອມໄຊເສດຖາວຽງຈັນລາວ,ລວມທັງມີກຸ່ມບໍລິສັດຊິນຊິຫວັງ 10 ກວ່າວິສາຫະກິດໄດ້ເຂົ້າປະຈຳຢູ່ໃນພື້ນທີ່ຢ່າງສຳເລັດແລ້ວ.ຍອດລົງທຶນບັນລຸເຖິງ 3 ຮ້ອຍລ້ານໂດລາສະຫະລັດ.ທ່ານມາເຕີແນະນຳວ່າ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານກັບເຂດພັດທະນາເຕັກໂນໂລຊີຊັ້ນສູງຄຸນໝິງຜູກເປັນຄູ່ຮ່ວມມື,ຈະຮ່ວມມືກັນພ້ອມກັນສ້າງສາເຂດພັດທະນາກອມລອມໄຊເສດຖາ,ດຳເນີນການຮ່ວມມືດ້ານການນຳເຂົ້າໂຄງການ,ການສ້າງສາສາຍການຜະລິດ,ການຈັດຕັ້ງວິສາຫະກິດ,ດຳເນີນທຸລະກິດ ແລະ ການຈຳໜ່າຍ ແລະ ອື່ນໆ.

ເລັ່ງກຳກາລະໂອກາດ, ແລ່ນທົ່ວຕ່າງປະເທດ

ຫວ່າງມໍ່ໆນີ້,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານ ແລະ ຝ່າຍລາວໄດ້ລົງນາມເຊັນບົດບັນທຶກຊ່ວງຈຳກ່ຽວກັບບົດວິພາກເສດຖະກິດເຕັກນິກຄວາມເປັນໄປໄດ້ສ້າງທາງຄວາມໄວສູງຈາກວຽງຈັນຫາບໍ່ເຕັນ,ວາງແຜນລົງທຶນ 50 ຕື້ຢວນກໍ່ສ້າງທາງຫຼວງລະຫວ່າງຈີນ-ລາວພາຍໃນ 3-5 ປີ. ເວລາຂັບລົດເອົາເອງຈາກນະຄອນຫຼວງວຽງຈັນຫາບໍ່ເຕັນມີຫວັງຈະຫົດເວລາສັ້ນເຂົ້າເຄິ່ງໜຶ່ງຂຶ້ນໄປ.

ໃນປີ 2015,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານຈະກຳນົດຖານະເປັນປີພັດທະນາລົງທຶນການກໍ່ສ້າງໂຄງລ່າງພື້ນຖານ,ຈຸດສຸມແມ່ນພະຍາຍາມເຂົ້າຮ່ວມການກໍ່ສ້າງໂຄງລ່າງພື້ນຖານຂົງເຂດອ້ອມຂ້າງ,ເອົາຮູບການຈັດຫາທຶນ,ຮູບການກໍ່ສ້າງ ແລະ ວິທີການຄຸ້ມຄອງທຸລະກິດທີ່ໄດ້ສຸກງອມພາຍໃນປະເທດນຳເຂົ້າສູ່ໃນການສ້າງສາຊ່ອງທາງໃຫຍ່ ແລະ ການກໍ່ສ້າງໂຄງລ່າງພື້ນຖານໃນປະເທດອ້ອມຂ້າງ.ການສ້າງສາຂອງຢູນນານອວ່າຍໜ້າໃສ່ການກຳນົດຖານະສູນລັດສະໝີອາຊີຕາເວັນອອກສຽງໃຕ້.ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານຈະປີ່ນອ້ອມການກໍ່ສ້າງຊ່ອງທາງໃຫຍ່,ຖືເອົາການລົງທຶນ ແລະ ຈັດຫາທຶນ ແລະ ຮັບເໝົາໂຄງການປະສານສົມທົບກັບໂຄງການຕ່າງປະເທດອັນດຽວກັນ,ບໍ່ພຽງແຕ່ຈະຕ້ອງອອກໄປນອກ,ຍັງຈະຕ້ອງຍ່າງຂຶ້ນໄປ,ຍິ່ງກວ່ານີ້ອີກ,ຈະຕ້ອງເຂົ້າສູ່ພາຍໃນ,ໂດຍຜ່ານກຳລັງລັດສະໝີຂອງໂຄງການລົງທຶນ,ມີສ່ວນຮ່ວມການສ້າງສາເສດຖະກິດສັງຄົມທ້ອງຖິ່ນ,ທັງໃຫ້ປະຊາຊົນທ້ອງຖິ່ນໄດ້ຮັບຜົນປະໂຫຍດຢ່າງແທ້ຈິງ,ເຮັດໃຫ້ວິສາຫະກິດເຊື່ອມໂຍງເຂົ້າກັບສັງຄົມທ້ອງຖິ່ນ.

ໃນປີ 2015 ໝົດປີ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານວາງແຜນສຳເລັດການລົງທຶນເປັນຈຳນວນເງິນ 50 ຕື້ຢວນຂຶ້ນໄປ,ທ່ານ ມາເຕີ ເວົ້າວ່າ,ກຸ່ມບໍລິສັດຕົກລົງການລົງທຶນບຸກເບີກພັດທະນາ ແລະ ການກໍ່ສ້າງຕໍ່ພາຍນອກເປັນຈຸດເພີ່ມຂຶ້ນທີ່ບັນລຸເຖິງວິສາຫະກິດຫັນຮູບແບບ ແລະ ຂຶ້ນຊັ້ນຂອງວິສາຫະກິດ,ຈະພະຍາຍາມຍາດເອົາການສະໜັບສະໜູນທາງນະໂຍບາຍຂອງ“ກອງທຶນທາງສາຍໄໝ”ແລະ“ທະນາຄານການລົງທຶນອາຊີ”,ພະຍາຍາມເຂົ້າຮ່ວມການກໍ່ສ້າງໂຄງລ່າງພື້ນຖານທຸກປະເພດເຊັ່ນ:ທາງລົດໄຟທຸກຊະນິດ,ທາງດ່ວນທຸກຊະນິດ,ທາງລະດັບຊັ້ນສູງ,ທໍ່ພະລັງງານ ແລະ ພັດທະນາຊົນລະປະທານ ແລະ ໄຟຟ້ານ້ຳຕົກເປັນຕົ້ນ.

ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານໄດ້ເຂົ້າສູ່ຕະຫລາດຕ່າງປະເທດຈາກປີ 1983 ເປັນເວລາ 30 ກວ່າປີເປັນຕົ້ນມາ,ໄດ້ປະຕິບັດຍຸດທະສາດອອກໄປນອກຢ່າງໝຽວແໜ້ນໂດຍບໍ່ຫວັ່ນໄຫວຄອນແຄນ,ໄດ້ແບກຫາບພາລະກິດເວທີຍຸດທະສາດໃນການຮ່ວມມືກັນກັບແຂວງຢູນນານຈົນເຖິງປະເທດຈີນກັບປະເທດ GMS ,ໂດຍຜ່ານການຮັບເໝົາໂຄງການ ແລະ ຮູບການພັດທະນາຊຸກດັນການລົງທຶນທັງສອງຮອບ,ຈິດສຳນຶກການຮ່ວມມື“ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ພັດທະນາພ້ອມກັນ”,ແນວຄວາມຄິດດຳເນີນທຸລະກິດ “ກຳນົດຖານະສູງ,ຜະລິດຕະພັນສູງ,ດຳເນີນທຸລະກິດລະດັບສູງ”,ຍີ່ຫໍ້ທີ່ມີຊື່ສຽງທີ່ດີເດັ່ນ,ໄດ້ເປີດຕະຫລາດຢູ່ຕ່າງປະເທດ.ພະແນກວິສະວະກຳກໍ່ສ້າງສາກົນກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານເປັນກອງບຸກໜ້າ ແລະ ຖານທີ່ໝັ້ນແນວໜ້າດ້ານຍຸດທະສາດ“ອອກໄປນອກ”ຂອງກຸ່ມບໍລິສັດ,ໄດ້ຍຶດໝັ້ນຈິດໃຈວິສາຫະກິດກ້າແບກຫາບພາລະໜ້າທີ່ໜັກໜ່ວງ ແລະ“ສະແດງບົດບາດເປັນດາບຂອງນັກຮົບ”ຂອງກອງທັບເຫຼັກພູພຽງ,ເປັນຜູ້ຕາງໜ້າຂອງກຸ່ມບໍລິສັດຕັ້ງໜ້າດຳເນີນການທຸລະກິດທຸກປະເພດ ແລະ ວຽກງານຄຸ້ມຄອງຂອງໂຄງການຢູ່ຕະຫຼາດຕ່າງປະເທດ.ໄດ້ມີບົດບາດສຳຄັນຄື “ກໍ່ດິນຈີ່ເຕີມດິນຂໍ ”ທາງດ້ານຍຸດທະສາດ“ອອກໄປນອກ” ທີ່ເປັນລະບົບໜຶ່ງຂອງກຸ່ມບໍລິສັດ.

ປັດຈຸບັນນີ້,ພະແນກວິສະວະກຳກໍ່ສ້າງຕ່າງປະເທດຂອງກຸ່ມບໍລິສັດໄດ້ລົງນາມເຊັນສັນຍາການກໍ່ສ້າງເປັນຈຳນວນ 7,5 ຕື້ຢວນ,ມີກິດຈະການທົ່ວເຖິງຢູ່ປະເທດລາວ,ກຳປູເຈຍ,ມຽນມາ,ໄທ,ອີລັກ,ມານດີບ, ໂມຣິດ,ກີເນເອກົວເຕີ,ອູການດາ,ເຢແມນ,ອາຟຼິກາໃຕ້ເປັນຕົ້ນ 10 ກວ່າປະເທດ.ກຸ່ມບໍລິສັດໄດ້ຮັບອັນດັບ 250 ບໍລິສັດເຂັ້ມແຂງແຫ່ງການຮັບເໝົາກໍ່ສ້າງສາກົນໃນທົ່ວໂລກທີ່ວາລະສານບັນທຶກຂ່າວສານວິສະວະກຳ(ENR)ຂອງອາເມລິກາ,ເປັນ 100 ບໍລິສັດອ້ານຊາດຂອງຈີນ,ເປັນທົ່ວແຖວແຫ່ງການກໍ່ສ້າງທີ່ແຂວງຢູນນານປະຕິບັດນະໂຍບາຍ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”.

# ທິວທັດຕາມກຳແພງເມືອງຈີນ

## 长城沿线的风景

长城，一条在崇山峻岭之间蜿蜒回旋、绵亘万里的东方巨龙，凝聚着先人的力量与智慧。这条巨龙的身上，凝聚着中华儿女的优秀品质，长城是中国的文化符号，也是中华民族的精神图腾。

据统计，中国历代长城的总长度，已经达到了 21196.18 公里，在绵延万里的长城伟岸的身躯两旁，许许多多地方有着别样的风景，等待着我们去欣赏。

ກຳແພງເມືອງຈີນເໝືອນດັ່ງມັງກອນຕາເວັນຕົກ ໂຕໃຫຍ່ພິເສດທີ່ຢຽດຍາວເປັນໄລຍະໝື່ນກິໂລແມັດລະຫວ່າງພູຜາອັນສູງຊັນ,ໄດ້ລວມສູນແຮງງານ ແລະ ສະຕິປັນຍາຂອງບັນພະບຸລຸດຈີນ.ໃນມັງກອນໃຫຍ່ພິເສດນີ້, ໄດ້ເຕົ້າໂຮມຄຸນສົມບັດພິເສດຂອງລູກຫຼານປະຊາຊາດຈີນ,ກຳແພງເມືອງຈີນແມ່ນສັນຍາລັກຂອງວັດທະນະທຳຈີນ,ກໍເປັນເຄື່ອງໝາຍບູຊາສຳລັບປະຊາຊາດຈີນ.

ຕາມສະຖິຕິ,ໄລຍະຍາວທັງໝົດຂອງກຳແພງເມືອງຈີນໃນລາຊະວົງຕ່າງໆຂອງຈີນ,ລວມເຖິງ 21196,18 ກິໂລແມັດ,ຢູ່ຕາມສອງເບື້ອງຂອງກຳແພງເມືອງຈີນທີ່ຍາວຢຽດໝື່ນກິໂລແມັດນັ້ນ,ມີທິວທັດສີສັນພິເສດຢ່າງຫຼວງຫຼາຍ,ຄອຍຖ້າຄົນເຮົາໄປທ່ຽວຊົມ.

ກຳແພງເມືອງຈີນຕອນຫູສ່ານ: ຈຸດເລີ່ມຕົ້ນ

ກຳແພງເມືອງຈີນຕັ້ງຢູ່ພາກເໜືອຂອງຈີນ,ຢຽດເນັ່ງຈາກຕາເວັນອອກໄປສູ່ຕາເວັນຕົກ,ຖ້າວ່າຊົມທິວທັດແບບຕ່າງກັນຕາມກຳແພງເມືອງຈີນ,ກໍ່ຕ້ອງເດີນທາງຈາກຈຸດເລີ່ມຕົ້ນ,ສຸມສາຍຕາໃສ່ເມືອງຕ່ານຕົ່ງແຂວງລຽວນິງທີ່ຢູ່ພາກຕາເວັນອອກສຽງເໜືອຂອງຈີນ.ໃນຊຸມປີມານີ້,ຫຼັງຈາກການຄົ້ນຄວ້າ ແລະ ການຂຸດຄົ້ນຂອງນັກຄົ້ນຄວ້າບູຮານນະຄະດີຢ່າງຫຼວງຫຼາຍ,ໄດ້



ຕົວເມືອງດ່ານເຈຍອີກວນ
嘉峪关关城　新华社　图



ພິສູດວ່າບ່ອນນີ້ເຄີຍເປັນຈຸດເລີ່ມຂອງກຳແພງເມືອງຈີນ,ເມືອງນ້ອຍເຂດຊາຍແດນແຫ່ງນີ້ກໍ່ໄດ້ມີສະເໜ່ດ້ານວັດທະນະທຳຫຼາຍກວ່າເກົ່າເນື່ອງຈາກກຳແພງເມືອງຈີນ.

ກຳແພງເມືອງຈີນຕອນຫູສ່ານຕັ້ງຢູ່ແຄມແມ່ນ້ຳຢາລຸ້ຍຈ່ຽງທີ່ຈາກເມືອງຕ່ານຕົ່ງໄປທິດຕາເວັນອອກ 15 ກິໂລແມັດ,ສ້າງຂຶ້ນໃນສະໄໝວ່ານລີ້ລາຊະວົງໝິງ,ເປັນຈຸດເລີ່ມທາງຕາເວັນອອກຂອງກຳແພງເມືອງຈີນໃນລາຊະວົງໝິງ.ເຊິ່ງຈຸດເລີ່ມທາງຕາເວັນອອກຂອງກຳແພງເມືອງຈີນລາຊະວົງໝິງຕອນນີ້ໄດ້ຈັດໃຫ້ມີໂຄງການປະຕິສັງຂອນຂະໜາດໃຫຍ່ໃນປີ 2010.ປະຈຸບັນ,ໄດ້ຟື້ນຟູກຳແພງອ້າມຖະໜົນ,ປ້ອມຍາມ,ສາງສະສົມ,ແທ່ນສູ້ຮົບ,ແທ່ນພົ້ນອອກຈາກເບື້ອງນອກກຳແພງ ແລະ ອື່ນໆລວມ 12 ບ່ອນ,ເຊິ່ງໄດ້ຟື້ນຟູສະພາບຄວາມສະຫງ່າງາມຂອງຈຸດເລີ່ມກຳແພງເມືອງຈີນໃນລາຊະວົງໝິງ.ກຳແພງເມືອງຈີນຕອນນີ້ຫຼັງການປະຕິສັງຂອນແລ້ວໄດ້ຢຽດເນັ່ງໄປທິດເໜືອຕາມສັນພູ,ຢູ່ໃກ້ກັບເທດສະບານເມືອງຕ່ານຕົ່ງ,ກັບ ສປປ ເກົາຫຼີຢູ່ຜູ້ລະຟາກຝັ່ງທີ່ມີແມ່ນ້ຳຂັ້ນໄວ້.ຢູ່ແຫ່ງນີ້ມີພູຜາແມ່ນ້ຳທີ່ສະຫງ່າງາມ,ດິນຟ້າອາກາດທີ່ອອນຊອນ,ແລະ ທິວທັດທຳມະຊາດທີ່ສວຍສົດງົດງາມ.

ກຳແພງເມືອງຈີນຕອນນີວວ່ານ: ບ່ອນເຊື່ອມຈອດກັນລະຫວ່າງກຳແພງເມືອງຈີນກັບແມ່ນ້ຳເຫຼືອງ

ເດີນຕາມຮ່ອງຮອຍຂອງກຳແພງເມືອງຈີນໄປທິດຕາເວັນຕົກ,ຮອດສະຖານທີ່ທີ່ແມ່ນ້ຳເຫຼືອງເຂົ້າສູ່ແຂວງສ່ານຊີ່,ຄືເມືອງພ່ຽນກ່ວນແຂວງສ່ານຊີ່.ຢູ່ເມືອງແຫ່ງນີ້ມີບ້ານໜຶ່ງຊື່ບ້ານລາວນີວວ່ານ,ເຊິ່ງເປັນບ້ານບໍ່ໃຫຍ່



ຕານຕົ່ງຫນຽວນິງ,ກຳແພງເມືອງຮູຊານ
辽宁丹东，虎山长城　CFP　图

ປານໃດ,ແຕ່ຫາກແມ່ນບ່ອນເຊື່ອມຈອດກັນລະຫວ່າງກຳແພງເມືອງຈີນກັບແມ່ນ້ຳເຫຼືອງທີ່ເປັນສັນຍາລັກທີ່ສຳຄັນຂອງປະຊາຊາດຈີນ.

ອອກຈາກເທດສະບານເມືອງ,ຜ່ານຊອດກຸ່ມບ້ານໃຫຍ່ນ້ອຍ,ໄປທາງທິດເໜືອກໍ່ໄປຮອດແຄມຝັ່ງແມ່ນ້ຳເຫຼືອງ,ກໍ່ໄດ້ຮອດເມືອງນ້ອຍວ້ານເຈ່ຍໄຈ້ທີ່ຢູ່ແຄມຝັ່ງແມ່ນ້ຳເຫຼືອງ.ບ່ອນນີ້ກໍ່ເປັນສະຖານທີ່ໂຄງການຊົນລະປະທານວ້ານເຈ່ຍໄຈ້ທີ່ເປັນໜຶ່ງໃນໂຄງການຊົນລະປະທານຈຳນວນຫຼວງຫຼາຍຕາມລຳແມ່ນ້ຳເຫຼືອງ,ໃນເວລາເດີນທາງຈະໄດ້ຊົມວິວໂຄງການຊົນລະປະທານວ້ານເຈ່ຍໄຈ້ທີ່ສະຫງ່າງາມ; ຢູ່ແຫ່ງນີ້ສາມາດຂີ່ເຮືອຂຶ້ນໄປໂດຍກົງກັນຂ້າມກັບກະແສຄື້ນ,ສຳຜັດກັບຄວາມຮູ້ສຶກທີ່ເດີນເຮືອໂດຍກົງກັນຂ້າມກັບກະແສຄື້ນນ້ຳຢູ່ເທິງແມ່ນ້ຳເຫຼືອງ.

ຫຼັງຈາກຂຶ້ນບົກແລ້ວແນມໄປຈອມພູ,ຈະໄດ້ເຫັນປະພາຄານຕ່າງໆຕັ້ງຢູ່ໃນເຂດພູດອຍທີ່ສະຫຼັບຊັບຊ້ອນດ້ວຍສີເຫຼືອງ ແລະ ສີຂຽວ,ຍັງສາມາດຊອກເຫັນໄດ້ກຳແພງເປັນຕອນໆ,ນີ້ກໍ່ແມ່ນກຳແພງເມືອງຈີນທີ່ຕັ້ງຢູ່ພູພຽງດິນເຫຼືອງ.ຢູ່ທີ່ນີ້,ກຳແພງເມືອງຈີນແມ່ນກໍ່ຂຶ້ນດ້ວຍວັດສະດຸຈາກດິນແດນແຜ່ນດິນ,ປ້ອມຍາມທຸກຫຼັງ ແລະ ກຳ



ກຳແພງເມືອງຈຽນເຄີ
箭扣长城 CFP 图

ແພງທຸກຕອນແມ່ນກໍ່ດ້ວຍດິນເຫຼືອງ,ໃນຍາມປົກກະຕິ, ກຳແພງເມືອງຈີນກັບພູພຽງດິນເຫຼືອງມີສີສັນເຊື່ອມໂຍງເຂົ້າກັນ,ເຮັດໃຫ້ຄົນຈຳແນກອອກບໍ່ໄດ້,ມີແຕ່ຮອດລະດູຮ້ອນທີ່ມີພືດສີຂຽວຢູ່ເທິງພູຜາແລ້ວຈຶ່ງຈະໄດ້ຈຳແນກເຫັນພາບແທ້ຂອງກຳແພງເມືອງຈີນ.

ກຳແພງເມືອງຈີນຕອນຈ້ຽນໂຄ້ວ:ທະນູສອນຢູ່ເທິງພູສູງສັນ

ກຳແພງເມືອງຈີນຍາວຢຽດເຖິງໝື່ນກິໂລແມັດ, ຢູ່ບາງຕອນມີຄວາມສູງຊັນ,ບາງຕອນມີຄວາມສະຫງ່າງາມ.ຖ້າເວົ້າເຖິງຄວາມສູງຊັນແລ້ວ,ກໍ່ຕ້ອງເວົ້າເຖິງກຳແພງເມືອງຈີນຕອນຈ້ຽນໂຄ້ວທີ່ຢູ່ຕາແສງປ່າຕ້າວເຫີ ທາງພາກຕາເວັນຕົກສຽງເໜືອຂອງເຂດຫວຍໂຮວທີ່ຊານເມືອງປັກກິ່ງ.ມາທ່ຽວຊົມຢູ່ແຫ່ງນີ້,ບໍ່ພຽງແຕ່ເປັນການທົດສອບທາງຮ່າງກາຍໃນການປີນຂຶ້ນກຳແພງຕອນສູງຊັນທີ່ສຸດ,ຍັງຈະໄດ້ຊົມທິວທັດທີ່ມີສີສັນພິເສດ, ເຊິ່ງເປັນຄວາມຮູ້ສຶກອີກຊະນິດໜຶ່ງ.

ກຳແພງເມືອງຈີນດ່ານເຈ່ຍອີ້ກ່ວນ: ໄຂ່ມຸກໜ່ວຍໜຶ່ງໃນເສັ້ນທາງສາຍໄໝ

ດ່ານເຈ່ຍອີ້ກ່ວນ,ແມ່ນບ່ອນສຸດທ້າຍຂອງກຳແພງເມືອງຈີນ.

ເມື່ອຂຶ້ນສູ່ກຳແພງດ່ານເຈ່ຍອີ້ກ່ວນ,ເບິ່ງໄປທາງລຸ່ມແລ້ວ,ຈະໄດ້ເຫັນທິວທັດໃນທົ່ວຕົວເມືອງ;ແນມເບິ່ງໄປທາງໄກ,ກໍ່ຈະໄດ້ເຫັນທະເລຊາຍທີ່ສຸດສາຍຕາ ແລະສາຍພູຊີລຽນທີ່ຍາວຢຽດ.ເມື່ອເດີນທາງຮອດບ່ອນນີ້,ຈະໄດ້ເຫັນກຳແພງເມືອງຈີນຜ່ານຂອດທະເລຊາຍ ແລະດິນແດນຮົກເຮື້ອ,ທົນທານຕໍ່ການເຊາະຊຶມຂອງພາຍຸລົມແດງຫາກຍັງຄົງຕົວບໍ່ໄດ້ກໍຈະຫັກພັງລົງ.ຢູ່ແຫ່ງນີ້,ກຳແພງເມືອງຈີນໄດ້ເຊື່ອມໂຍງກັບສະພາບແວດລ້ອມ,ຮ່ວມກັນກາຍເປັນທິວທັດແບບພິເສດໃນດິນແດນແຜ່ນນີ້.





文/楚 然

# ມະຫາວິທະຍາໄລນົດຕິງຮາມນິງໂປ

## 宁波诺丁汉大学

宁波诺丁汉大学是经中国教育部批准，由英国诺丁汉大学与浙江万里学院合作创办，在中国设立的第一家引进世界一流大学优质教学资源、具有独立法人资格和独立校区的中外合作大学。学校由中国科学院院士、前复旦大学校长杨福家教授担任校长，尼可迈尔斯教授担任执行校长。根据泰晤士高等教育以及上海交通大学公布的权威排行榜，诺丁汉大学位列世界高校百强。

ມະຫາວິທະຍາໄລນົດຕິງຮາມນິງໂປ່ແມ່ນສ້າງຕັ້ງຂຶ້ນໂດຍໄດ້ຮັບການອະນຸມັດຈາກກະຊວງສຶກສາທິການຈີນ,ມະຫາວິທະຍາໄລນົດຕິງຮາມຂອງອັງກິດ ແລະ ສະຖາບັນວ້ານລີແຂວງເຈີ້ຈ່ຽງຮ່ວມມືສ້າງຂຶ້ນ,ແມ່ນມະຫາວິທະຍາໄລແຫ່ງທຳອິດຂອງຈີນທີ່ນຳເຂົ້າຊັບພະຍາກອນການສຶກສາທີ່ມີຄຸນນະພາບດີເດັ່ນຈາກມະຫາວິທະຍາໄລອັນດັບສູງຂອງໂລກ,ມີຄຸນວຸດທິເປັນນິຕິບຸກຄົນອິດສະຫຼະ ແລະ ເຂດໂຮງຮຽນອິດສະຫຼະ.ມະຫາວິທະຍາໄລນົດຕິງຮາມນິງໂປ່ມີທ່ານສາສະດາຈານຢາງຟູເຈ່ຍ,ບັນດິດສະພາບັນດິດວິທະຍາສາດຈີນ,ອະດີດອະທິການບໍດີມະຫາວິທະຍາໄລຟູຕານເປັນອະທິການບໍດີ,ທ່ານສາສະດາຈານນິກ ໄມສ ເປັນອະທິການບໍດີບໍລິຫານງານ.ອີງຕາມການລຽນລຳດັບທີ່ປະກາດໂດຍວາລະສານສຶກສາຊັ້ນສູງໄທມ໌ສ໌ ແລະ ມະຫາວິທະຍາໄລຄົມມະນາຄົມຊຽງໄຮ,ມະຫາວິທະຍາໄລນົດຕິງຮາມຢູ່ໃນ 100 ໂຮງຮຽນຊັ້ນສູງທີ່ເຂັ້ມແຂງຂອງໂລກ.

